# ຂີດຄວາມສາມາດໃນການຟື້ນຕົວຂອງຊາວກະສິກອນ
# ບ້ານໃໝ່ນາກອກ, ເມືອງຊານໄຊ, ແຂວງອັດຕະປື.

## Adaptive Capacity of Villagers in Nakok Village, Sanxay District, Attapue Province

ບົດໂຄງການຈົບຊັ້ນລະດັບປະລິນຍາຕີ

ສາຂາ: ການຈັດການສິ່ງແວດລ້ອມ

ນ. ທົງຄຳ ຈັນປະເສີດ

ນ. ມະຍຸລີ ດວງດີ

ນ. ພອນປະເສີດ ຜາພູເງິນ

ຄະນະວິທະຍາສາດສິ່ງແວດລ້ອມ

ມະຫາວິທະຍາໄລແຫ່ງຊາດ

ນະຄອນຫຼວງວຽງຈັນ, 2010

# ຂີດຄວາມສາມາດໃນການຟື້ນຕົວຂອງຊາວກະສິກອນ
# ບ້ານໃໝ່ນາກອກ, ເມືອງຊານໄຊ, ແຂວງອັດຕະປື.

Adaptive Capacity of Villagers in Nakok Village, Sanxay District, Attapue Province

ບົດໂຄງການຈົບຊັ້ນລະດັບປະລິນຍາຕີ
ສາຂາ: ການຈັດການສິ່ງແວດລ້ອມ


ຜູ້ສະເໜີ: ນ. ທອງຄຳ ຈັນປະເສີດ
ນ. ມະຍຸລີ ດວງດີ
ນ. ພອນປະເສີດ ຜາພູເງິນ

ອາຈານທີ່ປຶກສາ: ອຈ. ແບ້ ເພຍໄຊ
ທີ່ປຶກສາຮ່ວມ: ທ່ານ. ພຸດທະສິນ ພິມມະຈັນ


ກຳມະການກວດຜ່ານ: ອຈ. .......................... ..................................

ຄະນະກຳມະການປ້ອງກັນບົດ: ອຈ. ......................... ..................................
ອຈ. ......................... ..................................
ອຈ. ......................... ..................................


ຄະນະວິທະຍາສາດສິ່ງແວດລ້ອມ
ມະຫາວິທະຍາໄລແຫ່ງຊາດ
ນະຄອນຫຼວງວຽງຈັນ, 2010

# ຄຳນຳ

ບົດໂຄງການຈົບຊັ້ນຫົວນີ້ແມ່ນ ອີງໃສ່ຫຼັກສູດການສຶກສາຂໍ້ກຳນົດຂອງ ມະຫາວິທະຍາໄລແຫ່ງຊາດ, ເຊິ່ງໄດ້ຜ່ານການເກັບກຳຂໍ້ມູນ ຈາກເອກະສານຕ່າງໆທີ່ກ່ຽວຂ້ອງທັງພາກຫ້ອງການ ແລະ ພາກສະໜາມຕົວຈິງ ໂດຍທີມງານນັກສຶກສາປີທີ 5 ລຸ້ນທີ 3 ຂອງຄະນະວິທະຍາສາດສິ່ງແວດລ້ອມ. ທາງທີມງານໄດ້ຄັດເລືອກເອົາຫົວຂໍ້: ຂີດຄວາມສາມາດໃນການຟື້ນຕົວຂອງຊາວກະສິກອນ ບ້ານໃໝ່ນາກອກ, ເມືອງຊານໄຊ, ແຂວງອັດຕະປື.

ຈຸດປະສົງ ເພື່ອສຶກສາເຫດການທີ່ບໍ່ຄາດຄິດ ທີ່ເກີດຂື້ນ (Shocks) ແລະ ສຶກສາຂີດຄວາມສາມາດໃນການຟື້ນຕົວ(ຍຸດທະສາດໃນການຢູ່ລອດ)ຂອງຊາວກະສິກອນ

ພາຍຫຼັງທີ່ໄດ້ຮັບຜົນກະທົບຕໍ່ເຫດການທີ່ບໍ່ຄາດຄິດ(Shock) ໂດຍສະເພາະແມ່ນບັນຫາສິ່ງແວດລ້ອມ, ເສດຖະກິດ ແລະ ການເມືອງທີ່ຜ່ານມາ. ພວກຂ້າພະເຈົ້າທັງ3ຄົນໄດ້ມີການເກັບກຳ ແລະ ທ້ອນໂຮມເອົາຂໍ້ມູນກ່ຽວກັບເຫດການຕ່າງໆ, ຂໍ້ມູນທາງດ້ານຜົນກະທົບ ແລະ ການຊ່ວຍເຫຼືອຈາກພາກສ່ວນຕ່າງໆ ທັງຂໍ້ມູນຂັ້ນແຂວງ, ເມືອງ ແລະ ບ້ານ. ຈາກນັ້ນໄດ້ມີການສັງລວມ, ການຮຽບຮຽງ ແລະ ໄດ້ຜ່ານການວິເຄາະຄົບຖ້ວນສົມບູນແລ້ວ.

ພວກຂ້າພະເຈົ້າຄິດວ່າ ບົດລາຍງານສະບັບນີ້ ຈະເປັນຂໍ້ມູນພື້ນຖານທີ່ດີໃຫ້ແກ່ຜູ້ທີ່ມີຄວາມສົນໃຈຢາກອ່ານ ແລະ ຜູ້ທີ່ຈະສຶກສາໃນຄັ້ງຕໍ່ໄປ. ການຂຽນບົດຄັ້ງນີ້ອາດມີສິ່ງທີ່ຂາດຕົກບົກຜ່ອງທາງດ້ານເນື້ອໃນ ແລະ ວິທີການສຶກສາ, ສະນັ້ນພວກຂ້າພະເຈົ້າຈຶ່ງຂໍອະໄພມາຍັງນະທີ່ນີ້ດ້ວຍ ແລະ ຫວັງວ່າຈະໄດ້ຮັບຄຳຕິຊົມ ຈາກບັນດາທ່ານ ເພື່ອເປັນການຖອດຖອນບົດຮຽນໄວ້ເປັນປະສົບການໃນການສຶກສາຄັ້ງຕໍ່ໄປໃຫ້ຄົບຖ້ວນສົມບູນ.

# ຄຳຂອບໃຈ

ຕະຫຼອດໄລຍະການສຶກສາຮ່ຳຮຽນຢູ່ທີ່ ມະຫາວິທະຍາໄລແຫ່ງຊາດ, ຄະນະວິທະຍາສາດສິ່ງແວດລ້ອມ ຈົນເຖິງການລົງຝຶກງານທ້າຍການສຶກສາທີ່ໂຄງການສົ່ງເສີມກະສິກຳ, ກອງສົ່ງເສີມກະສິກຳ ແລະ ປ່າໄມ້ແຫ່ງຊາດ ພວກຂ້າພະເຈົ້າຂໍສະແດງຄວາມຮູ້ບຸນຄຸນເປັນຢ່າງສູງມາຍັງບັນດາຄູອາຈານ ແລະ ນັກວິຊາການທຸກຄົນທີ່ໄດ້ທຸ້ມເທເອົາໃຈໃສ່ຖ່າຍທອດຄວາມຮູ້ ແລະ ໃຫ້ຄຳແນະນຳທີ່ດີ, ຊ່ວຍເຫຼືອພວກຂ້າພະເຈົ້າໃນທຸກໆດ້ານຈົນສຳເລັດການສຶກສາ.

ຂໍຂອບໃຈທ່ານ ຄະນະບໍດີຄະນະສິ່ງແວດລ້ອມ, ພ້ອມດ້ວຍຄູອາຈານທຸກໆທ່ານທີ່ໄດ້ຖ່າຍທອດຄວາມຮູ້ ແລະ ໄດ້ເອົາໃຈໃສ່ສິດສອນພວກຂ້າພະເຈົ້າ ຕະຫຼອດມາຈົນສຳເລັດການສຶກສາ.

ຂໍຂອບໃຈ ອາຈານ ແບ້ ເພຍໄຊ ເຊິ່ງເປັນອາຈານທີ່ປຶກສາຊີ້ນຳຕົວຈິງໃນການຂຽນບົດຄັ້ງນີ້ເຊິ່ງທ່ານໄດ້ສະຫຼະເວລາ ເພື່ອໃຫ້ຄຳແນະນຳໃນທຸກໆດ້ານ ໃນການຂຽນບົດລາຍງານ ແລະ ກວດແກ້ບົດລາຍງານໃຫ້ສຳເລັດ.

ຂໍຂອບໃຈ ທ່ານ ສົມໄຊ ສີຊານົນ ຫົວໜ້າໂຄງການສົ່ງເສີມກຳສິກຳ, ທ່ານ Andrew Barttett ຫົວໜ້າຊ່ຽວຊານສົ່ງເສີມກະສິກຳ, ທ່ານ ພຸດທະສົນ ພົມມະຈັນ ຜູ້ຊ່ວຍດ້ານການຄຸ້ມຄອງຂໍ້ມູນຂ່າວສານໂຄງການ ທັງເປັນຜູ້ຊີ້ນຳການລົງຝຶກງານຢ່າງໃກ້ສິດ ແລະ ທີມງານໂຄງການທຸກໆທ່ານທີ່ໄດ້ໃຫ້ຄຳແນະນຳ ແລະ ຊ່ວຍເຫຼືອດ້ານວິຊາການ, ຄວາມສະດວກ ແລະ ຂໍຂອບໃຈໂຄງການສົ່ງເສີມກະສິກຳ ທີ່ໃຫ້ການຊ່ວຍເຫຼືອດ້ານການເງິນໃນການສຶກສາຄັ້ງນີ້.

ຂໍສະແດງຄວາມຮູ້ບຸນຄຸນ ເຖິງການນຳຂອງກອງສົ່ງເສີມກະສິກຳ ແລະ ປ່າໄມ້ແຫ່ງຊາດ ແລະ ພະນັກງານອ້າຍເອື້ອຍທຸກໆທ່ານທີ່ໄດ້ໃຫ້ຄຳຊີ້ແນະ ແລະ ຊ່ວຍໃນການສະໜອງຂໍ້ມູນໃນການສຶກສາຄັ້ງນີ້ດ້ວຍດີຕະຫຼອດມາ.

ຂໍສະແດງຄວາມຂອບໃຈມາຍັງອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງສາກົນ, ບັນດາໂຄງການທີ່ຂຶ້ນກັບລັດຖະບານ ແລະ ບໍ່ຂຶ້ນກັບລັດຖະບານ, ບັນດາສູນ, ສະຖານີ ແລະ ພາກສ່ວນອື່ນໆທີ່ໄດ້ໃຫ້ຄຳແນະນຳ ແລະໃຫ້ຂໍ້ມູນຕ່າງໆແກ່ພວກຂ້າພະເຈົ້າ.

ຂໍຂອບໃຈພໍ່, ແມ່, ອ້າຍ, ເອື້ອຍນ້ອງທຸກທ່ານທີ່ໄດ້ໃຫ້ການສິດສອນ, ສະໜັບສະໜູນ ແລະໃຫ້ກຳລັງໃຈ ແລະ ຂໍຂອບໃຈມາຍັງໝູ່ເພື່ອນທີ່ໄດ້ໃຫ້ຄຳປຶກສາ,ແນະນຳ ແລະຊ່ວຍເຫຼືອຕະຫຼອດມາ.

ໃນໂອກາດສຸດທ້າຍນີ້ ພວກຂ້າພະເຈົ້າຂໍອວຍພອນໃຫ້ແກ່ບັນດາທຸກໆທ່ານຈົ່ງມີແຕ່ຄວາມສຸກຄວາມຈະເລີນ, ຈົ່ງປະສົບຜົນສຳເລັດໃນໜ້າທີ່ການງານຂອງທ່ານທຸກໆປະການ.

(ຂໍຂອບໃຈ)

# ບົດຄັດຫຍໍ້

ສ ປ ປ ລາວເປັນປະເທດໜຶ່ງທີ່ຍຶດຖືການກະສິກຳເປັນພື້ນຖານຫຼັກ ໃນການດຳລົງຊີວິດຂອງປະຊາກອນລາວ, ໃນ 67 ສ່ວນຮ້ອຍຂອງທຸກຄົວເຮືອນ ແມ່ນອາໄສການຜະລິດກະສິກຳໃນການບໍລິໂພກສະບຽງອາຫານ. ການອີງໃສ່ການຜະລິດກະສິກຳເປັນຕົ້ນຕໍນີ້ ໄດ້ເຮັດໃຫ້ປະຊາກອນລາວສ່ວນຫຼາຍໄດ້ຮັບຜົນກະທົບຈາກສະພາບອາກາດປ່ຽນແປງ ແລະ ເສດຖະກິດໄດ້ງ່າຍ ປະມານ 46 ສ່ວນຮ້ອຍ ຂອງປະຊາກອນທີ່ອາໄສຢູ່ໃນເຂດຊົນນະບົດ ປະເຊີນໜ້າກັບບັນຫາຄວາມບໍ່ໝັ້ນຄົງທາງດ້ານສະບຽງອາຫານ ອັນເນື່ອງມາຈາກໄພແຫ້ງແລ້ງທີ່ຮຸນແຮງ ແລະ ເຫດການທີ່ຄາດວ່າມີອັດຕາສ່ວນສູງ ໃນການສົ່ງຕໍ່ຄວາມບໍ່ໝັ້ນຄົງທາງດ້ານສະບຽງອາຫານແມ່ນໄພນ້ຳຖ້ວມ.

ເຫດການທີ່ບໍ່ຄາດຄິດ ທີ່ເກີດຂຶ້ນກັບຄອບຄົວຊາວກະສິກອນ ບໍ່ວ່າຈະເປັນດ້ານສິ່ງແວດລ້ອມເຊັ່ນ: ລົມແຮງ, ໄພນ້ຳຖ້ວມ(ພາຍຸເກດສະໜາ), ໄພແຫ້ງແລ້ງ, ນ້ຳເຊະຂະໜານເປີເປື້ອນ ແລະ ບົກແຫ້ງ ຫຼື ດ້ານເສດຖະກິດເຊັ່ນ: ການຍົກເລີກສັນຍາຮັບຊື້ສາລີ, ລາຄາສາລີຕົກຕ່ຳ ( ບໍ່ຮັບຊື້ຕາມລາຄາທີ່ຕົກລົງໄວ້), ສັດລ້ຽງເປັນພະຍາດ, ການຖືກໂກງຄ່າແຮງງານ ( ປູກຢາງພາລາ ), ດິນທຳການຜະລິດຂອງຊາວກະສິກອນ ໄດ້ຮັບຜົນກະທົບຈາກສວນຢາງພາລາ ເປັນສາເຫດເຮັດໃຫ້ລະບົບພື້ນຖານເສດຖະກິດຖືກທຳລາຍ. ເຫດການດັ່ງກ່າວທີ່ເກີດຂຶ້ນ ແລະ ຜົນກະທົບຕໍ່ກັບແຕ່ລະລະດັບຄອບຄົວແມ່ນບໍ່ຄືກັນ ຄອບຄົວຮັ່ງມີຈະໄດ້ຮັບຜົນກະທົບໜ້ອຍກວ່າຄອບຄົວປານກາງ ແລະ ຄອບຄົວຂາດເຂີນ.

ຂີດຄວາມສາມາດໃນການຟື້ນຕົວຂອງແຕ່ລະລະດັບຄອບຄົວກໍມີຄວາມແຕກຕ່າງກັນ ຍ້ອນປັດໄຈທີ່ຊ່ວຍສ້າງຂີດຄວາມສາມາດໃນການຟື້ນຕົວຕ່າງກັນ. ດັ່ງນັ້ນ ຄອບຄົວກຸ້ມກິນຈະສາມາດຟື້ນຕົວໄດ້ດີກວ່າຄອບຄົວປານກາງ ແລະ ຄອບຄົວຂາດເຂີນ ສາມາດເວົ້າໄດ້ວ່າ ລະດັບການປັບຕົວຂອງຄອບຄົວຢູ່ໃນລະດັບຂ້ອນຂ້າງດີ ເພາະວ່າຄອບຄົວກຸ້ມກິນມີປັດໄຈໃນການຟື້ນຕົວສູງ ເປັນຕົ້ນແມ່ນທາງດ້ານອາຊີບ, ອຸປະກອນການຜະລິດ, ການຜະລິດທີ່ມີຄວາມຫຼາກຫຼາຍ, ຊັບສົມບັດ ແລະ ມີທຶນຮອນໃນການສ້າງຂີດຄວາມສາມາດໃນການຢູ່ລອດ.

ຄອບຄົວປານກາງ ມີລະດັບການປັບຕົວຢູ່ໃນລະດັບໃດໜຶ່ງເທົ່ານັ້ນ ເນື່ອງຈາກມີປັດໄຈບໍ່ຫຼາຍ ລວມໄປເຖິງຄວາມໝັ້ນຄົງຂອງອາຊີບຍັງບໍ່ຄົງທີ່. ດັ່ງນັ້ນຄອບຄົວຈຶ່ງມີລະດັບການປັບຕົວຂ້ອນຂ້າງໜ້ອຍ.

ຄອບຄົວຂາດເຂີນ ມີລະດັບການປັບຕົວທີ່ໜ້ອຍຫຼາຍ ເນື່ອງຈາກປັດໄຈທີ່ສົ່ງຜົນຕໍ່ລະບົບຊີວິດການເປັນຢູ່ມີໜ້ອຍ ແລະ ຈຸດອ່ອນຂອງຄອບຄົວມີພັດຫຼາຍ ເປັນຕົ້ນແມ່ນການຂາດຄວາມສາມັກຄີພາຍໃນຄອບຄົວ, ຂາດຄວາມກະຕືລືລົ້ນໃນການສ້າງເສດຖະກິດຄອບຄົວ, ຂາດທຶນ, ຂາດຄວາມໝັ້ນຄົງຂອງອາຊີບ ແລະ ອື່ນໆ. ດັ່ງນັ້ນຄອບຄົວຈຶ່ງມີລະດັບການປັບຕົວທີ່ໜ້ອຍ. Abstract

Lao PDR is a country that heavily depend on agricultural production in livelihood of the population in the country. 67% of household depend on agricul-tral production for their food security. This matter makes Lao population suffered from climate change and economy crisis. Al most 46% of population who live in rural area facing with insecurity of food because of severe drought and the event considered to be the high risk for food security is flood.

Unprecedented events have happened with farmers there're environment-tally eg: heavy wind ( storm ), flood ( Ketsana storm ), drought, dirty and decrease of volume of Sekhamarn river. For economy matter including canceling the con-tract to buy corn from farmers, diseases in livestock, force payment cheating from employer ( planting rubber tree ), agricultural soil of the farmers suffered from rub-ber tree fields and become the reason to destroy their economy basement. That had had happened and effected to each family is not the same. The rich family will effected lighter than medium and poor.

The possibility to rehabilitation of each level of family is different because of the factor to help to rehabilitation. There are the rich family will easier than me-dium family and poor family. The rich families they have high possibility to rehabi-litation, including vocational, production equipment multi - production, property and capital to help to rehabilitation.

Medium family has also possibility to rehabilitation but there are not so many facilities, including inconstant vocation, So this level of family have not so high possibility to rehabilitation.

For poor family has very low of possibilities to rehabilitation because the factors influenced to livelihood are not so many and they also have problems within the family .eg: lack of harmony, lack of ambitious to generate income to the family, lack of capital, lack of constant vocation and etc. From those points, this level of families have very low possibilities to rehabilitation.

# ສາລະບານ


ໜ້າ

ຄຳນຳ.......................................................................................................I

ຄຳຂອບໃຈ.................................................................................................II

ບົດຄັດຫຍໍ້..................................................................................................III

Abstract....................................................................................................IV

ສາລະບານ.................................................................................................. V

ສາລະບານຕາຕະລາງ....................................................................................VII

ສາລະບານຮູບ.............................................................................................. VIII

ອັກສອນຫຍໍ້...................................................................................................IX

ພາກທີI: ພາກສະເໜີ........................................................................................ 1

1.1. ຫຼັກການ ແລະ ເຫດຜົນ.............................................................................. 1

1.2. ຈຸດປະສົງ.................................................................................................. 2

ພາກທີII: ທົບທວນເອກະສານ.............................................................................. 3

2.1. ນິຍາມ ແລະ ຄວາມໝາຍຂອງຄຳສັບ.............................................................. 3

2.2. ທົບທວນເອກະສານ.................................................................................... 5

2.2.1. ຄວາມສ່ຽງຕໍ່ໄພພິບັດທາງທຳມະຊາດ.......................................................... 5

2.2.2. ຜົນກະທົບຈາກໄພພິບັດທາງທຳມະຊາດໃນຂົງເຂດທົ່ວປະເທດປີ 2009............ 6

2.1.3. ການສັງລວມການປະເມີນຜົນກະທົບ ແລະ ຜົນເສຍຫາຍຕໍ່ກັບຊັບພະຍາກອນກະສິກຳ ຈາກໄພທຳມະຊາດປີ 2009.................................................................... 7

2.1.4. ຄວາມສ່ຽງທາງດ້ານເສດຖະກິດຂອງ ສ ປ ປ ລາວ............................................... 8

2.1.5. ປັດໄຈທີ່ຊ່ວຍສ້າງຂີດຄວາມສາມາດໃນການຟື້ນຕົວໃຫ້ແກ່ສັງຄົມໃນຊົນນະບົດ............ 8

2.1.6. ເສັ້ນສະແດງທີ່ບັນລະຍາຍເຖິງການເຊື່ອມໂຍງຂອງແນວຄວາມຄິດຕ່າງໆ.................... 9

ພາກທີIII: ວິທີການສຶກສາ................................................................................ 10

3.1. ສະຖານທີ່ສຶກສາ........................................................................................ 10

3.2. ວິທີການ ແລະ ຂອບເຂດການສຶກສາ.............................................................. 10

3.3. ອຸປະກອນການສຶກສາ................................................................................. 11

3.4 . ແຜນວາດຂອງຂະບວນການສຶກສາ.................................................................. 12

ພາກທີIV: ຜົນໄດ້ຮັບ ແລະ ວິພາກຜົນການສຶກສາ.................................................... 13

4.1. ຜົນໄດ້ຮັບຂອງການສຶກສາ........................................................................... 13

# ສາລະບານ (ຕໍ່)

ໜ້າ

4.1.1. ທີ່ຕັ້ງ ແລະ ສະພາບລວມຂອງບ້ານ................................................................ 13
4.1.2. ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ............ 23
4.1.3. ການວິເຄາະຈຸດດີ, ຈຸດອ່ອນ, ໂອກາດ ແລະ ຄວາມສ່ຽງ........................................ 25
4.1.4. ທ່າແຮງພື້ນຖານທາງດ້ານເສດຖະກິດຂອງບ້ານ................................................... 26
4.1.5. ເຫດການທີ່ບໍ່ຄາດຄິດທີ່ເກີດຂຶ້ນພາຍໃນບ້ານ....................................................... 27
4.1.6. ກໍລະນີສຶກສາລະດັບຄອບຄົວ............................................................................ 29
1). ຄອບຄົວກຸ້ມກິນ ( ຄອບຄົວທ້າວວົງ )................................................................ 29
2).ຄອບຄົວປານກາງ ( ຄອບຄົວທ້າວຄຳເປັງ )........................................................ 33
3). ຄອບຄົວຂາດເຂີນ ( ຄອບຄົວທ້າວຈຽງ)........................................................... 38
4.2. ວິພາກຜົນການສຶກສາ........................................................................................ 43
ພາກທີV: ສະຫຼຸບ ແລະ ສະເໜີແນະ....................................................................... 49
5.1. ສະຫຼຸບ.......................................................................................................... 49
5.2. ສະເໜີແນະ...................................................................................................... 50
ເອກະສານອ້າງອີງ.................................................................................................. 52
ເອກະສານຊ້ອນທ້າຍ.............................................................................................. 53

## ສາລະບານຕາຕະລາງ

ໜ້າ


ຕາຕະລາງທີ 1: ຜົນກະທົບ ແລະ ຜົນເສຍຫາຍຕໍ່ເນື້ອທີ່ນາ........................................ 7

ຕາຕະລາງທີ 2: ຜົນກະທົບ ແລະ ຜົນເສຍຫາຍຕໍ່ເນື້ອທີ່ໄຮ່......................................... 7

ຕາຕະລາງທີ 3: ຜົນກະທົບ ແລະ ຜົນເສຍຫາຍຕໍ່ເນື້ອທີ່ພືດຊະນິດອື່ນໆ........................ 8

ຕາຕະລາງທີ 4: ຕົວລາຄາກ່ຽວກັບເຫດການທີ່ບໍ່ຄາດຄິດທີ່ເກີດຂຶ້ນ(Shocks) ແລະ ຜົນກະທົບໃນແຕ່ລະດັບຄອບຄົວ............................................................ 45

ຕາຕະລາງທີ 5: ການປຽບທຽບລະດັບການປັບຕົວຂອງແຕ່ລະລະບົບຊີວິດການເປັນຢູ່........ 46

“

# ສາລະບານຮູບ

**ໜ້າ**


ຮູບທີ 1: ແຜນວາດການຄຸ້ມຄອງດິນປ່າໄມ້ບ້ານໃໝ່ນາກອກ...................................... 13
ຮູບທີ 2: ພືດສອນຄົວພາຍໃນບ້ານ........................................................................ 15
ຮູບທີ 3: ລາຍຮັບຈາກການຕົ້ມເຫຼົ້າຂາຍຂອງປະຊາຊົນ.............................................. 16
ຮູບທີ 4: ລາຍຮັບຈາກການຂາຍສັດປ່າ................................................................... 16
ຮູບທີ 5: ໂຮງຮຽນປະຖົມບ້ານໃໝ່ນາກອກ.............................................................. 17
ຮູບທີ 6: ອຸປະກອນການສຶກສາ............................................................................ 18
ຮູບທີ 7: ການແກ້ພະ(ການເສຍເຄາະ)ຕາມຄວາມເຊື່ອຂອງຊາວບ້ານ............................ 19
ຮູບທີ 8: ການມອບຢາປິ່ນປົວພະຍາດໃຫ້ແກ່ປະຊາຊົນຈາກອົງການສຸຂະພາບບໍ່ມີເຂດແດນ 20
ຮູບທີ 9: ຄອງລະບາຍນ້ຳເສຍຢູ່ໃຈກາງໝູ່ບ້ານ......................................................... 21
ຮູບທີ10: ການເດີນທາງເຂົ້າຫາບ້ານ........................................................................ 21
ຮູບທີ11: ເສັ້ນທາງເຂົ້າຫາບ້ານ.............................................................................. 22
ຮູບທີ12: ພະນັກງານກະສິກຳລົງຈັດຕັ້ງກອງປະຊຸມເກັບຂໍ້ມູນການຈັດຕັ້ງກຸ່ມກະສິກຳຂອງບ້ານ...................................................................................................... 23
ຮູບທີ13: ຊັບພະຍາກອນປ່າໄມ້ພາຍໃນບ້ານ............................................................ 24
ຮູບທີ14: ຄອບຄົວກຸ້ມກິນ..................................................................................... 28
ຮູບທີ15: ຄອບຄົວປານກາງ.................................................................................. 28
ຮູບທີ16: ການສຳໃຫ້ສຳພາດຂອງຄອບຄົວຂາດເຂີນ.................................................. 29
ຮູບທີ17: ໄພແຫ້ງແລ້ງ ຝົນບໍ່ຕົກຕາມລະດູການ ປະຊາຊົນບໍ່ສາມາດປູກເຂົ້າໄດ້................ 33
ຮູບທີ18: ດິນປຸກສ້າງໂຢດ(ເຈື່ອນ)......................................................................... 38

# ອັກສອນຫຍໍ້

**ພາສາລາວ**

| | | |
|---|---|---|
| ສ.ປ.ປ.ລາວ | = | ສາທາລະນະ ປະຊາທິປະໄຕ ປະຊາຊົນລາວ |
| % | = | ສ່ວນຮ້ອຍ |
| / | = | ຕໍ່ |
| ຈ/ນ | = | ຈຳນວນ |
| ລ/ດ | = | ລຳດັບ |
| ຫຄພຊ | = | ຫ້ອງການຄຸ້ມຄອງໄພພິບັດແຫ່ງຊາດ |
| ສສ | = | ສາທາລະນະລັດ ສັງຄົມນິຍົມ |
| ຮສສ | = | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ |
| ຄລບ | = | ຄະນະເລຂາທິການລັດຖະບານ |
| ຄພຊ | = | ຄຸ້ມຄອງໄພພິບັດແຫ່ງຊາດ |
| ສປຊ | = | ສະຫະປາຊາຊາດ |

**ພາສາຕ່າງປະເທດ**

| | | |
|---|---|---|
| UNDP | = | United Nation Development Programme |
| LEAP | = | Laos Extension Agriculture project |
| FAO | = | Food and Agriculture Organization |

# ພາກທີ I

# ພາກສະເໜີ

## 1.1. ຫຼັກການ ແລະ ເຫດຜົນ

ທຸກໆປະເທດໃນໂລກ ແມ່ນໄດ້ປະເຊີນກັບບັນຫາຫຼາຍໆດ້ານ ບໍ່ວ່າຈະເປັນບັນຫາສິ່ງແວດລ້ອມ, ເສດຖະກິດ-ສັງຄົມ, ບັນຫາການເມືອງ. ທີ່ສົ່ງຜົນໃຫ້ແກ່ຊີວິດການເປັນຢູ່ຂອງປະຊາຊົນມີການປ່ຽນແປງ. ເພື່ອຄວາມຢູ່ລອດໃນສັງຄົມປະຊາຊົນເຮົາຈຶ່ງຈຳເປັນຕ້ອງມີການປັບຕົວເຂົ້າກັບສະພາບຄວາມເປັນຈິງໃນປັດຈຸບັນ.

ປັດຈຸບັນບັນຫາສິ່ງແວດລ້ອມນັບວ່າເປັນບັນຫາໜຶ່ງທີ່ເຄັ່ງຮ້ອນ ແລະ ຮີບດ່ວນເຊິ່ງສະແດງອອກ ທາງດ້ານໄພພິບັດທາງທຳມະຊາດ ນັບມື້ນັບທະວີຄູນຄວາມຮຸນແຮງ ແລະ ຂະຫຍາຍຕົວອອກໄປໃນທຸກຂົງເຂດການດຳລົງຊີວິດ ກໍ່ໃຫ້ເກີດຜົນເສຍແກ່ສັງຄົມ, ຍ້ອນການຂະຫຍາຍຕົວຂອງຕົວ ເມືອງ, ການເພີ່ມຂຶ້ນຂອງຈຳນວນປະຊາກອນທີ່ພັກດັນໃຫ້ມີການນຳໃຊ້ຊັບພະຍາກອນ ແລະ ມີການຜະລິດເພີ່ມຂຶ້ນ ຈຶ່ງເປັນສາເຫດຕົ້ນຕໍໃນການທຳລາຍຄວາມອຸດົມສົມບູນ ຂອງຊັບພະຍາກອນທຳມະຊາດ ເຊິ່ງມີຄວາມຕ້ອງການ ເພື່ອຕອບສະໜອງປັດໃຈສີ່ຂອງການດຳລົງຊີວິດ ທີ່ບວກກັບຄວາມທັນສະໄໝຂອງເຕັກໂນໂລຊີທີ່ມີການນຳໃຊ້ຊັບພະຍາກອນທຳມະຊາດຢ່າງຟຸ່ມເຟືອຍ ແລະ ການບຸກເບີກພື້ນທີ່ແບບຊະຊາຍ, ລວມໄປເຖິງການປ່ອຍມົນລະພິດອອກຈາກໂຮງງານອຸດສາຫະກຳ, ຈາກຄົວເຮືອນ, ຍານພາຫະນະຕ່າງໆໄດ້ກໍ່ໃຫ້ເກີດສິ່ງທີ່ຕາມມາ ນັ້ນກໍ່ຄືການທຳລາຍລະບົບນິເວດວິທະຍາ ທາງດ້ານຊັບພະຍາກອນທຳມະຊາດອັນພາໃຫ້ເກີດໄພພິບັດທາງທຳມະຊາດເຊັ່ນ: ໄພນ້ຳຖ້ວມ, ໄພແຫ້ງແລ້ງ, ໄຟປ່າ, ພາຍຸ...

ປະກົດການດັ່ງກ່າວ ໄດ້ສ້າງຄວາມເສຍຫາຍໃຫ້ແກ່ລະບົບເສດຖະກິດ ນັ້ນກໍໝາຍຄວາມວ່າບັນຫາການແປປວນຂອງສະພາບດິນຟ້າອາກາດ ແມ່ນໄດ້ສົ່ງຜົນໃຫ້ແກ່ຜົນຜະລິດຖືກທຳລາຍ, ເກີດພາວະຂາດແຄນອາຫານຢ່າງຮຸນແຮງເຮັດໃຫ້ຄວາມອຶດຢາກຫິວໂຫຍເພີ່ມຂຶ້ນ. ສິ່ງຕ່າງໆເຫຼົ່ານີ້ມັນໄດ້ກາຍເປັນບັນຫາໃຫຍ່ທີ່ຈະຕ້ອງຮ່ວມມືກັນໃນການແກ້ໄຂບັນຫາທີ່ເກີດຂຶ້ນ.

ໃນ ສ.ປ.ປ.ລາວ ແມ່ນມີຄວາມຫຍຸ້ງຍາກຫຼາຍ ທີ່ຈະຮັບມືກັບບັນຫາດັ່ງກ່າວ. ເຫດການ ຕ່າງໆທີ່ເກີດຂຶ້ນຊ້ຳໆກັນມີຜົນກະທົບຫຼາຍຕໍ່ຊຸມຊົນໃນລາວ ເພາະວ່າບັນຫາດັ່ງກ່າວນີ້ໄດ້ທຳລາຍວິ ຖີຊີວິດ, ຮີດຄອງປະເພນີ, ການທຳມາຫາກິນ ແລະ ຊັບພະຍາກອນຂອງພວກເຂົາ ເຈົ້າຈົນໝົດສິ້ນ ເຮັດໃຫ້ຄວາມສາມາດໃນ ການຕ້ານ ທານກັບໄພອັນຕະລາຍໃນອະນາຄົດຫຼຸດລົງ.

ຍ້ອນມີຫຼາຍເຫດການທີ່ບໍ່ຄາດຄິດເກີດຂຶ້ນຊ້ຳໆກັນ ບໍ່ວ່າຈະເປັນບັນຫາເສດຖະກິດ-ສັງຄົມ,ບັນຫາການເມືອງ, ບັນຫາສິ່ງແວດລ້ອມຕ່າງໆເຊິ່ງໄດ້ສ້າງຄວາມເສຍຫາຍອັນມະຫາສານ ໃຫ້ແກ່ຊາວກະສິກອນ.

ເມືອງຊານໄຊ, ແຂວງອັດຕະປື ແມ່ນເປັນເມືອງໜຶ່ງທີ່ນອນຢູ່ໃນບັນຊີ 47 ເມືອງທີ່ທຸກທີ່ສຸດຂອງ ສ ປ ປ ລາວ, ດ້ວຍເຫດຜົນທີ່ວ່າ: ການພັດທະນາພື້ນຖານເສດຖະກິດ - ສັງຄົມໃນໄລຍະຜ່ານມາແມ່ນຍັງຊັກຊ້າ ແລະ ໂຄງລ່າງທີ່ຈຳເປັນບໍ່ໄດ້ຮັບການປັບປຸງເທົ່າທີ່ຄວນ.

ບ້ານໃໝ່ນາກອກ, ເມືອງຊານໄຊ, ແຂວງອັດຕະປື ກໍ່ເປັນບ້ານໜຶ່ງທີ່ໄດ້ຮັບຜົນກະທົບທີ່ເປັນອັນຕະລາຍຈາກເຫດການທີ່ບໍ່ຄາດຄິດຢ່າງໜັກໜ່ວງ.

ເຫດການໃໝ່ໆທີ່ປະກົດອອກມາ ອາດຈະບໍ່ແມ່ນສິ່ງທີ່ຄຸ້ນເຄີຍສຳລັບພວກເຂົາ. ດັ່ງນັ້ນພວກເຂົາຈະເຮັດແນວໃດ ເມື່ອປະເຊີນກັບບັນຫາໄພນາບຄູ່ຕໍ່ການດຳລົງຊີວິດຂອງພວກເຂົາເຈົ້າ ແລະ ພວກເຂົາຈະມີຂີດຄວາມສາມາດໃນການຟື້ນຕົວແນວໃດ ຕໍ່ກັບບັນຫາທີ່ເກີດຂຶ້ນ?

ສະນັ້ນ. ເພື່ອຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ ແລະ ເພື່ອເປັນການຊອກຫາວິທີທາງໃນການແກ້ໄຂບັນຫາດັ່ງກ່າວ ຈຶ່ງມີຄວາມຈຳເປັນຕ້ອງໄດ້ມີການສຶກສາໃຫ້ເຂົ້າໃຈເຖິງບັນຫາທີ່ສົ່ງຜົນກະທົບ ແລະ ຂີດຄວາມສາມາດໃນການປັບຕົວຂອງປະຊາຊົນ ເພື່ອເປັນຂໍ້ມູນພື້ນຖານໃນການແກ້ໄຂບັນຫາ.

## 1.2. ຈຸດປະສົງ

- ສຶກສາເຫດການທີ່ບໍ່ຄາດຄິດທີ່ເກີດຂຶ້ນ ( Shocks ) ກັບຊາວກະສິກອນ.
- ສຶກສາຂີດຄວາມສາມາດໃນການຟື້ນຕົວ ( ຍຸດທະສາດໃນການຢູ່ລອດ ) ຂອງຊາວກະສິກອນ.

# ພາກທີ II
# ທົບທວນເອກະສານ

## 2.1. ນິຍາມ ແລະ ຄວາມໝາຍຂອງຄຳສັບ

❖ **ຂີດຄວາມສາມາດໃນການຟື້ນຕົວ ( Resillience )**

ແມ່ນລະດັບຄວາມສາມາດໃນການຕອບຮັບກັບສະພາບການປ່ຽນແປງ ທີ່ບໍ່ຄາດຄິດມາກ່ອນ ເຊິ່ງມີຄວາມໝາຍກົງກັນຂ້າມກັບຄວາມສ່ຽງ ( Vulnerability )

❖ **ເຫດການທີ່ບໍ່ຄາດຄິດ:**

ແມ່ນເຫດການທີ່ເກີດຂຶ້ນທັນທີທັນໃດໂດຍບໍ່ໄດ້ຄາດຄິດມາກ່ອນ.
ເຫດການດັ່ງກ່າວສາມາດຈັດເປັນໝວດໝູ່ດັ່ງນີ້:

- ທາງດ້ານສິ່ງແວດລ້ອມ: ນ້ຳຖ້ວມ, ພາຍຸ, ແຫ້ງແລ້ງ
- ທາງດ້ານເສດຖະກິດ: ການປ່ຽນແປງລາຄາສິນຄ້າ, ການຍົກເລີກສັນຍາ, ການຍາດແຍ່ງທີ່ດິນ
- ທາງດ້ານການເມືອງ: ການບັງຄັບໃຫ້ມີການຍົກຍ້າຍ, ການຖືກບັງຄັບຂູ່ເຂັນ, ຄວາມຂັດແຍ່ງໃນສັງຄົມ

❖ **ການຟື້ນຕົວ:**

ແມ່ນການເຮັດໃຫ້ການເຊື່ອມໂຊມຂອງສະພາບແວດລ້ອມແປສະພາບ ໃຫ້ກັບຄືນເປັນປົກກະຕິທາງໂຄງສ້າງ ແລະ ບົດບາດ.

❖ **ຄວາມໝາຍຂອງສິ່ງແວດລ້ອມ:**

ສິ່ງແວດລ້ອມແມ່ນຊັບພະສິ່ງທັງປວງ ທີ່ມີຊີວິດ ແລະ ບໍ່ມີຊີວິດເຊິ່ງເກີດຂຶ້ນຕາມທຳມະ ຊາດ ຫຼື ມະນຸດສ້າງຂຶ້ນເຊັ່ນ: ຄົນ, ສັດ, ພືດ ແລະ ອື່ນໆ ທີ່ມີສາຍກ່ຽວພັນ ແລະ ສິ່ງຜົນສະທ້ອນເຊິ່ງກັນ ແລະ ກັນທັງທາງບວກ ແລະ ທາງລົບຕໍ່ການດຳລົງຊີວິດ, ການຄົງຕົວ ແລະ ການຂະຫຍາຍຕົວຂອງມະນຸດ ແລະ ທຳມະຊາດ. ສ່ວນປະກອບຂອງສິ່ງແລດລ້ອມມີຄື: ດິນ, ນ້ຳ, ປ່າໄມ້, ພືດ, ສັດ ຈຸລິນຊີ, ພູຜາ, ບໍ່ແຮ່, ອາກາດ, ເຊິ່ງສ້າງການດຸນດ່ຽງຂອງລະບົບນິເວດວິທະຍາ, ສຳລັບວັດຖຸບູຮານ, ຮ່ອງຮອຍປະຫວັດສາດ, ເຂດຕົວເມືອງ, ຊົນນະບົດ, ສິ່ງປຸກສ້າງ, ຄວາມສັ່ນສະເທືອນ, ສຽງ, ແສງ, ກິ່ນ ແມ່ນສິ່ງທີ່ສ້າງຂຶ້ນດ້ວຍແຮງງານຂອງມະນຸດ ເຊິ່ງເປັນສ່ວນປະກອບທີ່ສຳຄັນຂອງສິ່ງແວດລ້ອມ.

❖ **ຄວາມໝາຍຂອງຜົນກະທົບສິ່ງແວດລ້ອມ:**

ຜົນກະທົບສິ່ງແວດລ້ອມ ( Environmental impact ) ແມ່ນໝາຍເຖິງການປ່ຽນແປງສະພາບແວດລ້ອມເດີມ ສ້າງໃຫ້ເປັນສະພາບແວດລ້ອມໃໝ່ຂຶ້ນມາ ໂດຍທີ່ສະພາບແວດລ້ອມໃໝ່ທີ່ສ້າງຂຶ້ນມານັ້ນ ອາດຈະກໍ່ໃຫ້ເກີດຜົນກະທົບທາງບວກ ແລະ ທາງລົບໄດ້.

❖ **ບັນຫາສິ່ງແວດລ້ອມ:**

ແມ່ນໝາຍເຖິງ ການເຊື່ອມໂຊມຂອງຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ ອັນໝາຍເຖິງ ປ່າໄມ້, ສັດປ່າ, ນ້ຳ, ດິນ, ຫີນ, ແຮ່, ວັດສະດຸ, ເຊື້ອເພີງ ແລະ ອາກາດ... ນອກຈາກນີ້ຍັງເຊື່ອມໂຍງໄປສູ່ການສ້າງການປົນເປື້ອນຂອງສານພິດໃນສິ່ງແວດລ້ອມ ໂດຍກິດຈະກຳທີ່ມະນຸດສ້າງຂຶ້ນ.

❖ **ບັນຫາເສດຖະກິດ:**

ແມ່ນໝາຍເຖິງການຂາດແຄນທາງດ້ານເສດຖະກິດ, ສິນຄ້າ ແລະ ການບໍລິການທີ່ຈະຕອບສະໜອງຄວາມຕ້ອງການອັນບໍ່ສິ້ນສຸດຂອງມະນຸດ.

❖ **ບັນຫາທາງດ້ານການເມືອງ:**

ບັນຫາການເມືອງ ແມ່ນບັນຫາທີ່ເກີດຂຶ້ນຢູ່ໃນທຸກໆປະເທດທົ່ວໂລກ ເຊິ່ງເກີດຈາກບັນຫາທີ່ມີຄວາມຂັດແຍ່ງກັນໃນແນວຄວາມຄິດການເມືອງ-ການປົກຄອງ, ຄວາມບໍ່ພໍໃຈໃນກຳນົດການຕ່າງໆເຊິ່ງບໍ່ຖືກຕ້ອງຕາມຄວາມບໍ່ເພິ່ງພໍໃຈ ຈຶ່ງກໍ່ໃຫ້ເກີດມີບັນຫາຄວາມຂັດແຍ່ງຕາມມາ ເພື່ອກໍ່ໃຫ້ເກີດມີການປັບປຸງ ແລະ ແກ້ໄຂບັນຫາດັ່ງກ່າວຄືນໃໝ່.

❖ **ໄພພິບັດ:**

ແມ່ນປະກົດການທຳມະຊາດເປັນຜູ້ສ້າງ ຫຼື ອາດເປັນຜົນງານຈາກການກະທຳຂອງມະນຸດ ສິ່ງເຫຼົ່ານີ້ເປັນໄພທີ່ແກ້ໄຂໄດ້ຍາກ ແຕ່ອາດຄວບຄຸມໃຫ້ບັນເທົາຄວາມຫາຍຍານະໄດ້. ລັກສະນະຂອງໄພພິບັດທຳມະຊາດທີ່ເກີດຂຶ້ນໃນໂລກແມ່ນມີຫຼາຍຂະໜາດ ແລະ ຫຼາຍລັກສະນະເປັນຕົ້ນແມ່ນອາກາດຮ້ອນ, ອາກາດໜາວເຢັນຜິດປົກກະຕິ, ໄຟປ່າ, ແຜ່ນດິນໄຫວ, ພູເຂົາໄຟລະເບີດ, ແຫ້ງແລ້ງ, ນ້ຳຖ້ວມ ແລະ ອື່ນໆ.

‘’ໄພພິບັດ ໝາຍເຖິງເຫດການທີ່ຮ້າຍແຮງໃດໜຶ່ງ ທີ່ສົ່ງຜົນກະທົບຕໍ່ຊຸມຊົນ ຫຼື ສັງຄົມໃດໜຶ່ງເປັນສາເຫດພາໃຫ້ເກີດມີການສູນເສຍຕໍ່ມະນຸດ, ຊັບສິນ, ເສດຖະກິດ ແລະ ສິ່ງແວດລ້ອມ”

‘’ໄພພິບັດ ໝາຍເຖິງສະພາບຮ້ອນແຮງໃດໜຶ່ງ ທີ່ຂັດຂວາງການເຄື່ອນໄຫວຂອງສັງຄົມ, ພາໃຫ້ເກີດການຂົ່ມຂູ່ທີ່ກວ້າງຂວາງຕໍ່ຊີວິດ, ສຸຂະພາບ, ຊັບສິນຂອງມະນຸດ ຫຼື ສິ່ງແວດລ້ອມບໍ່ວ່າຈະເກີດຂຶ້ນຈາກອຸບັດຕິເຫດ, ຈາກທຳມະຊາດ ຫຼື ນ້ຳມືຂອງມະນຸດ ຢ່າງກະທັນຫັນ ຫຼື ຜ່ານຂະບວນການຍາວນານແຕ່ບໍ່ລວມການປະທະກັນດ້ວຍອາວຸດ”.

( ນິຍາມໄພພິບັດ ຈາກເອກະສານສາກົນທີ່ ສາມາດນຳໃຊ້ໃນສະພາບການຂອງປະເທດລາວ )

## 2.2. ທົບທວນເອກະສານ

### 2.2.1. ຄວາມສ່ຽງຕໍ່ໄພພິບັດທາງທຳມະຊາດ

ປະເທດລາວເປັນປະເທດໜຶ່ງທີ່ບໍ່ມີຊາຍແດນຕິດກັບທະເລ ເຊິ່ງມີເນື້ອທີ່ທັງໝົດ 236,800 ກິໂລຕາແມັດ. ເນື້ອທີ່ສ່ວນໃຫຍ່ຂອງປະເທດມີລັກສະນະເປັນພູຜາ ເຊິ່ງມີແມ່ນ້ຳຂອງອ້ອມຮອບເນື້ອທີ່ບໍລິເວນທິດຕາເວັນຕົກ ແລະ ມີສາຍພູຫຼວງຢູ່ໃນທິດຕາເວັນອອກ. ເນື້ອທີ່ຫຼາຍກ່ວາ 85 ສ່ວນຮ້ອຍ ຫຼື 202.400 ກິໂລຕາແມັດ ຂອງ ສ ປ ປ ລາວ ແມ່ນສ່ວນໜຶ່ງຂອງບໍລິເວນອ່າງໂຕ່ງແມ່ນ້ຳຂອງ.

ສ ປ ປ ລາວ ມີປະຊາກອນທັງໝົດ 5.7 ລ້ານຄົນ ແລະ ແບ່ງອອກເປັນ 17 ແຂວງ, 141 ເມືອງ ແລະ 10,500 ບ້ານ. ປະມານ 74 ສ່ວນຮ້ອຍຂອງປະຊາກອນທັງໝົດ ມີລາຍຮັບ 2 ໂດລາສະຫະລັດຕໍ່ມື້ ແລະ ເປັນປະເທດໜຶ່ງ ທີ່ນອນໃນປະເທດທີ່ດ້ອຍພັດທະນາທີ່ສຸດໃນໂລກ. ກະສິກຳແມ່ນເປັນພື້ນຖານຫຼັກໃນການດຳລົງຊີວິດຂອງປະຊາກອນລາວ, ໃນ 67 ສ່ວນຮ້ອຍຂອງທຸກຄົວ ເຮືອນແມ່ນອາໄສການຜະລິດກະສິກຳໃນການບໍລິໂພກສະບຽງອາຫານ. ການອີງໃສ່ການຜະລິດກະສິກຳເປັນຕົ້ນຕໍ ນີ້ໄດ້ເຮັດໃຫ້ປະຊາກອນລາວສ່ວນຫຼາຍໄດ້ຮັບຜົນກະທົບຈາກສະພາບອາກາດ ແລະ ໄພພິບັດທາງທຳມະຊາດໄດ້ງ່າຍ. ປະມານ 46 ສ່ວນຮ້ອຍຂອງປະຊາກອນທີ່ອາໄສຢູ່ໃນເຂດຊົນນະບົດປະເຊີນໜ້າກັບບັນຫາຄວາມບໍ່ໝັ້ນຄົງທາງດ້ານສະບຽງອາຫານອັນເນື່ອງມາຈາກໄພແຫ້ງແລ້ງທີ່ຮຸນແຮງ ແລະ ເຫດການທີ່ຄາດວ່າມີອັດຕາສ່ວນສູງໃນການສ່ຽງຕໍ່ຄວາມບໍ່ໝັ້ນຄົງທາງດ້ານສະບຽງອາຫານແມ່ນໄພນ້ຳຖ້ວມ.

ຢູ່ໃນປະເທດລາວ, ຂອບເຂດຊາຍແດນທາງພາກຕາເວັນອອກຂອງປະເທດທີ່ເປັນພູຜາມີອັດຕາຄວາມທຸກຍາກສູງທີ່ສຸດ ເຖິງແມ່ນວ່າຈະມີຄວາມໜາແໜ້ນຂອງປະຊາກອນຕ່ຳ.

ເມື່ອມີເຫດການໄພພິບັດທາງທຳມະຊາດເກີດຂຶ້ນ ປະຊາກອນເຫຼົ່ານີ້ຍິ່ງໄດ້ຮັບຜົນກະທົບງ່າຍເນື່ອງມາຈາກສະພາວະທາງເສດຖະກິດ. ແຕ່ບໍ່ໜ້າເຊື່ອເລີຍວ່າຢູ່ແຄມຝັ່ງແມ່ນ້ຳຂອງ ແມ່ນມີອັດຕາຄວາມທຸກຍາກສູງກວ່າ ຍ້ອນວ່າມີຄວາມໜາແໜ້ນຂອງປະຊາກອນສູງກວ່າ.

ເພາະສະນັ້ນ, ໄພນ້ຳຖ້ວມຢູ່ແຄມຝັ່ງແມ່ນ້ຳຂອງຈຶ່ງກະທົບຕໍ່ປະຊາຊົນຈຳນວນຫຼາຍທີ່ມີຄວາມສ່ຽງສູງ. ປັດຈຸບັນນີ້ ກຸ່ມວິທະຍາສາດໄດ້ເຫັນວ່າໂດຍລວມແລ້ວສະພາບພູມອາກາດໄດ້ຮ້ອນຂຶ້ນ. ລະບົບນິເວດວິທະຍາຫຼາຍບ່ອນ ແມ່ນຖືກກະທົບຈາກການປ່ຽນແປງຂອງສະພາບອາກາດໃນຂົງເຂດ, ໂດຍສະເພາະແມ່ນການເພີ່ມຂຶ້ນຂອງອຸນຫະພູມ. ກຸ່ມວິທະຍາສາດມີຄວາມເຫັນຮ່ວມກັນວ່າການເກີດໄພພິບັດທາງທຳມະຊາດ ອາດຈະມີຄວາມຖີ່ຂື້ນ ແລະ ຮ້າຍແຮງຂຶ້ນເລື້ອຍໆ.

ໃນປັດຈຸບັນ ແມ່ນມີຄວາມຫຍຸ້ງຍາກທີ່ຈະກຳນົດວ່າ ການປ່ຽນແປງຂອງສະພາບດິນຟ້າອາກາດຈະມີຜົນພາໃຫ້ເກີດໄພແຫ້ງແລ້ງ, ໄພນ້ຳຖ້ວມ ຫຼື ມາພ້ອມກັນທັງສອງໄພພິບັດໃນປະເທດລາວ ຫຼື ບໍ່.

ຢ່າງໃດກໍຕາມ, ການຄຸ້ມຄອງການເພີ່ມຂຶ້ນຂອງໄພພິບັດທາງທຳມະຊາດ ເປັນສິ່ງໜຶ່ງທີ່ທ້າທາຍສຳລັບປະຊາຊົນ ແລະ ລັດຖະບານລາວ.

❖ **ອັດຕາຄວາມເປັນໄປໄດ້ / ຜົນກະທົບສູງສຸດສຳລັບໄພພິບັດໄດ້ແກ່:**

- ນ້ຳຖ້ວມຮ້າຍແຮງຢູ່ແຄມຝັ່ງແມ່ນ້ຳຂອງ
- ໄພແຫ້ງແລ້ງທົ່ວປະເທດລາວ
- ພະຍາດຕິດຕໍ່ສຸກເສີນ (ໄຂ້ຫວັດໃຫຍ່ລະບາດ, ໂລກຊາຣ໌ສ)

ໃນສະຕະວັດທີ່ຜ່ານມາ, ຄວາມຖີ່ຂອງການເກີດໄພພິບັດທາງທຳມະຊາດ ເປັນສາເຫດທີ່ສ້າງຄວາມທຸກທໍລະມານຢ່າງກວ້າງຂວາງ ແລະ ເປັນອຸປະສັກຕໍ່ການພັດທະນາເສດຖະກິດຂອງ ສ ປ ປ ລາວ.

❖ **10 ອັນດັບຕົ້ນຕໍຂອງໄພພິບັດທາງທຳມະຊາດໃນ ສ ປ ປ ລາວໄລຍະແຕ່ປີ1900-2009.**

(ຈັດຕາມຈຳນວນຄົນທີ່ໄດ້ຮັບຜົນກະທົບ)

1. ໄພແຫ້ງແລ້ງ ປີ1977 ( 3,500,000 ຄົນ )
2. ພາຍຸ ສິງຫາ ປີ1995 ( 1,000,000 ຄົນ )
3. ໄພແຫ້ງແລ້ງ ທັນວາ ປີ 1988 ( 730,000 ຄົນ )
4. ນ້ຳຖ້ວມ ສິງຫາ ປີ 1978 ( 459,000 ຄົນ )
5. ນ້ຳຖ້ວມ ສິງຫາ ປີ 1901 ( 453,000 ຄົນ )
6. ນ້ຳຖ້ວມ ກັນຍາ ປີ 1900 ( 450,000 ຄົນ )
7. ນ້ຳຖ້ວມ ສິງຫາ ປີ 1996 ( 420,000 ຄົນ )
8. ນ້ຳຖ້ວມ ສິງຫາ ປີ 1995 ( 391,400 ຄົນ )
9. ນ້ຳຖ້ວມ ກັນຍາ ປີ 1991 ( 332,000 ຄົນ )
10. ພາຍຸ ກໍລະກົດ ປີ1992 ( 268,877 ຄົນ )

### 2.2.2. **ຜົນກະທົບຈາກໄພພິບັດທາງທຳມະຊາດໃນຂົງເຂດທົ່ວປະເທດ ປີ 2009**

ໃນຊ່ວງປີ2009 ນີ້ສະພາບດິນຟ້າອາກາດ ແລະ ຟ້າຝົນໃນຊ່ວງເດືອນ 8-9 ໄດ້ມີສະພາບແຫ້ງແລ້ງ, ນ້ຳຖ້ວມ, ຢູ່ບາງເຂດທົ່ວປະເທດ ແລະ ໄດ້ສົ່ງຜົນກະທົບຕໍ່ການຜະລິດເຂົ້າໃນລະດູຝົນ ໂດຍສະເພາະແມ່ນໄພທຳມະຊາດທີ່ເກີດຂຶ້ນຄື :

- ເກີດຈາກໄພນ້ຳຖ້ວມ ແລະ ນ້ຳປ່າໄຫຼຊຸຢູ່ຂົງເຂດຂອງ 12 ແຂວງເຮັດໃຫ້ຊົນລະປະທານເປ່ເພ ຈຳນວນຫຼາຍກວ່າ 45 ແຫ່ງ ຄິດເປັນມູນຄ່າເສຍຫາຍປະມານ 38 ຕື້ກີບ.
- ເກີດຈາກສະພາບແຫ້ງແລ້ງຂອງບາງເຂດຂອງ 15 ແຂວງ ໂດຍສະເພາະແມ່ນຢູ່ເຂດພາກເໜືອ.

- ເກີດມີສັດຕູພືດລະບາດເຮັດໃຫ້ເນື້ອທີ່ເຂົ້ານາປີ, ເຂົ້າໄຮ່, ພືດລະດູຝົນບາງຊະນິດເສຍຫາຍ ຕົ້ນ ຕໍແມ່ນຢູ່ແຂວງບໍ່ແກ້ວ, ແຂວງຫຼວງພະບາງ, ແຂວງຫົວພັນ, ແຂວງໄຊຍະບູລີ ແລະ ແຂວງສາລະວັນ. ລວມເນື້ອທີ່ເສຍຫາຍປະມານ 2.600 ກວ່າເຮັກຕ້າ ຕີກມູນຄ່າ 10 ຕື້ກີບ.
- ພະຍາດສັດເກີດຂື້ນລວມມີ: ຄວາຍ 1,120ໂຕ, ງົວ 1,320 ໂຕ, ໝູ 4,130 ໂຕ ແລະ ອື່ນໆ ລວມມູນຄ່າເສຍຫາຍ 9 ຕື້ກີບ ( ກະຊວງກະສິກໍາ ແລະ ປ່າໄມ້ ).

### 2.2.3. ການສັງລວມການປະເມີນຜົນກະທົບ ແລະ ຜົນເສຍຫາຍຕໍ່ກັບຊັບພະຍາກອນກະສິກໍາຈາກໄພທໍາມະຊາດປີ 2009.

ການສັງລວມການປະເມີນຜົນກະທົບ ແລະ ຜົນເສຍຫາຍຕໍ່ກັບຊັບພະຍາກອນກະສິກໍາຈາກໄພທໍາມະຊາດປີ 2009 ແມ່ນໄດ້ສ້າງຜົນເສຍຫາຍຢ່າງໜັກໜ່ວງຕໍ່ກັບເນື້ອທີ່ນາ, ເນື້ອທີ່ໄຮ່ (ເຂົ້າເຂດເນີນສູງ) ແລະ ເນື້ອທີ່ພືດຊະນິດອື່ນໆເສຍຫາຍຫຼາຍເຮັກຕ້າ ເຊິ່ງສະແດງອອກໃນຕາຕະລາງດັ່ງຕໍ່ໄປນີ້:

ຕາຕະລາງທີ 1: ຜົນກະທົບ ແລະ ຜົນເສຍຫາຍຕໍ່ເນື້ອທີ່ນາ

| ລ/ດ | ຊື່ເຂດຕ່າງໆ | ເນື້ອທີ່ນາປີ2009 | | | | |
|---|---|---|---|---|---|---|
| | | ເນື້ອທີ່ປູກ | ເສຍຫາຍຈາກໄພທໍາມະຊາດ(ຮຕ) | | | |
| | | | ນ້ຳຖ້ວມ | ແຫ້ງແລ້ງ | ສັດຕູພືດ | ລວມ |
| I. | ເຂດພາກເໜືອ | 119,872 | 213 | 451 | 682 | 1,346 |
| II. | ເຂດພາກກາງ | 365,387 | 6,312 | | 910 | 7,222 |
| III. | ເຂດພາກໃຕ້ | 195,141 | 16,353 | 56 | 206 | 16,615 |
| ລວມ | | 680,400 | 22,878 | 507 | 1,798 | 25,183 |

ຕາຕະລາງທີ 2: ຜົນກະທົບ ແລະ ຜົນເສຍຫາຍຕໍ່ເນື້ອທີ່ໄຮ່

| ລ/ດ | ຊື່ເຂດຕ່າງໆ | ເນື້ອທີ່ໄຮ່(ເຂົ້າເຂດເນີນສູງ)ປີ2009 | | | | |
|---|---|---|---|---|---|---|
| | | ເນື້ອທີ່ປູກ | ເສຍຫາຍ(ຮຕ) | | | |
| | | | ນ້ຳຖ້ວມ | ແຫ້ງແລ້ງ | ສັດຕູພືດ | ລວມ |
| I. | ເຂດພາກເໜືອ | 84,076 | | 850 | 3,440 | 4,290 |
| II. | ເຂດພາກກາງ | 12,176 | 60 | | 195 | 255 |
| III. | ເຂດພາກໃຕ້ | 10,871 | 2,880 | | | 2,880 |
| ລວມ | | 107,123 | 850 | 2,940 | 3.635 | 7.425 |

ຕາຕະລາງທີ 3: ຜົນກະທົບ ແລະ ຜົນເສຍຫາຍຕໍ່ເນື້ອທີ່ພືດຊະນິດອື່ນໆ

| ລ/ດ | ຊື່ເຂດຕ່າງໆ | ເນື້ອທີ່ພືດຊະນິດອື່ນໆປີ2009 | | | | |
|---|---|---|---|---|---|---|
| | | ເນື້ອທີ່ປູກ | ເສຍຫາຍ | | | |
| | | | ນໍ້າຖ້ວມ | ເຊາະເຈື່ອນ | ອື່ນໆ | ລວມ |
| I. | ເຂດພາກເໜືອ | 14,219 | 5,000 | | 393 | 5,393 |
| II. | ເຂດພາກກາງ | | | | 908 | 908 |
| III. | ເຂດພາກໃຕ້ | 3,359 | 2,538 | 212 | 2,636 | 5,386 |
| ລວມ | | 17,487 | 7,538 | 212 | 3, 937 | 11,687 |

ຈາກຕາຕະລາງສາມາດສະຫຼຸບໄດ້ວ່າຜົນເສຍຫາຍ ແລະ ຜົນກະທົບທີ່ເກີດຂຶ້ນໃນແຕ່ລະພາກແມ່ນມີຄວາມແຕກຕ່າງກັນ ເຊິ່ງສາເຫດແມ່ນເກີດຈາກສະພາບພູມສັນຖານ ແລະ ສະພາບພູມອາກາດທີ່ແຕກຕ່າງກັນຂອງແຕ່ລະພາກ ເຊິ່ງພາກເໜືອແມ່ນໄດ້ຮັບຜົນກະທົບ ແລະ ຜົນເສຍຫາຍຈາກໄພແຫ້ງ ແລ້ງ ແລະ ສັດຕູພືດເປັນສ່ວນໃຫຍ່. ພາກກາງສ່ວນໃຫຍ່ແມ່ນໄດ້ຮັບຜົນກະທົບ ແລະ ຜົນເສຍຫາຍຈາກ ໄພນໍ້າຖ້ວມ ແລະ ສັດຕູພືດ. ສ່ວນພາກໃຕ້ສ່ວນຫຼາຍແລ້ວແມ່ນໄດ້ຮັບຜົນກະທົບຈາກໄພນໍ້າຖ້ວມ.

### 2.2.4. ຄວາມສ່ຽງທາງດ້ານເສດຖະກິດຂອງ ສ ປ ປ ລາວ

ປະເທດລາວເປັນປະເທດທີ່ດ້ອຍພັດທະນາ ມີການດຳລົງຊີວິດຕິດພັນກັບທຳມະຊາດ, ມີລະບົບເສດຖະກິດທີ່ບໍ່ແນ່ນອນ ເນື່ອງຈາກເສດຖະກິດຂອງລາວ ສ່ວນໃຫຍ່ແລ້ວແມ່ນນຳໃຊ້ຊັບພະ ຍາກອນທຳມະຊາດ. ເມື່ອປະເທດລາວປະເຊີນກັບບັນຫາດິນຟ້າອາກາດປ່ຽນແປງ ຈິ່ງສົ່ງຜົນກະທົບໃຫ້ລະບົບເສດຖະກິດຂອງປະເທດຕົກຕໍ່າ ຖ້າຫາກບໍ່ມີການຕອບໂຕ້ຫຍັງ. ຜົນກະທົບຢູ່ ສ ປ ປ ລາວ ຍິ່ງມີຄວາມໜັກ ໜ່ວງ ເນື່ອງຈາກລາວຍັງເປັນປະເທດທີ່ດ້ອຍພັດທະນາ ເຊິ່ງມີຂີດຄວາມສາມາດໃນການຟື້ນຕົວຕໍ່າ.

### 2.2.5. ປັດໃຈທີ່ຊ່ວຍສ້າງຂີດຄວາມສາມາດໃນການຟື້ນຕົວໃຫ້ແກ່ສັງຄົມໃນຊົນນະບົດປະກອບມີ :

- ດ້ານຄວາມຫຼາກຫຼາຍ - ດ້ານຊັບພະຍາກອນ ແລະ ກິດຈະກຳ.
- ດ້ານຄວາມຕື່ນຕົວ - ທາງເລືອກ, ຄວາມສ່ຽງ
- ດ້ານຄວາມສາມາດໃນບຸກຄົນ -ໃນການສ້າງທາງເລືອກ ແລະ ເຮັດໃນສິ່ງທີ່ຕົນເອງໄດ້ຕັດສິນໃຈແລ້ວ.

ປັດໃຈຂ້າງເທິງນັ້ນເອີ້ນວ່າ : ຄວາມສາມາດໃນການປັບຕົວ (adaptive capa city). ຫຼື ອີກຄວາມໝາຍໜຶ່ງວ່າ: ຖ້າມີຄວາມສາມາດໃນການປັບຕົວສູງ ກໍ່ຈະເຮັດໃຫ້ມີຂີດຄວາມສາມາດໃນການຟື້ນຕົວເຊັ່ນດຽວກັນ.

### 2.2.6. ເສັ້ນສະແດງທີ່ບົ່ງບອກເຖິງການເຊື່ອມໂຍງຂອງແນວຄວາມຄິດຕ່າງໆ:

**ຂີດຄວາມສາມາດໃນການຟື້ນຕົວ**

ລະບົບສາມາດຄົງຕົວໄດ້ເຖິງວ່າສະພາບແວດລ້ອມຈະປ່ຽນແປງໄປກໍ່ຕາມ

**ຄວາມສາມາດໃນການປັບຕົວ ມີຜົນເຮັດໃຫ້ລະບົບມີຂີດຄວາມສາມາດໃນການຟື້ນຕົວ**

- ດ້ານຄວາມຫຼາກຫຼາຍ
- ດ້ານຄວາມຕື່ນຕົວ
- ຄວາມສາມາດໃນບຸກຄົນ

**ເຫດການທີ່ບໍ່ຄາດຄິດ ມີຜົນເຮັດໃຫ້ລະບົບມີຄວາມສ່ຽງ**

- ດ້ານສິ່ງແວດລ້ອມ
- ດ້ານເສດຖະກິດ
- ດ້ານການເມືອງ

**ຄວາມສ່ຽງ**

ລະບົບຈະຖືກທຳລາຍໄດ້ງ່າຍເມື່ອສະພາບແວດລ້ອມມີການປ່ຽນແປງ

# ພາກທີ III
# ວິທີການສຶກສາ

## 3.1. ສະຖານທີ່ສຶກສາ

ເຂດການສຶກສາແມ່ນບ້ານໃໝ່ນາກອກ, ເມືອງຊານໄຊ, ແຂວງອັດຕະປື, ສ ປ ປ ລາວ. ໂດຍຈະສຶກສາລົງເລິກໃນລະດັບ ຄອບຄົວຊາວກະສິກອນ.

## 3.2. ວິທີການ ແລະ ຂອບເຂດການສຶກສາ

ໃນການລົງເອົາຂໍ້ມູນຄັ້ງນີ້ແມ່ນຈະໄດ້ສຶກສາເອົາຂໍ້ມູນທີ່ກ່ຽວຂ້ອງກັບການສຶກສາຢູ່ 2 ລັກສະນະ ເຊິ່ງລວມມີຂໍ້ມູນທຸຕິຍະພູມ ແລະ ຂໍ້ມູນປະຖົມມະພູມ:

❖ **ຂໍ້ມູນທຸຕິຍະພູມ (ຂໍ້ມູນມືສອງ)** : ທີ່ໄດ້ຈາກອົງການທີ່ກ່ຽວຂ້ອງຂັ້ນບ້ານ, ຂັ້ນເມືອງ, Internet, ເອກະສານຕ່າງໆໂດຍການລວບລວມ ແລະ ບັນທຶກເອົາເນື້ອຫາດັ່ງກ່າວເພື່ອປະກອບເຂົ້າໃນບົດ.

❖ **ຂໍ້ມູນປະຖົມມະພູມ (ຂໍ້ມູນມືໜຶ່ງ)** : ເຊິ່ງເປັນຂໍ້ມູນທີ່ໄດ້ຈາກການສຳພາດ ແລະ ສັງເກດຈາກບຸກຄົນ, ກຸ່ມຄົນ,ອົງການຈັດຕັ້ງ ແລະ ອື່ນໆທີ່ກ່ຽວຂ້ອງ.

➢ **ເກັບກຳຂໍ້ມູນພາກສະໜາມ**

ແມ່ນໄດ້ມີການສຳຫຼວດພື້ນທີ່ຕົວຈິງ, ສຶກສາເຖິງບັນຫາທີ່ສິ່ງຜົນສະທ້ອນ ແລະ ຂີດຄວາມສາມາດໃນການຟື້ນຕົວຂອງປະຊາຊົນ ໂດຍການສັງເກດ ແລະ ສຳພາດ. ສຳລັບການສັງເກດ ແລະ ສຳພາດແມ່ນໄດ້ມີການສຶກສານຳຄອບຄົວທີ່ປະສົບກັບບັນຫາຊຶ່ງໄດ້ຈັດເປັນ 3 ລະດັບຄວາມແຕກຕ່າງຂອງຄອບຄົວຄື: ຄອບຄົວທີ່ທຸກຍາກ, ຄອບຄົວລະດັບປານກາງ ແລະ ຄອບຄົວທີ່ຮັ່ງມີ ເພື່ອເຮັດການສຶກສາ ໂດຍວິທີການສຶກສາແມ່ນໄດ້ອີງໃສ່ເອກະສານ family portraits (March 2005).

ຫຼັງຈາກເກັບກຳຂໍ້ມູນ ແລະ ລວບລວມຂໍ້ມູນລະດັບຄອບຄົວແລ້ວ ຈຶ່ງເຮັດການວິເຄາະເຊິ່ງຂໍ້ມູນທີ່ໄດ້ມານັ້ນຈະຈັດເປັນໝວດໝູ່ຂອງບັນຫາເຊິ່ງໝວດໝູ່ຂອງບັນຫາແມ່ນຈັດເປັນ 2 ໝວດຄື: ບັນຫາທາງສິ່ງແວດລ້ອມ, ບັນຫາທາງດ້ານເສດຖະກິດ-ສັງຄົມ, ບັນຫາການເມືອງ. ຂໍ້ມູນທາງດ້ານຄຸນນະພາບທີ່ເປັນການພັນລະນາ ແມ່ນໃຊ້ການພັນລະນາເຖິງສາຍພົວພັນ ຂອງຕົວຊີ້ບອກຕ່າງໆ ທີ່ໄດ້ຮັບຈາກການສຳຫຼວດເພື່ອອະທິບາຍເຖິງເຫດ ແລະ ຜົນຂອງຄ່າສະແດງທີ່ເປັນປະລິມານລວມທັງລັກສະນະຄວາມຄິດເຫັນຂອງປະຊາຊົນໃນຂົງເຂດນັ້ນ.

### 3.3. ອຸປະກອນການສຶກສາ

- ກ້ອງຖ່າຍຮູບ
- ປື້ມບັນທຶກ, ບິກ, ສໍ.
- ແລບທອບ.
- ເອກະສານນຳສິ່ງທີ່ຈຳເປັນ.
- ແບບຟອມສອບຖາມ.
- ເອກະສານທີ່ກ່ຽວຂ້ອງກັບບົດ
- ເຄື່ອງຈັບສັນຍານ GPS
- ຍານພາຫະນະ
- USB
- ອຸປະກອນອື່ນໆທີ່ຈຳເປັນໃນການລົງເກັບກຳຂໍ້ມູນພາກສະໜາມ

### 3.4. ແຜນວາດຂອງຂະບວນການສຶກສາ



## ພາກທີIV
## ຜົນໄດ້ຮັບ ແລະ ວິພາກຜົນການສຶກສາ

### 4.1. ຜົນໄດ້ຂອງການສຶກສາ

#### 4.1.1. ທີ່ຕັ້ງ ແລະ ສະພາບລວມຂອງບ້ານ




ຮູບທີ 1: ແຜນວາດການຄຸ້ມຄອງດິນປ່າໄມ້ບ້ານໃໝ່ນາກອກ

ບ້ານໄດ້ສ້າງຕັ້ງຂື້ນໃນປີ 1977. ມີໄລຍະຫ່າງຈາກຕົວເມືອງປະມານ 12 ກິໂລແມັດ. ເຊິ່ງປະກອບ ມີ 104 ຫຼັງຄາເຮືອນ,125 ຄອບຄົວ, ມີປະຊາກອນທັງໝົດ 615 ຄົນ, ຍິງ 321 ຄົນ. ຄອບຄົວກຸ້ມກິນ 8 ຄອບຄົວ, ຄອບຄົວປານກາງມີ 53 ຄອບຄົວ, ຄອບຄົວຂາດເຂີນມີ 64 ຄອບຄົວ. ອາຊີບຕົ້ນຕໍຂອງຊາວບ້ານສ່ວນໃຫຍ່ແມ່ນເຮັດນາ100%, ປູກຝັງ, ລ້ຽງສັດ ແລະ ປະກອບອາຊີບເສີມດ້ວຍການປູກພືດລົ້ມລຸກຕາມລະດູການ. ມີ 3 ຊົນເຜົ່າຄື: ປະຊາຊົນສ່ວນໃຫຍ່ແມ່ນ ຊົນເຜົ່າລະແວ (ເປຼີາ), ຮອງມາແມ່ນເຜົ່າເຈັ້ງ, ລາວລຸ່ມ. ປະຊາຊົນສ່ວນໃຫຍ່ແມ່ນນັບຖືສາສະໜາຜີ, ການຊົມໃຊ້ນ້ຳຂອງປະຊາຊົນພາຍໃນບ້ານສ່ວນຫຼາຍແມ່ນຊົມໃຊ້ນ້ຳບາດານ 50% ຮອງລົງມາແມ່ນຊົມໃຊ້ນ້ຳເຊຊະໜານກວມເອົາ 47.4% ແລະ ນ້ຳສ້າງກວມເອົາ 2.6%, ເຮືອນທີ່ເຮັດດ້ວຍໄມ້ແປ້ນ60%, ເຮັດດ້ວຍໄມ້ເຮັຍ 35%, ເຮືອນໃບໄມ້ 5%.

ບ້ານໃໝ່ນາກອກເປັນບ້ານໜຶ່ງທີ່ຕັ້ງລຽບຕາມເຂດຂະໜານເສັ້ນທາງຜ່ານກາງບ້ານ. ມີຊາຍແດນຕິດຈອດກັບຫຼາຍບ້ານຄື:

- ທິດເໜືອຕິດກັບບ້ານຕາດກຸ່ມປະມານ 5 km
- ທິດໃຕ້ຕິດກັບບ້ານແກ້ງໃຫ່ຍ ປະມານ 8 km
- ທິດຕາເວັນອອກຕິດກັບເສັ້ນທາງ 18B,ປະມານ 8 km
- ທິດຕາເວັນຕົກຕິດກັບບ້ານເພຍແກ້ວ

1. **ດ້ານເນື້ອທີ່**

- ເນື້ອທີ່ທັງໝົດ: 4500 ha
- ເນື້ອທີ່ປ່າສະຫງວນ:240 ha
- ເນື້ອທີ່ປ່າປ້ອງກັນ:1400 ha
- ເນື້ອທີ່ປ່າຊົມໃຊ້: 1700 ha
- ເນື້ອທີ່ປ່າຊ້າ: 2 ha
- ເນື້ອທີ່ທົ່ງລ້ຽງສັດ: 792 ha
- ເນື້ອທີ່ດິນແຮທຳການຜະລິດ : 250 ha
- ເນື້ອທີ່ດິນແຮປຸກສ້າງ : 6 ha
- ເນື້ອທີ່ບ້ານ: 8 ha
- ເນື້ອທີ່ນາ: 96,3 ha
- ເນື້ອທີ່ສວນປູກພືດເສດຖະກິດ : 5 ,7 ha

2. **ດ້ານການຜະລິດສະບຽງອາຫານ**

ປະຊາຊົນໃນເຂດບ້ານໃໝ່ນາກອກສ່ວນຫຼາຍແມ່ນມີມູນເຊື້ອການເຮັດນາ, ຜະລິດຕະພັນທີ່ປະຊາຊົນຜະລິດເພື່ອບໍລິໂພກ ແລະ ເປັນສິນຄ້າຕົ້ນຕໍແມ່ນເຂົ້າ, ໝາກເຜັດ, ໝາກເຂືອ, ສັດໃຫຍ່ ແລະ ພືດສຳຮອງອື່ນໆຈຳນວນໜຶ່ງ, ເນື້ອທີ່ທົ່ງລ້ຽງສັດ: 792 ha, ເນື້ອທີ່ດິນແຮ່ທຳການຜະລິດ : 250 ha, ເນື້ອທີ່ນາ: 96,3 ha, ເນື້ອທີ່ສວນປູກພືດເສດຖະກິດ 5,7 ha. ການຜະລິດເຂົ້າຂອງປະຊາຊົນແມ່ນບໍ່ກຸ້ມກິນ.



ຮູບທີ 2:  ພືດສວນຄົວພາຍໃນບ້ານ

3. **ດ້ານການຜະລິດເປັນສິນຄ້າ**

ດ້ານການຜະລິດເປັນສິນຄ້າ ປະຊາຊົນແມ່ນບໍ່ມີມູນເຊື້ອການຜະລິດຄ້າຂາຍພໍປານໃດ, ອີກຢ່າງໜຶ່ງກໍ່ຍ້ອນທີ່ຕັ້ງຂອງບ້ານຢູ່ໄກຈາກເທດສະບານເມືອງ ແລະ ແຂວງພໍສົມຄວນ, ທາງລົດໄປຮອດຍັງຫຍຸ້ງຍາກ ແລະ ບໍ່ມີລົດໂດຍສານແລ່ນຜ່ານ ຈຶ່ງບໍ່ມີການກະຕຸ້ນໃຫ້ຜະລິດ.

4. **ດ້ານເສດຖະກິດ**

- **ລາຍຮັບ**

ລາຍຮັບຕົ້ນຕໍໃນແຕ່ລະປີຂອງປະຊາຊົນ ແມ່ນໄດ້ມາຈາກການເຮັດວຽກໃຊ້ແຮງງານ, ຮອງລົງມາແມ່ນຂາຍເຄື່ອງປ່າຂອງດົງ, ຂາຍສັດປີກ ແລະ ຂາຍປາ ແລະ ຂາຍສັດໃຫຍ່.



ຮູບທີ 3: ລາຍຮັບຈາກການຕົ້ມເຫຼົ້າຂາຍຂອງປະຊາຊົນ




ຮູບທີ 4: ລາຍຮັບຈາກການຂາຍສັດປ່າ

- **ລາຍຈ່າຍຂອງປະຊາຊົນ**

ລາຍຈ່າຍໃນແຕ່ລະປີສ່ວນໃຫຍ່ແມ່ນ ໃຊ້ຈ່າຍໃນການປິ່ນປົວສຸຂະພາບ, ຮອງລົງມາແມ່ນ ເຄື່ອງນຸ່ງຮົ່ມ, ອາຫານ, ການສຶກສາ ແລະ ການກະເສດ.

5. **ດ້ານຂະແໜງການສຶກສາ**

ບ້ານໃໝ່ນາກອກມີໂຮງຮຽນປະຖົມ 1 ແຫ່ງ, ແຕ່ກຸ່ມບ້ານດັ່ງກ່າວແມ່ນຍັງບໍ່ທັນມີໂຮງຮຽນມັດທະຍົມ, ນັກຮຽນເສັງຈົບປະຖົມແລ້ວສ່ວນຫຼາຍບໍ່ສາມາດຮຽນຕໍ່ມັດທະຍົມຕໍ່ໄດ້ ເນື່ອງຈາກບໍ່ມີໂຮງຮຽນຈຶ່ງເຮັດໃຫ້ນັກຮຽນມີການປະລະການຮຽນເປັນຈຳນວນຫຼາຍ. ບັນດາຄູສອນແມ່ນຕ້ອງເດີນທາງມາຈາກເມືອງ. ເສັ້ນທາງໃນການໄປມາບໍ່ສະດວກ ຄູສອນສ່ວນຫຼາຍແມ່ນບໍ່ໄດ້ຜ່ານໂຮງຮຽນສ້າງຄູ ແລະ ບໍ່ທັນໄດ້ຮັບການຝຶກອົບຮົມການຮຽນ-ການສອນແບບໃໝ່. ສະນັ້ນຈຶ່ງມີຜົນກະທົບຕໍ່ກັບວຽກງານການສຶກສາເຮັດໃຫ້ຄຸນນະພາບຂອງການສຶກສາບໍ່ສູງ ເຊິ່ງມັນສະແດງອອກດ້ານຄວາມຮູ້ຂອງນັກຮຽນບໍ່ເໝາະສົມກັບຊັ້ນຮຽນ ເປັນສາເຫດເຮັດໃຫ້ນັກຮຽນຈຳນວນຫຼາຍຄ້າງຫ້ອງ.

ເວົ້າລວມແລ້ວ ສະພາບການສຶກສາຂອງບ້ານດັ່ງກ່າວ ແມ່ນຄວນໄດ້ຮັບການເອົາໃຈໃສ່ ແລະ ປັບປຸງ, ເດັກໃນເກນອາຍຸສ່ວນຫຼາຍບໍ່ມີໂອກາດເຂົ້າໂຮງຮຽນ ສາເຫດຕົ້ນຕໍແມ່ນຂາດແຮງງານຜະລິດພາຍໃນຄອບຄົວ, ອຸປະກອນການຮັບໃຊ້ໃນການຮຽນ-ການສອນແມ່ນຍັງຂາດເຂີນ ແລະ ບໍ່ພຽງພໍ.



ຮູບທີ 5: ໂຮງຮຽນປະຖົມບ້ານໃໝ່ນາກອກ



ຮູບທີ 6: ອຸປະກອນການສຶກສາ

6. **ດ້ານວັດທະນາທຳ - ສັງຄົມ**

ປະຊາຊົນພາຍໃນບ້ານ ແມ່ນມີການດຳລົງຊີວິດ ທີ່ຕິດພັນກັບທຳມະຊາດ ໂດຍອາໄສທຳມະຊາດ ເປັນຫຼັກໃນການທຳມາຫາກິນ ປະຊາຊົນຢູ່ໃນບ້ານມີ 3 ຊົນເຜົ່າຄື: ຊົນເຜົ່າເປຼີາ, ຊົນເຜົ່າເຈັ້ງ , ຊົນເຜົ່າລາວລຸ່ມ ເຊິ່ງມີຮີດຄອງປະເພນີທີ່ແຕກຕ່າງກັນປະຊາຊົນຢູ່ໃນບ້ານສ່ວນຫຼາຍແມ່ນນັບຖືສາສະໜາຜີ. ອາຊີບຕົ້ນຕໍຂອງຊາວບ້ານສ່ວນຫຼາຍແມ່ນການເຮັດນາ, ປູກຝັງລ້ຽງສັດ ແລະ ປະກອບອາຊີບເສີມດ້ວຍ ການປູກພືດລົ້ມລຸກຕາມລະດູການ ເຖິງແມ່ນວ່າຈະມີອຸປະສັກຫຍຸ້ງຍາກປານໃດກໍ່ຕາມ ແຕ່ປະຊາຊົນບັນດາເຜົ່າ ກໍ່ມີມູນເຊື້ອດຸໝັ່ນຂະຫຍັນພຽນໃນການອອກແຮງງານ, ມີຄວາມສາມັກຄີເອື້ອເຟື້ອເພື່ອແຜ່ ແລະ ຮັກສາມູນເຊື້ອຮີດຄອງປະເພນີອັນດີງາມທີ່ເປັນເອກະລັກຂອງເຜົ່າໄວ້ຢ່າງໝັ້ນຄົງ.



ຮູບທີ 7: ການແກ້ພະ(ການເສຍເຄາະ)ຕາມຄວາມເຊື່ອຂອງຊາວບ້ານ

7. **ດ້ານການເມືອງ-ການປົກຄອງ**

ອຳນາດການປົກຄອງຂອງບ້ານປະກອບມີ: ນາຍບ້ານ ແລະ ຮອງນາຍບ້ານ ເຮັດໜ້າທີ່ບໍລິຫານຄຸ້ມຄອງບ້ານ, ມີເລຂາພັກບ້ານ, ເຖົ້າແກ່ແນວໂຮມຂອງບ້ານ. ມີການເຄື່ອນໄຫວວຽກງານສົ່ງເສີມແມ່ຍິງຂອງອົງການຈັດຕັ້ງແມ່ຍິງ.

8. **ດ້ານສາທາລະນະສຸກ**

ດ້ານສາທາລະນະສຸກພາຍໃນບ້ານ : ມີ ອ ພ ບ ບ້ານສາມາດປິ່ນປົວຂັ້ນພື້ນຖານໄດ້, ມີວິດຊຶມໃຊ້ 10 ວິດ, ມີທີມງານແພດບໍ່ມີພົມແດນ ແມ່ນໄດ້ລົງມາກວດພະຍາດໃຫ້ປະຊາຊົນ ແລະ ມອບຢາປົວພະຍາດໃຫ້ແກ່ປະຊາຊົນ.



ຮູບທີ 8: ການມອບຢາປິ່ນປົວພະຍາດໃຫ້ແກ່ປະຊາຊົນຈາກອົງການສຸຂະພາບບໍ່ມີເຂດແດນ

- **ປັດໄຈຕ່າງໆທີ່ສົ່ງຜົນກະທົບໃຫ້ແກ່ສຸຂະພາບຂອງປະຊາຊົນ:**

ພູມສັນຖານຂອງບ້ານແມ່ນຕັ້ງໄກຈາກຕົວເມືອງ ປະຊາຊົນສ່ວນຫຼາຍປະກອບອາຊີບເຮັດນາ, ເຮັດໄຮ່, ລ້ຽງສັດ, ປູກຝັງ ແລະ ອື່ນໆ. ການດຳລົງຊີວິດຂອງຊຸມຊົນໃນໄລຍະຜ່ານມາ ແມ່ນບໍ່ທັນຖືກຕ້ອງຕາມຫຼັກອະນາໄມ 3 ສະອາດໂດຍສະເພາະແມ່ນ ສ່ວນຫຼາຍແມ່ນຍັງມີລະດັບການສຶກສາຂ້ອນຂ້າງຕໍ່າ, ເວລາເຈັບເປັນແມ່ນຍັງມີຄວາມເຊື່ອຖືຕາມຮີດຕາມຄອງອັນເກົ່າແກ່, ບາງຄັ້ງກໍ່ໃຊ້ຢາພື້ນເມືອງ, ຕູ້ຢາປະຈຳບ້ານ, ຖ້າອາການບໍ່ດີຂື້ນຈຶ່ງນຳໄປໃຊ້ບໍລິການສຸກສາລາ, ໂຮງໝໍເມືອງ ໂຮງໝໍແຂວງ ໂດຍອີງຕາມສະພາບເສດຖະກິດຂອງຄອບຄົວ. ການສະໜອງນ້ຳສະອາດໃຫ້ປະຊາຊົນໄດ້ຊົມໃຊ້ເຫັນວ່າບໍ່ທັນພຽງພໍຕາມຄວາມຕ້ອງການຂອງຊຸມຊົນຊຶ່ງເປັນສາເຫດໜຶ່ງທີ່ພາໃຫ້ເກີດມີພະຍາດຕ່າງໆຂື້ນຕາມລະດູການພາໃຫ້ມີການເຈັບເປັນຫຼາຍພໍສົມຄວນໃນແຕ່ລະປີ ແລະ ຈຳນວນໜຶ່ງແມ່ນມີການເສຍຊີວິດ.



ຮູບທີ 9: ຄອງລະບາຍນ້ຳເສຍຢູ່ໃຈກາງໝູ່ບ້ານ

9. **ດ້ານການຄົມມະນາຄົມ**

ບ້ານໃໝ່ນາກອກຕັ້ງຫ່າງຈາກເມືອງຊານໄຊ 12 ກມ ສາມາດເຂົ້າເຖິງບ້ານໄດ້ 2 ເສັ້ນທາງ , ເສັ້ນທາງໃນການເຂົ້າຫາບ້ານແມ່ນຂ້ອນຂ້າງລຳບາກ ເນື່ອງຈາກເສັ້ນທາງເຂົ້າຫາບ້ານແມ່ນຕ້ອງໄດ້ຂ້າມຫ້ວຍ ແລະ ເສັ້ນທາງກໍ່ຍັງບໍ່ທັນໄດ້ປັບປຸງເທື່ອ. ໃນຊ່ວງລະດູຝົນແມ່ນເຂົ້າໄປໄດ້ຍາກ ແລະ ບໍ່ມີລົດໂດຍການແລ່ນຜ່ານ.



ຮູບທີ 10: ການເດີນທາງເຂົ້າຫາບ້ານ

ຮູບທີ 11: ເສັ້ນທາງເຂົ້າຫາບ້ານ






ຮູບທີ 11: ເສັ້ນທາງເຂົ້າຫາບ້ານ

10. **ດ້ານການເຂົ້າຫາການບໍລິການ**

ການເຂົ້າຫາການບໍລິການຂອງບ້ານ ແມ່ນມີໂຄງການຝາກເງິນປະຢັດ 7 ກຸ່ມ, ມີໂຄງການພັດທະນາຢູ່ໃນບ້ານ 4 ໂຄງການ, ມີກິດຈະກຳຂອງພາກສ່ວນເອກະຊົນ ຫຼື ທຸລະກິດເອກະຊົນຢູ່ພາຍໃນບ້ານ 2 ໂຄງການ(ສ້າງເສັ້ນທາງ, ປູກຢາງພາລາ, ຮ້ານຂາຍເຄື່ອງຍ່ອຍ), ມີສັດຕະວະແພດ ຫຼື ການບໍລິການອື່ນໆ ທາງດ້ານກະສິກຳ 3 ທ່ານ ແລະ ບໍ່ມີຕະຫຼາດ.



ຮູບທີ 12: ພະນັກງານກະສິກຳລົງຈັດຕັ້ງກອງປະຊຸມເກັບຂໍ້ມູນການຈັດຕັ້ງກຸ່ມກະສິກຳຂອງບ້ານ

**4.1.2. ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ ທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມທີ່ເປັນຂໍ້ຈຳກັດໃຫ້ແກ່ປະຊາຊົນ.**

1) **ຂໍ້ສະດວກດ້ານສິ່ງແວດລ້ອມ**

- ມີພື້ນທີ່ປ່າໄມ້ຈຳນວນຫຼາຍ
- ຢູ່ໄກ້ກັບແຫຼ່ງຊັບພະຍາກອນທຳມະຊາດ ສະດວກສະບາຍໃນການຊອກຫາອາຫານເຊັ່ນ: ເກັບເຫັດ, ຜັກ, ຫາປາ...
- ມີສາຍນ້ຳຕະຫຼອດລະດູແລ້ງ ແລະ ຝົນທີ່ສາມາດສ້າງຊົນລະປະທານ ຝາຍກັ້ນນ້ຳເພື່ອຮັບໃຊ້ການຜະລິດເຂົ້ານາແຊງ
- ມີເນື້ອທີ່ໃນການບຸກເບີກກວ້າງຂວາງ
- ມີທົ່ງຫຍ້າລ້ຽງສັດກວ້າງຂວາງເໝາະສົມກັບການລ້ຽງສັດ



ຮູບທີ 13: ຊັບພະຍາກອນປ່າໄມ້ພາຍໃນບ້ານ

2) **ຂໍ້ສະດວກດ້ານເສດຖະກິດ-ສັງຄົມ**

- ມີໂຄງການຝາກເງິນປະຢັດ ແລະ ສິນເຊື່ອ
- ມີໂຮງຮຽນປະຖົມ 1 ແຫ່ງ
- ມີພາກສ່ວນລັດ ແລະ ເອກະຊົນເຂົ້າມາຊ່ວຍເຫຼືອດ້ານແນວພັນ ແລະ ເຕັກນິກໃຫ້ແກ່ຊາວບ້ານ
- ມີ ອ ພ ບ ບ້ານ( ສຳລັບປິ່ນປົວຊາວບ້ານ)

3) **ຂໍ້ຫຍຸ້ງຍາກດ້ານສິ່ງແວດລ້ອມ**

- ໄພແຫ້ງແລ້ງຝົນບໍ່ຕົກຕາມລະດູເຮັດໃຫ້ປະຊາຊົນບໍ່ສາມາດເຮັດນາໄດ້
- ເກີດໄພທຳມະຊາດຂົ່ມຂູ່ ( ແຫ້ງແລ້ງ,ນ້ຳຖ້ວມ) ຜົນຜະລິດເຂົ້ານາປີຕົກຕ່ຳ
- ນ້ຳເຊຂະໝານທີ່ເຄີຍໃຊ້ເປີເປື້ອນຊາວບ້ານບໍ່ສາມາດໃຊ້ນ້ຳໄດ້
- ນ້ຳສະອາດບໍ່ພຽງພໍຕໍ່ການຊົມໃຊ້
- ດິນໃນການຜະລິດບໍ່ງາມ ຍ້ອນປະຊາຊົນຍັງບໍ່ທັນຮູ້ເຕັກນິກໃນການປັບປຸງດິນ (ເຮັດໃຫ້ຜົນຜະລິດຕົກຕ່ຳ)

4) **ຂໍ້ຫຍຸ້ງຍາກດ້ານເສດຖະກິດ-ສັງຄົມ**

- ບໍ່ມີຕະຫຼາດຈຳໜ່າຍສິນຄ້າ
- ໄລຍະທາງຈາກບ້ານຫາຕະຫຼາດແມ່ນໄກປະຊາຊົນບໍ່ສາມາດເອົາສິນຄ້ານຳໄປຂາຍໄດ້

- ເສັ້ນທາງຈາກບ້ານຫາຕົວເມືອງແມ່ນໄກ ແລະ ບໍ່ສະດວກສະບາຍໃນ ຊ່ວງລະດູຝົນ ເສັ້ນທາງຈາກບ້ານເຂົ້າຫາເມືອງແມ່ນລຳບາກ
- ບໍ່ມີໄຟຟ້າ
- ນ້ຳບາດານບໍ່ພຽງພໍໃນການຊົມໃຊ້
- ບໍ່ມີນ້ຳປະປາ
- ອຸປະກອນໃນການຮຽນ-ການສອນບໍ່ພຽງພໍ
- ຄູສອນແມ່ນມາຈາກຕົວເມືອງເດີນທາງໄກ ຫຍຸ້ງຍາກໃນການໄປມາ
- ບໍ່ມີໂຮງຮຽນມັດທະຍົມ( ເສັ້ນທາງຈາກບ້ານຫາໂຮງຮຽນແມ່ນໄກ 12 km)
- ອ ພ ບ ບ້ານບໍ່ມີຢາພຽງພໍຕໍ່ກັບຄວາມຕ້ອງການ
- ໂຮງໝໍແມ່ນຢູ່ໄກ
- ບໍ່ມີຊົນລະປະທານ
- ປະຊາຊົນສ່ວນຫຼາຍແມ່ນຂາດສັດລາກແກ່
- ອຸປະກອນໃນການຜະລິດບໍ່ພຽງພໍ່
- ຊາວບ້ານບໍ່ມີທຶນໃນການຜະລິດກະສິກຳ

### 4.1.3. ການວິເຄາະຈຸດດີ, ຈຸດອ່ອນ, ໂອກາດ, ຄວາມສ່ຽງ

**1) ຈຸດດີ**

- ປະຊາຊົນມີຄວາມສາມາຄີກັນດີ
- ປະຊາຊົນໄດ້ເຂົ້າຮ່ວມກອງປະຊຸມທຸກຄັ້ງ
- ແຮງງານຊາວໜຸ່ມມີຫຼາຍ

**2) ຈຸດອ່ອນ**

- ມີປະຊາຊົນຈຳນວນໜຶ່ງບໍ່ມາຮ່ວມກອງປະຊຸມ ຫຼື ວຽກງານການຝຶກອົບຮົມຕ່າງໆ
- ປະຊາຊົນສ່ວນຫຼາຍແມ່ນລໍຖ້າແຕ່ການຊ່ວຍເຫຼືອ
- ສ່ວນຫຼາຍແມ່ນບໍ່ມີວິດຖ່າຍ( ກໍ່ໃຫ້ເກີດພະຍາດຖອກທ້ອງ)
- ນັກຮຽນເສັງຈົບປະຖົມແລ້ວສ່ວນຫຼາຍແມ່ນບໍ່ສາມາດສືບຕໍ່ມັດທະຍົມໄດ້ເນື່ອງຈາກບໍ່ມີໂຮງ ຮຽນ(ໂຮງຮຽນມັດຖະຍົມແມ່ນມີພຽງແຕ່ຢູ່ໃນເມືອງ ຊຶ່ງຕ້ອງໄດ້ເດີນທາງໄກເຖິງ 12 Km ) ເຮັດໃຫ້ນັກຮຽນປະລະການຮຽນ.
- ຊາວບ້ານຂາດຄວາມຮູ້ພື້ນຖານໃນການປູກພືດ, ລ້ຽງສັດ
- ພໍ່ແມ່ນັກຮຽນບໍ່ເຫັນຄວາມສຳຄັນຂອງການສຶກສາ
- ຊາວບ້ານແມ່ນຮັບເອົາຄວາມຮູ້ໃໝ່ໄດ້ຍາກ
- ຂາດການວາງແຜນຄອບຄົວ
- ເດັກນ້ອຍອາຍຸ13-14 ສ່ວນຫຼາຍແມ່ນສ້າງຄອບຄົວ

- ເວລາເຈັບເປັນສ່ວນຫຼາຍແມ່ນຍັງໃຊ້ວິທີການປິ່ນປົວແບບດັ້ງເດີມ ( ປິ່ນປົວຕາມຮີດຕາມຄອງ) ແລະ ມີບາງຈຳນວນໄປປິ່ນປົວຕາມໂຮງໝໍ
- ປະຊາຊົນຂາດຄວາມຮູ້ດ້ານສຸຂະອະນາໄມ

3) **ໂອກາດ**

- ມີອົງການຕ່າງໆເຂົ້າມາຊ່ວຍເຫຼືອເຮັດໃຫ້ຊາວບ້ານມີໂອກາດທີ່ຈະໄດ້ຮັບການພັດທະນາ
- ມີຕົວແບບໃນການສ້າງພະນັກງານຂັ້ນກຸ່ມບ້ານທີ່ມີປະສິດທິຜົນ.

4) **ຄວາມສ່ຽງ**

- ຊາວບ້ານຍັງຂາດຄວາມຮູ້ ສິດທິໃນການອອກແຮງງານ ມີຄວາມສ່ຽງຕໍ່ການຖືກໂກງແຮງງານ
- ເດັກນ້ອຍມີຄວາມສ່ຽງຕໍ່ການຂາດທາດອາຫານ
- ບ້ານຢູ່ຕິດກັບແຄມນ້ຳເຊຂະໜານມີຄວາມສ່ຽງຕໍ່ໄພທຳມະຊາດເຊັ່ນ: ນ້ຳປ່າໄຫຼຫຼາກ, ນ້ຳຖ້ວມ, ດິນເຊາະເຈື່ອນ
- ແມ່ນ້ຳເຊຂະໜານທີ່ເຄີຍໃຊ້ ເປິເປື້ອນ ປະຊາຊົນທີ່ຊົມໃຊ້ມີຄວາມສ່ຽງຕໍ່ການເກີດພະຍາດ ແລະ ໄດ້ຮັບສານພິດໄດ້ ( ສາເຫດຍ້ອນການສ້າງເຂື່ອນ ແລະ ການຂຸດຄົ້ນຄຳ)
- ປະຊາຊົນສ່ວນຫຼາຍແມ່ນບໍ່ຄ່ອຍຕົ້ມນ້ຳກິນມີຄວາມຊ່ຽງກໍ່ໃຫ້ເກີດພະຍາດ
- ການຖືພາ ແລະ ການເກີດລູກມີຄວາມສ່ຽງຍ້ອນຍັງຂາດຄວາມຮູ້ດ້ານການແພດ
- ລະດັບຄວາມຮູ້ຄວາມສາມາດຂອງປະຊາຊົນຈຳນວນໜຶ່ງແມ່ນຍັງຕ່ຳ, ຄວາມຕື່ນຕົວ ແລະ ຄວາມສະດຸ້ງໄວຕໍ່ມັດຕິຄຳສັ່ງ, ລະບຽບກົດໝາຍແມ່ນບໍ່ທັນເຮັດໄດ້ດີເທົ່າທີ່ຄວນ
- ດິນຂອງປະຊາຊົນຖືບຸກລຸກຈາກພວກນາຍທຶນ( ປູກຢາງພາລາ )

4.1.4. **ທ່າແຮງພື້ນຖານທາງດ້ານເສດຖະກິດຂອງບ້ານມີຄີ :**

1. **ທ່າແຮງທາງດ້ານຊັບພະຍາກອນທຳມະຊາດ**

(1) ມີພື້ນທີ່ປ່າໄມ້, ເຄື່ອງປ່າຂອງດົງ ທີ່ເປັນສິນຄ້າ ເຊັ່ນ : ໜໍ່ໄມ້, ໝາກຈອງ...

(2) ສາຍນ້ຳມີນ້ຳຕະຫຼອດລະດູແລ້ງ ແລະ ລະດູຝົນ ທີ່ສາມາດສ້າງຊົນລະປະທານ ຫຼື ຝາຍ ກັນນ້ຳ ເພື່ອຮັບໃຊ້ ການຜະລິດເຮັດນາແຊງ.

(3) ທົ່ງຫຍ້າລ້ຽງສັດທີ່ກວ້າງຂວາງສາມາດລ້ຽງສັດ

(4) ມີເນື້ອທີ່ສາມາດບຸກເບີກນາໄດ້ຢ່າງກວ້າງຂວາງ.

(5) ຊາວບ້ານສ່ວນໃຫຍ່ທຳການຜະລິດລະດູແລ້ງ

2. **ທ່າແຮງດ້ານການຜະລິດ ແລະ ກຳລັງການຜະລິດ**
   (1) ຊາວບ້ານປູກເຂົ້າເພື່ອກິນ ແລະ ຂາຍ
   (2) ຊາວບ້ານສ່ວນໃຫຍ່ສ້າງລາຍຮັບຈາກການລ້ຽງສັດໃຫຍ່ປະເພດ ຄວາຍ, ງົວ, ໝູ ແລະ ສັດນ້ອຍ, ສັດປີກ ເພື່ອປ້ອນຕະຫຼາດ ແລະ ຂາຍທົ່ວໄປ
   (3) ຊາວບ້ານຈຳນວນໜຶ່ງປູກພືດລະດູແລ້ງ ເຊັ່ນ : ໝາກເຜັດ, ໝາກເຂືອ...
3. **ທ່າແຮງດ້ານພື້ນຖານໂຄງລ່າງ**
   (1) ມີໂຮງຮຽນປະຖົມຖາວອນ
   (2) ມີຫ້ອງປະຊຸມຂອງບ້ານ
   (3) ມີອົງການຈັດຕັ້ງຂັ້ນບ້ານຄົບຊຸດ
   (4) ມີການປະກອບສ່ວນເງິນເຂົ້າກອງທຶນບ້ານ

### 4.1.5. ເຫດການທີ່ບໍ່ຄາດຄິດທີ່ເກີດຂຶ້ນພາຍໃນບ້ານ (Shocks)

**(1) ດ້ານສິ່ງແວດລ້ອມ**

- ລົມແຮງ
- ໄພນ້ຳຖ້ວມ(ພະຍຸເກດສະໜາ)
- ໄພແຫ້ງແລ້ງ
- ນ້ຳເຊຂະໜານເປີເປື້ອນ ແລະ ບົກແຫ້ງ

**(2) ດ້ານເສດຖະກິດ**

- ການຍົກເລີກສັນຍາຮັບຊື້ສາລີ, ລາຄາສາລີຕົກຕ່ຳ(ບໍ່ຮັບຊື້ຕາມລາຄາທີ່ຕົກລົງໄວ້)
- ສັດລ້ຽງເປັນພະຍາດ
- ການໂກງຄ່າແຮງງານ(ປູກຢາງພາລາ)
- ດິນທຳການຜະລິດຂອງຊາວກະສິກອນໄດ້ຮັບຜົນກະທົບຈາກສວນຢາງພາລາ



ຮູບທີ 14: ໄພແຫ້ງແລ້ງ ຝົນບໍ່ຕົກຕາມລະດູການ ປະຊາຊົນບໍ່ສາມາດປູກເຂົ້າໄດ້



ຮູບທີ 15: ດິນປຸກສ້າງໂຍດ(ເຈື່ອນ)

### 4.1.6. ກໍລະນີສຶກສາລະດັບຄອບຄົວ

#### 1). ຄອບຄົວກຸ້ມກິນ (ຄອບຄົວທ້າວ ວົງ)



ຮູບທີ 16: ຄອບຄົວກຸ້ມກິນ

❖ ຂໍ້ມູນພື້ນຖານຂອງຄອບຄົວ

ຄອບຄົວທ້າວ. ວົງ ຖືກຈັດເປັນຄອບຄົວທີ່ມີຖານະກຸ້ມກິນ ອີງຕາມການຈັດປະເພດຄອບຄົວຂອງບ້ານ, ອາຊີບຫຼັກຂອງຄອບຄົວແມ່ນຂາຍເຄື່ອງແຫ້ງ ແລະ ເຮັດນາ, ເປັນຊົນເຜົ່າລາວລຸ່ມ, ຖືສາສະໜາພຸດ. ທ້າວ ວົງ ອາຍຸ 56 ປີ ອາຊີບຊາວນາ. ສ່ວນເມຍອາຍຸ 50 ປີ, ອາຊີບຊາວນາ ແລະ ຄ້າຂາຍເຄື່ອງແຫ້ງ. ມີລູກທັງໝົດ 8 ຄົນ ຊຶ່ງລູກຂອງເພິ່ນ ແມ່ນໄດ້ເຂົ້າໂຮງຮຽນໝົດທຸກຄົນ ແລະ ໄດ້ຮຽນຕໍ່ຢູ່ຊັ້ນມັດທະຍົມທັງໝົດ, ບາງຄົນກໍ່ໄດ້ສ້າງຄອບຄົວ ແລະ ຍ້າຍໄປຢູ່ໃນຕົວເມືອງ. ເນື່ອງຈາກເສັ້ນທາງຈາກບ້ານຫາໂຮງຮຽນແມ່ນໄກ ດັ່ງນັ້ນ ລູກຂອງພໍ່ວົງ ແມ່ນຕ້ອງໄປພັກຢູ່ໃນຕົວເມືອງ. ເມື່ອຮອດເວລາເຮັດນາ ພວກເຂົາຈິ່ງກັບມາຊ່ວຍພໍ່ແມ່ເຮັດນາ.

ເຮືອນຂອງ ພໍ່ວົງ ຕັ້ງຢູ່ໃຈກາງບ້ານ ເປັນເຮືອນໄມ້ແປ້ນ, ມຸງດ້ວຍສັງກະສີ. ນ້ຳທີ່ໃຊ້ແມ່ນນ້ຳບາດານ ແລະ ນ້ຳເຊ, ສຳລັບນ້ຳກິນ ແມ່ນກິນນ້ຳບາດານ ໂດຍໄດ້ພາກັນຕົ້ມ. ພະລັງງານທີ່ໃຊ້ແມ່ນເຄື່ອງປັ່ນໄຟຟ້າ ແລະ ກະບອງ

ການທຳມາຫາກິນຂອງຄອບຄົວພໍ່ວິງ ແມ່ນເຮັດນາເປັນອາຊີບຫຼັກ ແລະ ຄ້າຂາຍ, ການທຳມາຫາກິນ ສ່ວນຫຼາຍແມ່ນຕິດພັນກັບທຳມະຊາດ. ດັ່ງນັ້ນອາຫານທີ່ນຳມາປຸງແຕ່ງໃນແຕ່ລະມື້ແມ່ນມາຈາກການຫາປາ, ເກັບຜັກ, ເກັບໜໍ່ໄມ້ ແລະ ເຄື່ອງປ່າຂອງດົງອື່ນໆເພື່ອນຳມາກິນ ແລະ ຂາຍ ເພື່ອສ້າງລາຍຮັບເພີ່ມໃຫ້ຄອບຄົວ. ເຊິ່ງຜັກທີ່ປູກແມ່ນປູກເພື່ອຂາຍ ແລະ ປຸງແຕ່ງອາຫານພາຍໃນຄອບຄົວ, ຜັກທີ່ປູກແມ່ນມີ ໝາກເຜັດ, ໝາກເຂືອ, ຜັກບົ່ວ, ຜັດຫຽມຕ່າງໆ.

ເສດຖະກິດຄອບຄົວຂອງພໍ່ວິງແມ່ນ ການຂາຍເຄື່ອງແຫ້ງ, ຂາຍໝາກເຜັດ, ໝາກເຂືອ, ຂາຍກະບອງ. ສະເລ່ຍລາຍຮັບໃນແຕ່ລະເດືອນປະມານ 400.000-600.000 ກີບ. ສ່ວນລາຍຈ່າຍຫຼັກ ຂອງຄອບຄົວ ແມ່ນການສົ່ງລູກຮຽນຕໍ່ຊັ້ນມັດທະຍົມ.

❖ **ເຫດການທີ່ບໍ່ຄາດຄິດທີ່ເກີດຂຶ້ນກັບຄອບຄົວ**

- **ດ້ານສິ່ງແວດລ້ອມ:**
  - ✓ **ໄພນ້ຳຖ້ວມ**

ໄພນ້ຳຖ້ວມໄດ້ສົ່ງຜົນກະທົບຕໍ່ກັບຜົນຜະລິດຂອງຄອບຄົວເຮັດໃຫ້ (ເຂົ້າ, ພືດພັນທັນຍາຫານຕ່າງໆ) ເສຍຫາຍ, ສັດລ້ຽງລົ້ມຕາຍແລະ ເປັນພະຍາດເປັນຕົ້ນແມ່ນໄກ່ ແລະ ເປັດ ຈຳນວນ 70 ໂຕສູນຫາຍ, ໜອງປາໄດ້ຮັບຜົນກະທົບ, ເຮືອນຊານເປ່ເພ ແລະ ເສຍຫາຍ, ດິນນາ 400m ໄດ້ຮັບຄວາມເສຍຫາຍໜັກໜ່ວງ

  - ✓ **ໄພແຫ້ງແລ້ງ**

ໄພແຫ້ງແລ້ງທີ່ເກີດຂຶ້ນໄດ້ສົ່ງຜົນເຮັດໃຫ້ດິນແຫ້ງແລ້ງ ປູກພືດບໍ່ຂຶ້ນ, ຊັບພະຍາກອນທຳມະຊາດຂາດຄວາມອຸດົມສົມບູນ ບໍ່ສາມາດເຮັດນາໄດ້ເພາະຝົນບໍ່ຕົກ ແລະ ບໍ່ມີຊົນລະປະທານ, ຜົນລະປູກກໍ່ຫ່ຽວແຫ້ງ.

- **ດ້ານເສດຖະກິດ:**
  - ✓ **ສັດເປັນພະຍາດລະບາດ**

ໃນແຕ່ລະປີມີ ສັດລ້ຽງ ເປັນພະຍາດຕາຍເປັນຈຳນວນຫຼວງຫຼາຍ ເປັນຕົ້ນແມ່ນ ເປັດ ແລະ ໄກ່ລົ້ມຕາຍເຖິງ 140 ໂຕ, ຄວາຍ 2 ໂຕ, ໝູ 2 ໂຕ. ຄອບຄົວເສຍທຶນຮອນໃນການລ້ຽງສັດ ແລະ ຍັງຂາດເຂີນອາຫານອີກດ້ວຍ.

❖ **ວິທີການແກ້ໄຂບັນຫາຕໍ່ກັບເຫດການທີ່ເກີດຂຶ້ນ**

ປັດໄຈທີ່ຊ່ວຍໃນການແກ້ໄຂບັນຫາປະກອບມີ:

- **ດ້ານຄວາມຫຼາກຫຼາຍ**

✓ **ດ້ານຊັບພະຍາກອນ :**

ດ້ານຊັບພະຍາກອນທີ່ມີພາຍໃນບ້ານ ທີ່ຄອບຄົວຫາໄດ້ແມ່ນການຫາປາ, ເກັບຜັກ ແລະ ຊອກຫາເຄື່ອງປ່າຂອງດົງຂາຍ ແລະ ກິນ. ລາຍຮັບຂອງຄອບຄົວ ທີ່ໄດ້ຈາກການຂາຍຊັບພະຍາກອນທຳມະຊາດ ແມ່ນປະມານ 30.000-50.000 ກີບ/ເດືອນ.

✓ **ດ້ານກິດຈະກຳ :**

ກິດຈະກຳຂອງສະມາຊິກໃນຄອບຄົວແມ່ນການເຮັດນາ, ການຄ້າຂາຍ, ການຮັບຊື້ເຫຼັກ, ຂີ້ຊີ ແລະ ກະບອງເພື່ອໄປຂາຍຕໍ່ໃນຕົວເມືອງ, ການປູກພືດ-ລ້ຽງສັດ ເພື່ອຂາຍເປັນສິນຄ້າ, ການຕົ້ມເຫຼົ້າຂາຍ, ການຫາປາ ແລະ ເກັບເຄື່ອງປ່າຂອງດົງຂາຍ, ບາງຄັ້ງ ພໍ່ວົງ ກໍ່ອອກໄປເປັນກຳມະກອນຮັບຈ້າງເສຍຫຍ້າ ແລະ ປູກຢາງພາລາ. ກິດຈະກຳເຫຼົ່ານີ້ແມ່ນຖືວ່າໄດ້ສ້າງລາຍຮັບໃຫ້ແກ່ຄອບຄົວ ແລະ ສາມາດຊ່ວຍສ້າງຂີດຄວາມສາມາດໃນການຟື້ນຕົວຂອງຄອບຄົວໄດ້ ເຊິ່ງລາຍຮັບລວມຈາກກິດຈະກຳຂອງຄອບຄົວໃນ ແຕ່ລະເດືອນແມ່ນ 400.000-600.000 ກີບ/ເດືອນ.

- **ດ້ານຄວາມຕື່ນຕົວ**

✓ **ທາງເລືອກ :**

ທາງເລືອກໃນການປັບຕົວຕໍ່ກັບເຫດການທີ່ບໍ່ຄາດຄິດ (Shocks) ດັ່ງກ່າວທີ່ເກີດຂຶ້ນກັບຄອບຄົວ ແມ່ນການຄ້າຂາຍ, ປູກພືດກະສິກຳ-ລ້ຽງສັດ, ການເຮັດວຽກກຳມະກອນ, ເນື່ອງຈາກຄອບຄົວມີແຮງງານຂ້ອນຂ້າງຫຼາຍ. ດັ່ງນັ້ນທາງເລືອກຫຼັກທີ່ຊ່ວຍໃນການຟື້ນຕົວ ຂອງຄອບຄົວຕໍ່ກັບບັນຫາທີ່ເກີດຂຶ້ນ ແມ່ນການຄ້າຂາຍ, ຮອງລົງມາແມ່ນການປູກພືດ ແລະ ລ້ຽງສັດ. ສຳລັບສັດລ້ຽງທີ່ລົ້ມຕາຍ, ພືດຜັກທີ່ຖືກທຳລາຍກໍ່ໄດ້ມີການລົງທຶນໃໝ່.

✓ **ຄວາມສ່ຽງ :**

ໃນອານາຄົດຖ້າຫາກຄອບຄົວພົບກັບເຫດການຮ້າຍແຮງ (Shocks) ທີ່ເກີດຂຶ້ນ ສ້າງຄວາມສ່ຽງທີ່ຮ້າຍແຮງທີ່ສຸດແມ່ນ ໄພອຶດຫິວ, ມີການເຈັບປ່ວຍ, ການລະບາດຂອງພະຍາດ ທີ່ສົ່ງຜົນຕໍ່ຊີວິດການເປັນຢູ່ຂອງຄອບຄົວ ອັນເນື່ອງມາຈາກການປ່ຽນແປງສະພາບດິນຟ້າອາກາດ. ຜົນຜະລິດຂອງຄອບຄົວອາດຕົກຕ່ຳ, ລາຍຮັບຂອງຄອບຄົວທີ່ໄດ້ຈາກການເຮັດນາ, ການຄ້າຂາຍ ແລະ ການປູກ-ຝັງລ້ຽງສັດອາດລຸດລົງ.

- **ດ້ານຄວາມສາມາດໃນບຸກຄົນ**
  - ✓ ***ການສ້າງທາງເລືອກ :***

ດ້ານຄວາມສາມາດຂອງບຸກຄົນໃນຄອບຄົວຕໍ່ການສ້າງທາງເລືອກ ແມ່ນມີຄວາມຊໍານິຊໍານານໃນການຄ້າຂາຍ, ມີຄວາມຮູ້ເຕັກນິກໃນການປູກຝັງ-ລ້ຽງສັດ, ມີຫົວຄິດປະດິດສ້າງ ແລະ ການຊອກຫາເຄື່ອງປ່າຂອງດົງຂາຍ.

❖ **ຂີດຄວາມສາມາດໃນການຟື້ນຕົວ**

ຂີດຄວາມສາມາດໃນການປັບຕົວຂອງຄອບຄົວຂ້ອນຂ້າງສູງ ເນື່ອງຈາກປັດໃຈທີ່ຊ່ວຍສ້າງຂີດຄວາມສາມາດໃນການປັບຕົວຂອງຄອບຄົວມີຫຼາຍ ບໍ່ວ່າຈະເປັນ ທາງດ້ານທຶນ, ລະດັບຄວາມຮູ້ຄວາມສາມາດຂ້ອນຂ້າງດີ, ຮູ້ເຕັກນິກໃນການປູກຝັງ-ລ້ຽງສັດ, ມີອາຊີບທີ່ໝັ້ນຄົງ ແລະອື່ນໆ. ເຖິງແມ່ນວ່າຄອບຄົວຈະພົບກັບເຫດການທີ່ບໍ່ຄາດຄິດ (Shocks) ທີ່ສົ່ງຜົນກະທົບຕໍ່ຄອບຄົວກໍຕາມແຕ່ມັນກໍ່ເປັນການສູນເສຍທີ່ສາມາດປົວແປງ ແລະ ແກ້ໄຂໄດ້. ເມືອເກີດເຫດການດັ່ງກ່າວ ປັດໃຈຕ່າງໆກໍ່ຈະເຮັດໃຫ້ຄອບຄົວມີຂີດຄວາມສາມາດໃນການຟື້ນຕົວໄດຂ້ອນຂ້າງສູງ ລະບົບພື້ນຖານຄອບຄົວສາມາດຄົງຕົວໄດ້ ເຖິງວ່າສະພາບແວດລ້ອມຈະປ່ຽນແປງໄປກໍ່ຕາມ.

❖ **ຄວາມຄິດເຫັນທົ່ວໄປ**

- **ຄວາມຄິດເຫັນຕໍ່ກັບຜົນກະທົບທີ່ເກີດຂຶ້ນ**

ເຫດການທີ່ເກີດຂຶ້ນ ແມ່ນໄດ້ສົ່ງຜົນກະທົບຕໍ່ກັບສະພາບຊີວິດການເປັນຢູ່ຂອງຄອບຄົວເປັນຕົ້ນແມ່ນ :

- ຜົນຜະລິດເຂົ້າຕົກຕໍ່າ
- ພືດຜັກສວນຄົວເສຍຫາຍ
- ບ້ານເຮືອນເພພັງ
- ຂາດນໍ້າກິນ ນໍ້າໃຊ້
- ຂາດຄວາມອຸດົມສົມບູນທາງທໍາມະຊາດ
- ສັດເປັນພະຍາດລະບາດ
- ຄົນເຈັບປ່ວຍ, ເກີດພະຍາດ ແລະ ຮ້າຍແຮງກວ່ານັ້ນຄືຜົນກະທົບດ້ານຈິດໃຈ

- **ຄວາມກັງວົນ ຂອງຄອບຄົວໃນອະນາຄົດ**

ໃນອະນາຄົດຂ້າງໜ້າສິ່ງທີ່ຄອບຄົວກັງວົນທີ່ສຸດແມ່ນ :

- ດ້ານການປ່ຽນແປງສະພາບດິນຟ້າອາກາດ(ຝົນຟ້າບໍ່ຕົກຕາມລະດູການ, ອາກາດຮ້ອນ)
- ດ້ານຜົນຜະລິດບໍ່ໄດ້ຮັບຜົນດີ
- ການສ້າງລາຍຮັບໃຫ້ຄອບຄົວ

- ການເຂົ້າເຖິງສາທາລະນະສຸກ
- ການສຶກສາຂອງລູກຫຼານ

2). ຄອບຄົວປານກາງ (ຄອບຄົວທ້າວ. ຄຳເປັງ)



ຮູບທີ 17: ຄອບຄົວປານກາງ

## ❖ ຂໍ້ມູນພື້ນຖານຂອງຄອບຄົວ

ຄອບຄົວທ້າວ. ຄຳເປັງເປັນຄອບຄົວທີ່ມີຖານະປານກາງ ອີງຕາມການຈັດປະເພດຂອງບ້ານ , ຖືສາສະໜາຜີ. ທ້າວ ຄຳເປັງ ເປັນຄົນເຜົ່າເປຼີາ, ອາຍຸ 55 ປີ ອາຊີບຊາວນາ. ສ່ວນເມຍຂອງເພິ່ນແມ່ນ ນາງ ມະນີວອນເປັນຄົນລາວລຸ່ມ, ອາຍຸ 50 ປີ, ອາຊີບຊາວນາ. ຄອບຄົວຂອງເພິ່ນອາໄສຢູ່ນຳກັນຫຼາຍຄົນ, ມີລູກທັງໝົດ 8 ຄົນ ຍິງ 6, ຊາຍ 2 ຄົນ ແຕ່ບາງຄົນກໍ່ສ້າງຄອບຄົວແລ້ວ ແລະ ຍ້າຍໄປຢູ່ບ່ອນໃໝ່ ຊຶ່ງໃນນີ້ 3 ຄົນແມ່ນໄດ້ເຂົ້າໂຮງຮຽນ, ຮຽນໜັງສືຮອດຂັ້ນປະຖົມ, ສ່ວນຄົນອື່ນໆ ແມ່ນບໍ່ໄດ້ຮຽນ ແລະ ບໍ່ຮູ້ໜັງສືເລີຍ.

ເຮືອນຂອງທ້າວຄຳເປັງ ຕັ້ງຢູ່ແຄມແມ່ນ້ຳເຊຂະໜານ ເປັນເຮືອນຮ້ານ, ມຸງດ້ວຍສັງກະສີ ແລະ ແອ້ມດ້ວຍໄມ້ແປ້ນ, ເຮືອນຂ້ອນຂ້າງຫຼັງນ້ອຍ ແລະ ຢູ່ຮ່ວມກັນຫຼາຍຄົນ. ເນື່ອງຈາກຢູ່ໄກ້ນ້ຳເຊ

ຈຶ່ງໃຊ້ທັງນ້ຳເຊ ແລະ ນ້ຳບາດານ, ສຳລັບນ້ຳກິນແມ່ນໄດ້ເອົານ້ຳບາດານມາຕົ້ມກິນ. ຢູ່ເຮືອນຂອງເພິ່ນບໍ່ມີເຄື່ອງປັ່ນໄຟ. ໃນເວລາກາງຄືນແມ່ນອາໄສໄຕ້ກະບອງ ເພື່ອໃຫ້ແສງສະຫວ່າງ.

ການທຳມາຫາກິນຂອງ ຄອບຄົວ ທ້າວ ຄຳເປີງ ເຮັດນາເປັນອາຊີບຫຼັກໃນການທຳມາຫາກິນທັງເພື່ອໄວ້ກິນໃນຄອບຄົວ ແລະ ເພື່ອຂາຍ ເອົາເງິນມາຊື້ສິ່ງຂອງທີ່ຈຳເປັນໃນຊີວິດປະຈຳວັນ. ເນື້ອທີ່ນາມີທັງໝົດ 1,2 ha ຢູ່ຄົນລະຟາກເຊກັບເຮືອນ. ເມື່ອເຖິງລະດູການເຮັດນາ ທ້າວ ຄຳເປີງ ແລະ ສະມາຊິກໃນ ຄອບຄົວ ກໍ່ຈະພາກັນຂ້າມນ້ຳເຊໄປເຮັດນາ ແລະ ນອນຢູ່ຖຽງນາເລີຍ ຈົນກວ່າຈະແລ້ວວຽກຈຶ່ງກັບມາເຮືອນໃນບ້ານ, ການໄຖນາແມ່ນໃຊ້ງົວ, ຄວາຍ ແລະ ແຮງງານແມ່ນຄົນໃນຄອບຄົວເອງ ຖ້າປີໃດຝົນຕົກຕາມລະດູການ ກໍ່ໄດ້ເຂົ້າຫຼາຍ, ສາມາດກຸ້ມກິນ ແລະ ເຫຼືອໄວ້ຂາຍ, ແຕ່ສ່ວນໃຫ່ຍມັກພົບກັບໄພແຫ້ງແລ້ງ ຫຼື ນ້ຳຖ້ວມ ຈຶ່ງບໍ່ຄ່ອຍໄດ້ຂາຍພໍປານໃດ. ສຳລັບການຊອກຫາອາຫານໃນແຕ່ລະວັນແມ່ນຜູ້ເປັນພໍ່ ແລະ ລູກຊາຍ ຈະອອກໄປຫາປາຢູ່ເຊ ແລະ ບາງຄັ້ງກໍ່ໄປຫາສັດປ່າ, ສ່ວນແມ່ ແລະ ລູກ ສາວຈະເຂົ້າປ່າໄປຫາເກັບຜັກເຊັ່ນ: ຜັກຫົມ, ຜັກບ້ວງ, ຜັກຂະ,ດອກກະຈຽວ, ໜໍ່ໄມ້ ແລະ ຜັກອື່ນໆທີ່ສາມາດຫາໄດ້ ເພາະການທຳມາຫາກິນຂອງຄອບຄົວເພິ່ນ ແມ່ນຕິດພັນກັບທຳມະຊາດ. ນອກຈາກ ຫາຈາກທຳມະຊາດແລ້ວ ສະມາຊິກພາຍໃນຄອບຄົວຍັງປູກຜັກບາງຊະນິດໄວ້ກິນເອງນຳຄື: ຜັກກາດ, ຜັກບົ້ງ , ໝາກເຜັດ, ໝາກເຂືອ ແລະ ລ້ຽງເປັດ, ໄກ່, ໝູ ເພື່ອເປັນອາຫານເຊັ່ນກັນ.

ເສດຖະກິດລາຍຮັບຂອງຄອບຄົວທ້າວ ຄຳເປີງໄດ້ມາຈາກການຂາຍເຂົ້າ , ການເລື່ອຍໄມ້ ແລະ ການ ໄປເຮັດວຽກຢູ່ສວນຢາງພາລາ. ລາຍຮັບຈາກການຂາຍເຂົ້າໃນແຕ່ລະປີສະເລ່ຍປະມານ 400,000 ກີບ/ປີ, ສຳລັບການເລື່ອຍໄມ້ ແມ່ນມີລາຍຮັບບໍ່ແນ່ນອນ ຂຶ້ນກັບຈຳນວນທີ່ລູກຄ້າສັ່ງ, ຖ້າບໍ່ມີລູກຄ້າສັ່ງກໍ່ບໍ່ມີລາຍຮັບ. ລາຄາໄມ້ເລື່ອຍ 1 ແຜ່ນ ລາຄາ 10,000 ກີບ. ລາຍຮັບ ອີກທາງໜຶ່ງແມ່ນມາ ຈາກການເຮັດວຽກທີ່ສວນຢາງພາລາ ສະເລ່ຍເດືອນລະ 300,000 ກີບ.

- **ເຫດການທີ່ບໍ່ຄາດຄິດທີ່ເກີດຂຶ້ນກັບຄອບຄົວ**
  - **ດ້ານສິ່ງແວດລ້ອມ:**
  - ✓ **ໄພນ້ຳຖ້ວມ**

ໄພນ້ຳຖ້ວມເຄີຍເກີດຂຶ້ນໃນປີ 2000 , 2007 ແລະ ປີ 2009 , ຊຶ່ງແຕ່ລະຄັ້ງມັນໄດ້ທຳລາຍເຂົ້າໃນນາຂອງຄອບຄົວ, ເຮັດໃຫ້ເຂົ້າເສຍຫາຍ, ລົ້ມຕາຍ ບໍ່ສາມາດເກັບກ່ຽວໄດ້. ພືດຜັກສວນຄົວ ແລະ ຕົ້ນໄມ້ໃຫ້ໝາກກໍ່ເສຍຫາຍ, ຜົນລະປູກບໍ່ໄດ້ຮັບຜົນດີ. ເຮືອນຊານເພພັງ , ວັດຖຸສິ່ງຂອງເພພັງແຕກຫັກ. ສັດລ້ຽງຈຳນວນໜຶ່ງກໍ່ສູນຫາຍໄປນຳນ້ຳ, ບາງສ່ວນກໍ່ເກີດພະຍາດຕາຍ. ເຫດການໄພນ້ຳຖ້ວມທີ່ເກີດຂຶ້ນໃນປີ 2009 ທີ່ຜ່ານມານີ້ ເຮັດໃຫ້ດິນໂຍດ ທ້າວ ຄຳເປີງ ຈຶ່ງຕ້ອງຍ້າຍເຮືອນອອກຫ່າງຈາກນ້ຳເຊ ເຮັດໃຫ້ທີ່ດິນຂອງເພິ່ນແຄບເຂົ້າ ແລະ ເຮືອນເປ່ເພ, ທີ່ນາເສຍຫາຍ 3/4 ຂອງເນື້ອທີ່ທັງໝົດ, ຕົ້ນໄມ້ຫັກໂຄ່ນ ແລະ ໄຫຼໄປນຳນ້ຳ, ຕົ້ນໄມ້ກິນໝາກເສຍຫາຍມີ ຕົ້ນມ່ວງ, ຕົ້ນມີ້, ຕົ້ນລຳໄຍ, ຕົ້ນຂາມ, ຕົ້ນງິ້ວ. ພືດຜັກສວນຄົວ ( ຜັກກາດ, ຜັກບົ້ງ, ໝາກເຜັດ, ໝາກເຂືອ ) ຖືກນ້ຳຊັງ ເສຍຫາຍ,

ເຄື່ອງນຸ່ງຫົ່ມ ແລະ ວັດຖຸສິ່ງຂອງຈຳນວນໜຶ່ງໄຫຼໄປນຳນ້ຳ. ສັດລ້ຽງສູນຫາຍ ແລະ ຕາຍມີຄື: ຄວາຍ 25 ໂຕ, ງົວ,12 ໂຕ, ໄກ່ 50 ໂຕ ແລະ ເປັດ 20 ໂຕ. ນອກນີ້ຍັງສົ່ງຜົນກະທົບໂດຍກົງຕໍ່ສະມາຊິກໃນຄອບຄົວ ເພາະວ່າລູກສາວຂອງເພິ່ນຄົນໜຶ່ງເປັນຕາແດງຫູ້ງຈາກຖືກໄພນ້ຳຖ້ວມ.

- ✓ **ໄພແຫ້ງແລ້ງ**

ໄພແຫ້ງແລ້ງເກີດຂຶ້ນເກືອບທຸກປີ ບັນຫາທີ່ຕາມມາກໍ່ຄືການຂາດແຄນນ້ຳດື່ມນ້ຳໃຊ້, ດິນແຫ້ງແລ້ງ ປູກຫຍັງກໍບໍ່ຂຶ້ນ, ຫາປາກໍ່ບໍ່ໄດ້ດີ, ຜັກ, ເຫັດ, ໜໍ່ໄມ້ກໍ່ເກີດໜ້ອຍ, ສັດກໍ່ຫາຍາກ, ຊັບພະຍາກອນທຳມະຊາດບໍ່ອຸດົມສົມບູນ ບໍ່ສາມາດເຮັດນາໄດ້ເພາະຝົນບໍ່ຕົກ ແລະ ບໍ່ມີຊົນລະປະທານ, ຜົນລະປູກກໍ່ຫ່ຽວແຫ້ງ ການທຳມາຫາກິນໃນຊ່ວງນີ້ຈຶ່ງມີຄວາມຝືດເຄືອງຫຼາຍ.

- ✓ **ໄຟໄໝ້**

ໃນບາງປີ ເກີດມີໄຟໄໝ້ປ່າໂດຍບໍ່ຮູ້ສາເຫດ ຊຶ່ງຊາວບ້ານຄາດການວ່າອາດຈະເປັນຍ້ອນອາກາດແຫ້ງແລ້ງ ແລະ ອຸນຫະພູມສູງເກີນໄປ. ຄອບຄົວທ້າວ ຄຳເປັງເຄີຍໄດ້ຮັບຜົນກະທົບຈາກເຫດການໄຟໄໝ້ເຊັ່ນກັນຄື ຖືກໄຟໄໝ້ເລົ້າເຂົ້າຂອງເພິ່ນ ເຮັດໃຫ້ເຂົ້າກິນບໍ່ພຽງພໍ.

- **ດ້ານເສດຖະກິດ:**
- ✓ **ສັດເປັນພະຍາດລະບາດ**

ໃນແຕ່ລະປີມີສັດລ້ຽງ ເປັນພະຍາດຕາຍເປັນຈຳນວນຫຼວງຫຼາຍ, ສ່ວນຫຼາຍຈະເກີດໃນຊ່ວງເດືອນມີນາ, ພຶດສະພາ ແລະ ກໍລະກົດ. ເປັດໄກ່, ໝູ ທີ່ຄອບຄົວເພິ່ນລ້ຽງໄວ້ກໍຕາຍທຸກປີ, ຄອບຄົວເສຍທັງທຶນຮອນໃນການລ້ຽງສັດ ແລະ ຍັງຂາດເຂີນອາຫານອີກດ້ວຍ.

❖ **ວິທີການແກ້ໄຂບັນຫາຕໍ່ກັບເຫດການທີ່ເກີດຂຶ້ນ ( ຍຸດທະສາດໃນການຢູ່ລອດ )**

**ປັດໄຈທີ່ຊ່ວຍໃນການແກ້ໄຂບັນຫາມີຄື :**

- **ດ້ານຄວາມຫຼາກຫຼາຍ**
- ✓ **ດ້ານຊັບພະຍາກອນ :**

ດ້ານຊັບພະຍາກອນທີ່ມີພາຍໃນບ້ານ ທີ່ຄອບຄົວຫາໄດ້ແມ່ນການຫາປາ, ເກັບຜັກ ແລະ ຊອກຫາເຄື່ອງປ່າຂອງດົງຂາຍ ແຕ່ໃນປະຈຸບັນແມ່ນນັ້ນມີປະລິມານລຸດລົງ ແລະ ບໍ່ອຸດົມສົມບູນຄືແຕ່ກ່ອນ ດັ່ງນັ້ນຊັບພະຍາກອນ ຍ້ອນການປ່ຽນແປງສະພາບດິນຟ້າອາກາດ ແລະ ສົ່ງຜົນກະທົບຕໍ່ການທຳມາຫາກິນ. ລາຍຮັບ ຂອງຄອບຄົວ ທີ່ໄດ້ຈາກການຂາຍ ຊັບພະຍາກອນທຳມະຊາດ ແມ່ນປະມານ 40.000-50.000 ກີບ/ເດືອນ.

- ✓ **ດ້ານກິດຈະກຳ :**

ກິດຈະກຳຂອງສະມາຊິກໃນຄອບຄົວແມ່ນການເຮັດນາ, ການເປັນກຳມະກອນຮັບຈ້າງເສຍຫຍ້າ ແລະ ປູກຢາງພາລາ, ການຮັບຈ້າງເລື່ອຍໄມ້, ການປູກພືດ, ການລ້ຽງສັດ, ການຫາປາ ແລະ ເກັບເຄື່ອງປ່າຂອງດົງຂາຍ. ກິດຈະກຳເຫຼົ່ານີ້ໄດ້ສ້າງລາຍຮັບໃຫ້ແກ່ຄອບຄົວ ແລະ ສາມາດຊ່ວຍສ້າງ

ຂີດຄວາມສາມາດໃນການຟື້ນຕົວຂອງຄອບຄົວໄດ້ພໍສົມຄວນ ເຊິ່ງລາຍຮັບລວມຈາກກິດຈະກຳຂອງຄອບຄົວໃນແຕ່ລະເດືອນແມ່ນ 400,000-450,000 ກີບ/ເດືອນ. ແຕ່ລາຍຈ່າຍພາຍໃນຄອບຄົວຫຼາຍຍ້ອນສະມາຊິກໃນຄອບຄົວມີຫຼາຍ.

ເນື່ອງຈາກກິດຈະກຳການເຮັດນາ ແລະ ການປູກພືດຜັກ ຖືກທຳລາຍຈາກໄພທຳມະຊາດ ແລະ ສັດຕູພືດທຳລາຍ ດັ່ງນັ້ນຜົນຜະລິດຈາກການເຮັດນາ ແລະ ປູກພືດ-ລ້ຽງສັດຂອງຄອບຄົວ ຈຶ່ງບໍ່ໄດ້ຮັບຜົນດີ.

ກິດຈະກຳການຊ່ວຍເຫຼືອ ພາຍຫຼັງເກີດໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ ຄອບຄົວກໍ່ໄດ້ຮັບການຊ່ວຍເຫຼືອຈາກພາກສ່ວນລັດ ແລະ ເອກະຊົນ ເປັນຕົ້ນແມ່ນ: ໝໍ້, ຄຸ, ຊາມ, ຜ້າຫົ່ມ, ເຂົ້າ ສານ, ອາຫານແຫ້ງ, ນ້ຳດື່ມ, ນ້ຳປາ, ແປ້ງນົວ ແລະ ອື່ນໆ ແລະ ໄດ້ຮັບການຊ່ວຍເຫຼືອ ໃນດ້ານແນວພັນພືດ, ຢາປົວພະຍາດ ແລະ ວັດຖຸສິ່ງຂອງຮັບໃຊ້ພາຍໃນເຮືອນເຊັ່ນ: ອາຫານ, ເຄື່ອງນຸ່ງຮົ່ມ, ຈົກ, ຊ້ວນຕ່າງໆ.

- **ດ້ານຄວາມຕື່ນຕົວ**

✓ **ທາງເລືອກ :**

ທາງເລືອກໃນການປັບຕົວຕໍ່ກັບເຫດການທີ່ບໍ່ຄາດຄິດ (Shocks) ດັ່ງກ່າວທີ່ເກີດຂຶ້ນກັບຄອບຄົວ ແມ່ນການປູກພືດກະສິກຳ, ການເຮັດວຽກກຳມະກອນ ແລະ ການລ້ຽງສັດ. ເນື່ອງຈາກຄອບຄົວມີແຮງງານຂ້ອນຂ້າງຫຼາຍ ດັ່ງນັ້ນທາງເລືອກຫຼັກທີ່ຊ່ວຍໃນການຟື້ນຕົວ ຂອງຄອບຄົວຕໍ່ກັບບັນຫາທີ່ເກີດຂຶ້ນ ແມ່ນການອອກແຮງງານ ແລະ ລ້ຽງສັດ. ສຳລັບພືດຜັກທີ່ຖືກທຳລາຍກໍ່ລົງທຶນປູກໃໝ່ ແລະ ລ້ຽງສັດໄວ້ເປັນອາຫານ ແລະ ສິນຄ້າ. ສະມາຊິກໃນຄອບຄົວຊອກເຮັດວຽກເສີມຫຼາຍຂຶ້ນທັງຂາຍແຮງງານ, ເລື່ອຍໄມ້ ແລະ ເກັບຜັກ, ໜໍ່ໄມ້, ເຫັດໄປຂາຍເພື່ອໃຫ້ຄອບຄົວມີລາຍໄດ້ເພີ່ມຂຶ້ນ. ຕໍ່ກັບສະພາບການດັ່ງກ່າວ ເພິ່ນໄດ້ຍ້າຍເຮືອນຫ່າງອອກມາ ຈາກຕາຝັ່ງນ້ຳເຊໃຫ້ຫຼາຍຂຶ້ນ ເພື່ອປ້ອງກັນບໍ່ໃຫ້ເຮືອນເພພັງຖ້າຫາກດິນໂຢດອີກ ແລະ ລ້ອມແປງສ່ວນທີ່ເພພັງຄືນໃໝ່.

✓ **ຄວາມສ່ຽງ :**

ໃນອານາຄົດຖ້າຫາກຄອບຄົວພົບກັບເຫດການຮ້າຍແຮງ (Shocks) ທີ່ເກີດຂຶ້ນ ຄວາມສ່ຽງທີ່ຮ້າຍແຮງທີ່ສຸດ ທີ່ສົ່ງຜົນຕໍ່ລະບົບການເປັນຢູ່ຂອງຄອບຄົວ ອາດຈະເກີດຂຶ້ນຈາກການປ່ຽນແປງສະພາບອາກາດທີ່ເພີ່ມທະວີຄວາມຮຸນແຮງຂຶ້ນເລື້ອຍໆ. ຜົນຜະລິດຂອງຄອບຄົວອາດຕົກຕໍ່າ, ລາຍຮັບຂອງຄອບຄົວທີ່ໄດ້ຈາກການເຮັດນາ ແລະ ການປູກ-ຝັງລ້ຽງສັດອາດຫຼຸດລົງ. ດັ່ງນັ້ນໃນອະນາຄົດລະບົບເສດຖະກິດຂອງຄອບຄົວອາດຖືກທຳລາຍຈາກໄພທຳມະຊາດ, ເນື້ອທີ່ດິນປຸກສ້າງອາດຖືກເຊາະເຈື່ອນ ເນື່ອງຈາກທີ່ຕັ້ງຂອງບ້ານໄກ້ກັບນ້ຳເຊຂະໜານ.

- **ດ້ານຄວາມສາມາດໃນບຸກຄົນ**
  - ✓ ***ການສ້າງທາງເລືອກ :***

ດ້ານຄວາມສາມາດຂອງບຸກຄົນໃນຄອບຄົວຕໍ່ການສ້າງທາງເລືອກ ແມ່ນການເປັນກຳມະກອນ, ການເລື້ອຍໄມ້, ການປູກຝັງ-ລ້ຽງສັດ, ການຊອກຫາເຄື່ອງປ່າຂອງດົງຂາຍ, ບາງຄົນກໍ່ໄປເຮັດວຽກຢູ່ໃນເມືອງ ເພື່ອໃຫ້ຄອບຄົວມີລາຍໄດ້ເພີ່ມຂື້ນ. ໄພນ້ຳຖ້ວມ. ເນື່ອງຈາກປັດໃຈພາຍໃນຄອບຄົວຕໍ່ກັບການ ສ້າງທາງເລືອກແມ່ນແຮງງານ.

❖ **ຂີດຄວາມສາມາດໃນການຟື້ນຕົວ**

ຂີດຄວາມສາມາດໃນການປັບຕົວ ຂອງຄອບຄົວແມ່ນຖືວ່າຂ້ອນຂ້າງຕໍ່າ ເນື່ອງຈາກປັດໃຈທີ່ຊ່ວຍສ້າງຂີດຄວາມສາມາດ ໃນການປັບຕົວຂອງຄອບຄົວມີບໍ່ຫຼາຍປານໃດ ເຊິ່ງປັດໄຈໃນການທີ່ຊ່ວຍສ້າງຂີດຄວາມສາມາດໃນການປັບຕົວແມ່ນ ມີທາງດ້ານແຮງງານ ແລະ ທຶນຈຳນວນໜຶ່ງເທົ່ານັ້ນຄອບຄົວບໍ່ມີອາຊີບທີ່ໝັ້ນຄົງ. ເມື່ອພົບກັບເຫດການທີ່ບໍ່ຄາດຄິດ (Shocks) ທີ່ສົ່ງຜົນກະທົບຕໍ່ກັບຄອບຄົວ ຄອບຄົວກໍສາມາດຟື້ນຕົວ ແລະ ປົວແປງແກ້ໄຂໄດ້ບາງສ່ວນເທົ່ານັ້ນ. ເມື່ອເກີດເຫດການທີ່ຮ້າຍແຮງເກີດຂື້ນກັບຄອບຄົວ ບັນຫາດັ່ງກ່າວຈະສົ່ງຜົນໃຫ້ລະບົບພື້ນຖານຄອບຄົວບາງສ່ວນອາດເກີດຄວາມສ່ຽງ ແລະ ສາມາດເວົ້າໄດ້ວ່າລະບົບພື້ນຖານຄອບຄົວສາມາດຄົງຕົວໄດ້ໜ້ອຍເມື່ອສະພາບແວດລ້ອມປ່ຽນແປງໄປ.

❖ **ຄວາມຄິດເຫັນທົ່ວໄປ**

- **ຄວາມຄິດເຫັນຕໍ່ກັບຜົນກະທົບທີ່ເກີດຂື້ນ**

ເຫດການຕ່າງໆທີ່ເກີດຂື້ນ ແມ່ນມີຜົນກະທົບຕໍ່ກັບສະພາບຊີວິດການເປັນຢູ່ຂອງຄອບຄົວຢ່າງໜັກໜ່ວງເປັນຕົ້ນແມ່ນ :

- ເຂົ້າບໍ່ກຸ້ມກິນ
- ຂາດແຄນອາຫານການກິນ
- ຜົນຜະລິດກະສິກຳຕົກຕໍ່າ
- ຂາດທີ່ຢູ່ອາໄສ
- ນ້ຳກິນ ນ້ຳໃຊ້ບໍ່ພຽງພໍ
- ຊັບພະຍາກອນທຳມະຊາດບໍ່ອຸດົມສົມບູນ
- ເກີດພະຍາດ, ເຈັບປ່ວຍ ແລະ ຮ້າຍແຮງໄປກວ່ານັ້ນແມ່ນໄດ້ສົ່ງຜົນກະທົບທາງດ້ານຈິດໃຈ

## ຄວາມກັງວົນ ຂອງຄອບຄົວໃນອະນາຄົດ

ໃນອະນາຄົດຂ້າງໜ້າສິ່ງທີ່ຄອບຄົວກັງວົນທີ່ສຸດແມ່ນ :

- ໄພແຫ້ງແລ້ງ ແລະ ໄພນ້ຳຖ້ວມ
- ສະພາບທຳມະຊາດອາດບໍ່ເອື້ອອຳນວຍໃນການປູກເຂົ້າ, ປູກພືດ ແລະ ລ້ຽງສັດ
- ດ້ານຜົນຜະລິດບໍ່ໄດ້ຮັບຜົນດີ
- ສັດລ້ຽງດປັນພະຍາດ
- ລາຍຮັບບໍ່ພຽງພໍກັບລາຍຈ່າຍ
- ດ້ານປັດໄຈສີ່ (ອາຫານ, ເຄື່ອງນຸ່ງຮົ່ມ, ຢາປົວພະຍາດ, ທີ່ຢູ່ອາໄສ)
- ການສຶກສາຂອງລູກຫຼານ

3). ຄອບຄົວ**ຂາດເຂີນ (ຄອບຄົວທ້າວ ຈຽງ)**



ຮູບທີ 18: ການສຳໃຫ້ສຳພາດຂອງຄອບຄົວຂາດເຂີນ

## ❖ ຂໍ້ມູນພື້ນຖານຂອງຄອບຄົວ

ຄອບຄົວທ້າວ. ຈຽງ ຖືກຈັດເປັນຄອບຄົວທີ່ມີຖານະຂາດເຂີນ ອີງຕາມການຈັດປະເພດຄອບຄົວຂອງບ້ານ, ອາຊີບຫຼັກຂອງຄອບຄົວແມ່ນເຮັດນາ, ເປັນຊົນເຜົ່າເຍີ້ງ, ຖືສາສະໜາຜີ. ທ້າວ ຈຽງ ອາຍຸ 37 ປີ ອາຊີບຊາວນາ.  ສ່ວນເມຍ ນາງ ໄຄ,  ອາຍຸ 32 ປີ, ອາຊີບຊາວນາ.  ເປັນຄອບຄົວດ່ຽວ, ມີ

ລູກທັງໝົດ 3 ຄົນ ຊຶ່ງໃນນີ້ມີ 2 ຄົນ ຄື: ທ້າວຄຳໄລ ອາຍຸ 13 ປີ ແລະ ທ້າວອີງ ອາຍຸ 9 ປີແມ່ນໄດ້ເຂົ້າໂຮງຮຽນ, ຮຽນໜັງສືຮອດຂັ້ນປະຖົມ, ສ່ວນທ່າວ ບຸນໃຈ(ລູກຜູ້ທີ1) ອາຍຸ 14 ປີ ແມ່ນບໍ່ໄດ້ຮຽນ ແລະ ບໍ່ຮູ້ໜັງສືເລີຍ ເນື່ອງຈາກບໍ່ມີຄົນຊ່ວຍພໍ່ແມ່ເຮັດວຽກ ແລະ ບໍ່ມີທຶນສົ່ງລູກຮຽນ ດັ່ງນັ້ນ ທ້າວ ບຸນໃຈ ຈຳເປັນຕ້ອງໄປຮັບຈ້າງ ປູກຢາງພາລານຳພໍ່.

ເຮືອນຂອງ ທ້າວ ຈຽງ ຕັ້ງຢູ່ໃຈກາງບ້ານ ເປັນເຮືອນໄມ້ເຮັ້ຍ, ມຸງດ້ວຍຫຍ້າ. ນ້ຳທີ່ໃຊ້ແມ່ນ ນ້ຳບາດານ ແລະ ນ້ຳເຊ, ສຳລັບນ້ຳກິນແມ່ນກິນນ້ຳບາດານໂດຍບໍ່ໄດ້ພາກັນຕົ້ມໄດໆ. ຢູ່ເຮືອນ ບໍ່ມີ ເຄື່ອງປັ່ນໄຟ ໃນເວລາກາງຄືນແມ່ນອາໄສໄຕ້ກະບອງ ເພື່ອໃຫ້ແສງສະຫວ່າງ.

ການທຳມາຫາກິນຂອງຄອບຄົວທ້າວ ຄຳເປີງ ເຮັດນາເປັນອາຊີບຫຼັກ, ການທຳມາຫາກິນ ສ່ວນຫຼາຍແມ່ນຕິດພັນກັບທຳມະຊາດ ດັ່ງນັ້ນອາຫານ ທີ່ນຳມາປຸງແຕ່ງໃນແຕ່ລະມື້ ແມ່ນມາຈາກ ການຫາປາ, ເກັບຜັກ, ເກັບໜໍ່ໄມ້ ແລະ ເຄື່ອງປ່າຂອງດົງອື່ນໆເພື່ອນຳມາກິນ ແລະ ຂາຍ ເພື່ອສ້າງ ລາຍຮັບເພີ່ມໃຫ້ຄອບຄົວ. ເຊິ່ງຜັກທີ່ປູກແມ່ນພຽງແຕ່ປູກເພື່ອປຸງແຕ່ງອາຫານພາຍໃນຄອບຄົວເທົ່າ ນັ້ນ ຜັກທີ່ປູກແມ່ນມີ ໝາກເຜັດ, ໝາກບວບ ແລະ ອື່...

ເນື້ອທີ່ນາ ແລະ ສວນມີທັງໝົດ 1 ha. ເມື່ອເຖິງລະດູການເຮັດນາ ທ້າວ ຈຽງ ແລະ ສະມາ ຊິກໃນຄອບຄົວໄປເຮັດນາ ແລະ ນອນຢູ່ຖຽງນາເລີຍ ຈົນກວ່າຈະແລ້ວວຽກຈຶ່ງກັບມາເຮືອນໃນບ້ານ ຖ້າປີໃດຝົນຕົກຕາມລະດູການ ກໍ່ໄດ້ເຂົ້າຫຼາຍ ສາມາດກຸ້ມກິນ, ແຕ່ສ່ວນຫຼາຍແລ້ວແມ່ນມັກພົບກັບ ໄພແຫ້ງແລ້ງ ຫຼື ນ້ຳຖ້ວມ ຜົນຜະລິດເຂົ້າຈຶ່ງບໍ່ກຸ້ມກິນ.

ເສດຖະກິດລາຍຮັບຂອງຄອບຄົວທ້າວ ຈຽງ ແມ່ນມີລາຍຮັບຈາກການລ້ຽງສັດ, ເປັນກຳມະ ກອນຮັບຈ້າງເສຍຫຍ້າ, ການເລື່ອຍໄມ້, ການໄປເຮັດວຽກຢູ່ສວນຢາງພາລາ ແລະ ການເກັບເຄື່ອງ ປ່າຂອງດົງ , ເກັບຜັກ ແລະ ຫາປາຂາຍ. ເຊິ່ງລາຍຮັບລວມໃນແຕ່ລະເດືອນຂອງຄອບຄົວແມ່ນ 150,000ກີບ - 200,000 ກີບຕໍ່ເດືອນ. ສ່ວນລາຍຈ່າຍຂອງຄອບຄົວ ແມ່ນໃຊ້ຈາຍໃນການຊື້ເຂົ້າ, ເຄື່ອງນຸ່ງຮົ່ມ, ອຸປະກອນໃນການສຶກສາ ແລະ ຢາປົວພະຍາດ ແລະ ອື່ນໆ. ເຊິ່ງລາຍຈ່າຍຂອງຄອບ ຄົວແມ່ນ 2-500,000 ກີບ/ເດືອນ. ດັ່ງນັ້ນລາຍຮັບຂອງຄອບຄົວຈຶ່ງບໍ່ພຽງພໍກັບລາຍຈາຍໃນແຕ່ລະ ເດືອນເທົ່ານັ້ນ.

❖ **ເຫດການທີ່ບໍ່ຄາດຄິດທີ່ເກີດຂຶ້ນກັບຄອບຄົວ**

- **ດ້ານສິ່ງແວດລ້ອມ:**
- ✓ **ໄພນ້ຳຖວມ(ພະຍຸເກດສະໜາ)**

ພາຍຫຼັງເກີດໄພນ້ຳຖ້ວມດັ່ງກ່າວນັ້ນໄດ້ສົ່ງຜົນກະທົບ ໃຫ້ແກ່ຄອບຄົວຢ່າງໜັກໜ່ວງໃຫ້ແກ່ ຄອບຄົວ ເຊິ່ງເຫດການດັ່ງກ່າວນັ້ນໄດ້ທຳລາຍ ວັດຖຸສິ່ງຂອງ, ສັດລ້ຽງ ແລະ ທີ່ຮ້າຍແຮງໄປກວ່ານັ້ນ ເຫດການນ້ຳຖ້ວມ ດັ່ງກ່າວ ແມ່ນໄດ້ເຮັດໃຫ້ ເຂົ້າເສຍຫາຍ, ລົ້ມຕາຍ ແລະ ບໍ່ສາມາດເກັບກ່ຽວໄດ້, ເຮັດໃຫ້ຄອບຄົວຂາດເຂົ້າກິນ. ພືດຜັກສວນຄົວ ແລະ ຕົ້ນໄມ້ໃຫ້ໝາກກໍ່ເສຍຫາຍ, ຜົນລະປູກບໍ່ໄດ້

ຮັບຜົນດີ. ສັດລ້ຽງສູນຫາຍ ແລະ ຕາຍມີຄື: ຄວາຍ 1 ໂຕ, ງົວ, ໄກ່ 7 ໂຕ. ນອກນີ້ຍັງສິ່ງຜົນກະທົບໂດຍກົງຕໍ່ສະມາຊິກໃນຄອບຄົວເປັນຕາແດງ, ເປັນຕຸ່ມຄັນ, ເປັນພະຍາດຖອກທ້ອງຫຼັງຈາກຖືກໄພນ້ຳຖ້ວມ.

- ✓ **ໄພແຫ້ງແລ້ງ**

ໄພແຫ້ງແລ້ງເກີດຂື້ນເກືອບທຸກປີ ບັນຫາທີ່ຕາມມາກໍ່ຄືການຂາດແຄນນ້ຳດື່ມນ້ຳໃຊ້, ດິນແຫ້ງແລ້ງ, ປູກພືດບໍ່ໄດຮັບຜົນດີ, ຫາປາກໍ່ບໍ່ໄດ້ດີ, ຜັກ, ເຫັດ, ໜໍ່ໄມ້ກໍ່ເກີດໜ້ອຍ, ສັດກໍ່ຫາຍາກ, ຊັບພະຍາກອນທຳມະຊາດບໍ່ອຸດົມສົມບູນ, ບໍ່ສາມາດເຮັດນາໄດ້ຕາມລະດູການເພາະຝົນບໍ່ຕົກ ແລະບໍ່ມີຊົນລະປະທານ ເຮັດໃຫ້ຄອບຄົວຂາດເຂົ້າກິນ.

- **ດ້ານເສດຖະກິດ:**

- ✓ **ເປັນໜີ້ທະນະຄານ**

ຍ້ອນຄວາມຂາດແຄນ, ຂາດອາຫານ ແລະ ເຂົ້າກິນ. ດັ່ງນັ້ນ ທ້າວຈຽງ ແລະ ເມຍຈຶ່ງໄດ້ກູ້ຍືມເງິນຈາກທະນະຄານກອງທຶນບ້ານເພື່ອມາລົງທຶນປູກເຂົ້າ. ແຕ່ຍ້ອນບັນຫາໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງທີ່ເກີດຂື້ນຕໍ່ເນື່ອງກັນ ລວມໄປເຖິງການຂາດຄວາມຮູ້ທາງດ້ານການປູກຝັງ ຈຶ່ງເຮັດໃຫ້ຜົນຜະລິດເຂົ້ານາຂອງຄອບຄົວລົ້ມຕາຍ ເຮັດໃຫ້ ທ້າວ ຈຽງ ຕ້ອງເປັນໜີ້ທະນະຄານເຖິງ 1.500.000 ກີບ.

- ✓ **ການຍົກເລີກສັນຍາຮັບຊື້ສາລີ, ລາຄາສາລີຕົກຕ່ຳ(ບໍ່ຮັບຊື້ຕາມລາຄາທີ່ຕົກລົງໄວ້)**

ຜົນຜະລິດສາລີບໍ່ມີຄົນຮັບຊື້ຕາມທີ່ສັນຍາກັນໄວ້ ແລະ ຖ້າຊື້ລາຄາກໍ່ຕົກຕ່ຳບໍ່ເປັນໄປຕາມລາຄາທີ່ກຳນົດ. ຈາກທີ່ເຄີຍສັນຍາວ່າຈະຊື້ 1 ກິໂລ 900 ກີບ ແຕ່ເວລາທີ່ຜົນຜະລິດອອກມາລາຄາສາລີຊຳພັດຫຼຸດລົງ, ຈຶ່ງເຮັດໃຫ້ສາລີບໍ່ໄດ້ຂາຍ.

- ✓ **ລູກບໍ່ສະບາຍ**

ໃນຕົ້ນປີ 2010 ລູກຊາຍຜູ້ທີສອງ ທ້າວ ຄຳໄລ ບໍ່ສະບາຍ(ຖືກພະຕ້ອງ) ເສຍຄ່າປິ່ນປົວໝົດ 300,000ກີບ ເພື່ອແກ້ພະຕ້ອງ

- ✓ **ຖືກໂກງແຮງງານ(ປູກຢາງພາລາ)**

ທ້າວ ຈຽງ ແລະ ລູກຊາຍ ໄດ້ອອກໄປຂາຍແຮງງານ ປູກຢາງພາລາ ຕາມທີ່ກຳນົດໄວ້ແມ່ນໄດ້ 30.000ກີບ/ມື້ ແຕ່ທ້າວຈຽງ ແລະ ລູກພັດຖືກໂກງຄ່າແຮງງານ ເຊິ່ງລາຍຮັບທີ່ໄດ້ຮັບຕົວຈິງພຽງແຕ່ 10.000-20.000ກີບ/ຕໍ່ມື້ເທົ່ານັ້ນ.

❖ ວິທີການແກ້ໄຂບັນຫາຕໍ່ກັບເຫດການທີ່ເກີດຂຶ້ນ (ຍຸດທະສາດໃນການຢູ່ລອດ)

**ປັດໄຈທີ່ຊ່ວຍໃນການແກ້ໄຂບັນຫາມີຄື :**

**ດ້ານຄວາມຫຼາກຫຼາຍ**

✓ **ດ້ານຊັບພະຍາກອນ :**

ດ້ານຊັບພະຍາກອນທີ່ມີພາຍໃນບ້ານ ທີ່ຄອບຄົວຫາໄດ້ນັ້ນ ມີປະລິມານຫຼຸດລົງ ແລະ ບໍ່ອຸດົມສົມບູນຄືແຕ່ກ່ອນ. ດັ່ງນັ້ນຊັບພະຍາກອນຈຶ່ງມີພຽງແຕ່ຊົມໃຊ້ພາຍໃນຄອບຄົວ ແລະ ຂາຍພຽງເລັກໜ້ອຍເທົ່ານັ້ນ ເນື່ອງຈາກຊັບພະຍາກອນທຳມະຊາດຖືກທຳລາຍຢ່າງໜັກໜ່ວງ ຈາກການປ່ຽນແປງສະພາບດິນຟ້າອາກາດ ແລະ ສິ່ງຜົນເຮັດໃຫ້ເກີດໄພທຳມະຊາດທີ່ຮ້າຍແຮງ ແລະ ໜັກໜ່ວງຂຶ້ນນັບມື້ນັບເພີ່ມທະວີຄວາມຮຸນແຮງ. ດັ່ງນັ້ນລາຍຮັບຂອງຄອບຄົວທີ່ໄດ້ຈາກການຂາຍຊັບພະຍາກອນທຳມະຊາດມີພຽງແຕ່ 30,000-40,000 ກີບ/ເດືອນ.

✓ **ດ້ານກິດຈະກຳ :**

ກິດຈະກຳການສ້າງລາຍຮັບໃຫ້ແກ່ຄອບຄົວ ແມ່ນຖືວ່າສາມາດຊ່ວຍສ້າງຂີດຄວາມສາມາດໃນການຟື້ນຕົວຂອງຄອບຄົວໄດ້ພໍສົມຄວນ ແຕ່ຖ້າທຽບໃສ່ກັບລາຍຈ່າຍໃນການຊົມໃຊ້ໃນຊີວິດປະຈຳວັນແລ້ວ ແມ່ນຖືວ່າຍັງບໍ່ທັນໄດ້ພຽງພໍກັບລາຍຈ່າຍຂອງຄອບຄົວເທື່ອ ຍ້ອນກິດຈະກຳການສ້າງລາຍຮັບຂອງຄອບຄົວ ແມ່ນໄດ້ຈາກການຂາຍແຮງງານ, ລ້ຽງສັດ ແລະ ເກັບເຄື່ອງປ່າຂອງດົງຂາຍເທົ່ານັ້ນ ເຊິ່ງລາຍຮັບລວມຈາກກິດຈະກຳຂອງຄອບຄົວໃນແຕ່ລະເດືອນແມ່ນ 150,000-200,000 ກີບ/ເດືອນ. ເນື່ອງຈາກກິດຈະກຳການເຮັດນາ ແລະ ການປູກພືດຜັກຖືກທຳລາຍຈາກໄພທຳມະຊາດ ແລະ ສັດຕູພືດ ລວມໄປເຖິງການຂາດທຶນ, ເຕັກນິກໃນການປູກ ແລະ ຍັງຂາດສັດລາກແກ່. ດັ່ງນັ້ນຄອບຄົວຂອງ ທ້າວຈຽງ ຈຶ່ງ ຈຳເປັນຕ້ອງໄດ້ຊື້ເຂົ້າ ແລະ ຂາຍແຮງງານເພື່ອແລກເຂົ້າກິນໃນແຕ່ລະມື້.

ກິດຈະກຳການຊ່ວຍເຫຼືອຈາກພາກສ່ວນລັດ ແລະ ເອກະຊົນຕໍ່ກັບເຫດການນ້ຳຖ້ວມ ແລະ ໄພແຫ້ງແລ້ງໃນປີທີ່ຜ່ານມາຄື: ຄອບຄົວແມ່ນໄດ້ຮັບການຊ່ວຍເຫຼືອໃນດ້ານແນວພັນພືດ ແລະ ຢາປົວພະຍາດ ແລະ ວັດຖຸສິ່ງຂອງຮັບໃຊ້ພາຍໃນເຮືອນ ເຊັ່ນ : ອາຫານ, ເຄື່ອງນຸ່ງຮົ່ມ, ຈິກ, ຊ້ວນຕ່າງໆ.

❖ **ດ້ານຄວາມຕື່ນຕົວ**

✓ **ທາງເລືອກ :**

ທາງເລືອກໃນການປັບຕົວຕໍ່ກັບເຫດການທີ່ບໍ່ຄາດຄິດ (Shocks) ດັ່ງກ່າວທີ່ເກີດຂຶ້ນກັບຄອບຄົວແມ່ນມີໜ້ອຍ. ຍ້ອນວິທີການໃນການຢູ່ລອດແມ່ນມີພຽງແຕ່ເປັນແຮງງານຮັບຈ້າງ, ການເກັບເຄື່ອງປ່າຂອງດົງຂາຍ ແລະ ລໍຖ້າການຊ່ວຍເຫຼືອຈາກພາກສ່ວນທີ່ກ່ຽວຂອງເທົ່ານັ້ນ. ຄອບຄົວບໍ່ມີທາງເລືອກອື່ນໆອີກທີ່ຊ່ວຍໃນການປັບຕົວຕໍ່ກັບເຫດການທີ່ເກີດຂຶ້ນເລີຍ.

✓ **ຄວາມສ່ຽງ :**

ໃນອານາຄົດລະບົບການເປັນຢູ່ຂອງຄອບຄົວອາດມີຄວາມສ່ຽງທີ່ຮ້າຍແຮງ ຍ້ອນຄອບຄົວຂາດທຶນ, ຂາດຄວາມຮູ້ທາງດ້ານເຕັກນິກ, ບໍ່ມີອາຊີບທີ່ແນ່ນອນ ແລະ ຂາດແຮງງານພາຍໃນຄອບຄົວ ເນື່ອງຈາກແຮງງານຫຼັກໃນຄອບຄົວມີພຽງແຕ່ 2 ຄົນຄື: ທ້າວ ຈຽງ ແລະ ລູກຊາຍ ສ່ວນເມຍແມ່ນບໍ່ສະບາຍ, ສຸຂະພາບບໍ່ແຂງແຮງ ແລະ ລູກຊາຍອີກ 2 ຄົນແມ່ນຍັງນ້ອຍ ຈຶ່ງບໍ່ສາມາດເຮັດວຽກໜັກໄດ້. ກິດຈະກຳການສ້າງລາຍຮັບຂອງຄອບຄົວ ກໍ່ບໍ່ພຽງພໍ ແລະ ລາຍຮັບຫຼັກຈາກການເປັນກຳມະກອນຮັບຈ້າງຂອງຄອບຄົວພັດຖືກໂກງ. ດັ່ງນັ້ນໃນອະນາຄົດຖ້າຫາກພົບກັບເຫດການ ທີ່ຮ້າຍແຮງ (Shocks) ເກີດຂື້ນລະບົບເສດຖະກິດຂອງຄອບຄົວອາດຖືກທຳລາຍໄດ້ງ່າຍ. ລູກອາດບໍ່ໄດ້ເຂົ້າໂຮງຮຽນຍ້ອນຂາດທຶນ ແລະ ແຮງງານ.

**ດ້ານຄວາມສາມາດໃນບຸກຄົນ**

- ✓ **ການສ້າງທາງເລືອກ :**

ດ້ານຄວາມສາມາດຂອງບຸກຄົນ ໃນຄອບຄົວຕໍ່ການສ້າງທາງເລືອກແມ່ນມີໜ້ອຍ ເນື່ອງຈາກສະມາຊິກໃນຄອບຄົວມີລະບົບການສຶກສາຕໍ່າ, ບໍ່ມີມູນເຊື້ອການຜະລິດຄ້າຂາຍພໍປານໃດ, ບໍ່ມີຄວາມຮູ້ດ້ານເຕັກນິກການປູກຝັງລ້ຽງສັດ, ຂາດທຶນ, ຂາດແຮງງານ, ອີກຢ່າງໜຶ່ງກໍ່ຍ້ອນທີ່ຕັ້ງຂອງບ້ານຢູ່ໄກຈາກເທດສະບານເມືອງ ແລະ ເສັ້ນທາງກໍ່ບໍ່ສະດວກ. ຄວາມສາມາດໃນການຈັກສານຈຶ່ງເຮັດພໍແຕ່ຊົມໃຊ້ໃນຄອບຄົວຈຶ່ງບໍ່ມີການກະຕຸ້ນໃຫ້ຜະລິດສິ່ງອອກຂາຍ. ດັ່ງນັ້ນຄວາມສາມາດຂອງບຸກຄົນໃນຄອບຄົວຕໍ່ການສ້າງທາງເລືອກ ແມ່ນການຂາຍແຮງງານປູກຢາງພາລາ, ການເລື່ອຍໄມ້ ແລະ ການຊອກຫາເຄື່ອງປ່າຂອງດົງຂາຍ.

❖ **ຂີດຄວາມສາມາດໃນການຟື້ນຕົວ**

ຂີດຄວາມສາມາດໃນການປັບຕົວຂອງຄອບຄົວແມ່ນຖືວ່າຕໍ່າຫຼາຍ ເນື່ອງຈາກປັດໄຈທີ່ຊ່ວຍສ້າງຂີດຄວາມສາມາດ ໃນການປັບຕົວຂອງຄອບຄົວມີໜ້ອຍ ເຊິ່ງປັດໄຈໃນການທີ່ຊ່ວຍສ້າງຂີດຄວາມສາມາດໃນການປັບຕົວຂອງຄອບຄົວທາງດ້ານແຮງງານແມ່ນມີໜ້ອຍ ແລະ ຄອບຄົວຍັງຂາດທຶນຮອນ, ບໍ່ມີອາຊີບຫຼັກ, ສະມາຊິກໃນຄອບຄົວຍັງນ້ອຍ ແລະ ບໍ່ແຂງແຮງ. ເມື່ອພົບກັບເຫດການທີ່ບໍ່ຄາດຄິດ (Shocks) ທີ່ສົ່ງຜົນກະທົບຕໍ່ກັບຄອບຄົວ ພວກເຂົາກໍບໍ່ສາມາດຟື້ນຕົວຄືນໄດ້ມີແຕ່ປົວແປງແກ້ໄຂໄດ້ບາງສ່ວນເທົ່ານັ້ນ ແຕ່ກໍ່ຖືວ່າແກ້ໄຂໄດ້ໜ້ອຍ. ເມື່ອເກີດເຫດການທີ່ຮ້າຍແຮງເກີດຂື້ນກັບຄອບຄົວ. ບັນຫາດັ່ງກ່າວແມ່ນສິ່ງຜົນໃຫ້ລະບົບພື້ນຖານຄອບຄົວເກີດຄວາມສ່ຽງ ແລະ ເວົ້າໄດ້ວ່າລະບົບພື້ນຖານຄອບຄົວຄົງຕົວບໍ່ໄດ້ເມື່ອສະພາບແວດລ້ອມມີການປ່ຽນແປງໄປ.

❖ **ຄວາມຄິດເຫັນທົ່ວໄປ**

**ຄວາມຄິດເຫັນຕໍ່ກັບຜົນກະທົບທີ່ເກີດຂຶ້ນ**

ເຫດການໃນຄັ້ງນີ້ ແມ່ນໄດ້ສົ່ງຜົນກະທົບຕໍ່ກັບສະພາບຊີວິດ ການເປັນຢູ່ຂອງຄອບຄົວຢ່າງໜັກໜ່ວງເປັນຕົ້ນແມ່ນ :

- ເກີດໄພອຶດຫິວ
- ຜົນຜະລິດກະສິກຳຕົກຕ່ຳ
- ຂາດທີ່ຢູ່ອາໄສ
- ຂາດນ້ຳກິນ ນ້ຳໃຊ້
- ຂາດຄວາມອຸດົມສົມບູນທາງທຳມະຊາດ
- ເກີດພະຍາດ, ເຈັບປ່ວຍ ແລະ ຮ້າຍແຮງໄປກວ່ານັ້ນແມ່ນໄດ້ສົ່ງຜົນກະທົບທາງດ້ານຈິດໃຈຂອງຊາວກະສິກອນ

**ຄວາມກັງວົນ ຂອງຄອບຄົວໃນອະນາຄົດ**

ໃນອະນາຄົດຂ້າງໜ້າສິ່ງທີ່ຄອບຄົວກັງວົນທີ່ສຸດແມ່ນ :

- ດ້ານການປ່ຽນແປງສະພາບດິນຟ້າອາກາດ(ຝົນຟ້າບໍ່ຕົກຕາມລະດູການ, ອາກາດຮ້ອນ)
- ສະພາບທຳມະຊາດອາດບໍ່ເອື້ອອຳນວຍໃນການປູກເຂົ້າ, ປູກພືດ ແລະ ລ້ຽງສັດ
- ດ້ານຜົນຜະລິດບໍ່ໄດ້ຮັບຜົນດີ
- ນ້ຳບໍ່ແຫ້ງ
- ດ້ານລາຍຮັບ-ລາຍຈ່າຍ
- ດ້ານປັດໄຈສີ່ (ອາຫານ, ເຄື່ອງນຸ່ງຮົ່ມ, ຢາປົວພະຍາດ, ທີ່ຢູ່ອາໄສ)
- ການສຶກສາຂອງລູກຫຼານ

## 4.2. ວິພາກຜົນການສຶກສາ

ບ້ານໃໝ່ນາກອກເປັນອີກບ້ານໜຶ່ງທີ່ຖືກຈັດໃຫ້ເປັນບ້ານທີ່ທຸກຍາກ ຢູ່ເມືອງຊານໄຊ ຊາວບ້ານສ່ວນໃຫ່ຍແມ່ນຍຶດຖືອາຊີບການເຮັດນາ ແລະ ມີການດຳລົງຊີວິດທີ່ຕິດພັນກັບທຳມະຊາດ. ພາຍຫຼັງໄດ້ຮັບຜົນກະທົບທີ່ເປັນອັນຕະລາຍ ຈາກເຫດການທີ່ບໍ່ຄາດຄິດຢ່າງໜັກໜ່ວງ ບໍ່ວ່າຈະເປັນເຫດການທາງດ້ານສິ່ງແວດລ້ອມ, ເສດຖະກິດຕ່າງໆ ເຫຼົ່ານັ້ນ ໄດ້ຜົນກະທົບອັນຮ້າຍແຮງຕໍ່ກັບລະບົບພື້ນຖານຂອງຂອງຄອບຄົວຊາວກະສິກອນ. ດັ່ງນັ້ນເຫດການໃໝ່ໆ ທີ່ປະກົດອອກມາອາດຈະບໍ່ແມ່ນສິ່ງທີ່ຄຸ້ນເຄີຍສຳລັບພວກເຂົາ. ສະນັ້ນພວກເຂົາຈະເຮັດແນວໃດເມື່ອປະເຊີນກັບບັນຫາໄພນາບຄູ່ຕໍ່ການດຳລົງຊີວິດ ແລະ ພວກເຂົາຈະມີຂີດຄວາມສາມາດໃນການຟື້ນຕົວແນວໃດຕໍ່ກັບບັນຫາທີ່ເກີດຂຶ້ນ? ປະກົດການດັ່ງກ່າວໄດ້ສ້າງຄວາມເສຍຫາຍໃຫ້ແກ່ລະບົບເສດຖະກິດ ນັ້ນກໍໝາຍຄວາມວ່າບັນ

ທາການແປປວນຂອງສະພາບດິນຟ້າອາກາດ ແມ່ນໄດ້ສົ່ງຜົນໃຫ້ແກ່ຜົນຜະລິດຖືກທຳລາຍ, ເກີດພາວະຂາດແຄນອາຫານຢ່າງຮຸນແຮງເຮັດໃຫ້ຄວາມອຶດຢາກຫິວໂຫຍເພີ່ມຂຶ້ນ. ສິ່ງຕ່າງໆເຫຼົ່ານີ້ມັນໄດ້ກາຍເປັນບັນຫາໃຫຍ່ ທີ່ຈະຕ້ອງຮ່ວມມືກັນໃນການແກ້ໄຂບັນຫາທີ່ເກີດຂຶ້ນ.

ເຫດການທີ່ບໍ່ຄາດຄິດທີ່ເກີດຂຶ້ນພາຍໃນບ້ານເປັນຕົ້ນແມ່ນ: ບັນຫາດ້ານສິ່ງແວດລ້ອມເຊັ່ນ: ລົມແຮງ, ໄພນ້ຳຖ້ວມ(ພະຍຸເກດສະໜາ), ໄພແຫ້ງແລ້ງ, ນ້ຳເຊຊະໜານເປິເປື້ອນ ແລະ ບົກແຫ້ງ. ດ້ານເສດຖະກິດເຊັ່ນ: ການຍົກເລີກສັນຍາຮັບຊື້ສາລີ, ລາຄາສາລີຕົກຕ່ຳ(ບໍ່ຮັບຊື້ຕາມລາຄາທີ່ຕົກລົງໄວ້), ສັດລ້ຽງເປັນພະຍາດ, ການໂກງຄ່າແຮງງານ(ປູກຢາງພາລາ), ດິນທຳການຜະລິດຂອງຊາວກະສິກອນໄດ້ຮັບຜົນກະທົບຈາກສວນຢາງພາລາ.

ເຫດການທີ່ບໍ່ຄາດຄິດທີ່ເກີດຂຶ້ນກັບຄອບຄົວຊາວກະສິກອນທີ່ສົ່ງຜົນກະທົບທີ່ເກີດຂຶ້ນກັບແຕ່ລະລະດັບຄອບຄົວຂອງຊາວກະສິກອນ ຈາກເຫດການທີ່ບໍ່ຄາດຄິດທີ່ເກີດຂຶ້ນແມ່ນບໍ່ຄືກັນ ເນື່ອງຈາກສະພາບພື້ນຖານຄອບຄົວມີຄວາມແຕກຕ່າງກັນ ດັ່ງນັ້ນເມື່ອຄອບຄົວຊາວກະສິກອນພົບກັບເຫດການທີ່ບໍ່ຄາດຄິດຄອບຄົວທີ່ຮັ່ງມີອາດຈະໄດ້ຮັບຜົນກະທົບໜ້ອຍກວ່າຄອບຄົວທີ່ຂາດເຂີນ ຫຼື ເວົ້າໄດ້ວ່າລະບົບພື້ນຖານຄອບຄົວຂອງຄອບຄົວທີ່ຂາດເຂີນອາດມີຄວາມສ່ຽງ ເມື່ອພົບກັບເຫດການທີ່ຮ້າຍແຮງ ແລະ ບໍ່ຄາດຄິດມາກ່ອນ. ດັ່ງທີ່ ທ່ານອິນທະລາ ອິນທະບົວລີ ໄດ້ກ່າວວ່າ:

“ເຫດການທີ່ຮ້າຍແຮງທີ່ເກີດຈາກການປ່ຽນແປງ ຂອງສະພາບແວດລ້ອມໄດໜຶ່ງນັ້ນກຸ່ມຄົນທີ່ໄດ້ຮັບຜົນກະທົບຫຼາຍທີ່ສຸດແມ່ນເກີດກັບກຸ່ມຄົນທີ່ທຸກຍາກຫຼາຍກວ່າ ກຸ່ມຄົນທີ່ຮັ່ງມີ”

ເນື່ອງຈາກຄອບຄົວທີ່ກຸ້ມກິນມີປັດໄຈໃນການຟື້ນຕົວທີ່ສູງ ເປັນຕົ້ນແມ່ນ ທາງດ້ານອາຊີບ ແລະ ທຶນຮອນໃນການສ້າງຂີດຄວາມສາມາດໃນການຢູ່ລອດ. ສ່ວນຄອບຄົວທີ່ຂາດເຂີນພັດມີຄວາມສ່ຽງຫຼາຍກ່ວາ ແລະ ມີປັດໄຈໃນການຟື້ນຕົວໜ້ອຍກ່ວາຄອບຄົວກຸ້ມກິນ. ດັ່ງທີ່ທິດ ສະດີໄດ້ເວົ້າວ່າ “ເຫດການທີ່ບໍ່ຄາດຄິດມີຜົນເຮັດໃຫ້ລະບົບມີຄວາມສ່ຽງ ແລະ ຖືກທຳລາຍໄດ້ງ່າຍ ເມື່ອສະພາບແວດລ້ອມມີການປ່ຽນແປງ. ແຕ່ໃນທາງກົງກັນຂ້າມເມື່ອປັດໄຈໃນ ການຟື້ນຕົວສູງມີຜົນເຮັດໃຫ້ລະບົບສາມາດຄົງຕົວໄດ້ ເຖິງແມ່ນວ່າສະພາບແວດລ້ອມຈະມີການປ່ຽນແປງກໍ່ຕາມ”.

ຕາຕະລາງທີ4: ຕົລາຄາກ່ຽວກັບເຫດການທີ່ບໍ່ຄາດຄິດທີ່ເກີດຂື້ນ(Shocks) ແລະ ຜົນກະທົບ ໃນແຕ່ລະດັບຄອບຄົວ

| ລະດັບຄອບຄົວ | Shocks | ຜົນກະທົບ |
|---|---|---|
| ຄອບຄົວກຸ້ມກິນ | • ນ້ຳຖ້ວມ<br>• ໄພແຫ້ງແລ້ງ | ☆☆ |
| ຄອບຄົວປານກາງ | • ນ້ຳຖ້ວມ<br>• ໄພແຫ້ງແລ້ງ<br>• ໄຟໄໝ້ | ☆☆☆ |
| ຄອບຄົວຂາດເຂີນ | • ນ້ຳຖ້ວມ<br>• ໄພແຫ້ງແລ້ງ<br>• ເປັນໜີ້ທະນາຄານ<br>• ການຍົກເລີກສັນຍາຮັບຊື້ສາລີ<br>• ຖືກໂກງແຮງງານ | ☆☆☆☆☆ |

ໝາຍເຫດ: (☆=ຜົນກະທົບໜ້ອຍທີ່ສຸດ,☆☆=ຜົນກະທົບໜ້ອຍ,☆☆☆=ຜົນກະທົບປານກາງ ,☆☆☆☆=ຜົນກະທົບຫຼາຍ,☆☆☆☆☆=ຜົນກະທົບຫຼາຍທີ່ສຸດ)

ຄອບຄົວ ຂາດເຂີນຈະໄດ້ຮັບຜົນກະທົບ ຫຼາຍກວ່າຄອບຄົວ ປານກາງ ແລະ ຄອບຄົວທີ່ຮັ່ງມີເພາະວ່າຄອບຄົວຂາດເຂີນແມ່ນຂາດຫຼາຍປັດໃຈເຊັ່ນ: ທຶນ, ແຮງງານ, ອຸປະກອນໃນການຜະລິດ, ເຕັກນິກວິທີການປູກຝັງ ແລະ ການລ້ຽງສັດ, ເມື່ອມີ ໄພທຳມະຊາດເຂົ້າມານາບຄູ່ເຮັດໃຫ້ເຂົາເຈົ້າໄດ້ຮັບຜົນກະທົບຄື: ຂາດເຂົ້າກິນ, ພືດຜັກສວນຄົວ ແລະ ຕົ້ນໄມ້ໃຫ້ໝາກກໍ່ເສຍຫາຍ,ສັດລ້ຽງສູນຫາຍ ແລະ ລົ້ມຕາຍ, ຂາດແຄນນ້ຳດື່ມນ້ຳໃຊ້, ຊັບພະຍາກອນທຳມະຊາດຫາຍາກ ນອກນີ້ຍັງສົ່ງຜົນກະທົບໂດຍກົງຕໍ່ສະມາຊິກໃນຄອບຄົວ ເປັນຕາແດງ, ເປັນຕຸ່ມຄັນ, ເປັນພະຍາດຖອກທ້ອງອັນເປັນເຫດເຮັດໃຫ້ເຂົາເຈົ້າເປັນໜີ້ທະນາຄານກອງທຶນບ້ານເພື່ອ ນຳເອົາເງິນມາລົງທຶນປູກເຂົ້າແຕ່ຍ້ອນໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງຢ່າງຕໍ່ເນື່ອງຈຶ່ງເຮັດໃຫ້ຜົນຜະລິດເຂົ້າບໍ່ໄດ້ຮັບຜົນດີ ດັ່ງນັ້ນສະມາຊິກໃນຄອບຄົວຈຶ່ງຫັນໄປເປັນກຳມະກອນຂາຍແຮງງານປູກຢາງພາລາແຕ່ສຳພັດຖືກໂກງຄ່າແຮງງານ ຄອບຄົວຂາດເຂີນ ມີຂີດຄວາມສາມາດໃນການຟື້ນຕົວໄດ້ໜ້ອຍກ່ວາຄອບຄົວປານກາງ ແລະ ຄອບຄົວທີ່ຮັ່ງມີ ແຕ່ໃນຂະນະດຽວກັນຄອບຄົວປານກາງ ແລະ ຄອບຄົວຮັ່ງມີແມ່ນມີຂີດຄວາມສາມາດໃນ ການຟື້ນຕົວສູງກວ່າຄອບຄົວຂາດເຂີນ ຍ້ອນວ່າຄອບຄົວປານກາງ ແລະ ຄອບຄົວຮັ່ງມີແມ່ນມີຫຼາຍປັດໄຈເຊັ່ນ: ມີທຶນ, ມີແຮງງານຫຼາຍ, ມີອຸປະກອນ, ມີຄວາມຮູ້, ມີເຕັກນິກວິທີການໃນການປູກຝັງລ້ຽງສັດ, ມີຄວາມຫຼາກຫຼາຍຂອງອາຊີບ ( ການເຮັດນາ,ການເຮັດສວນ, ການຄ້າຂາຍ. )

ຕາຕະລາງທີ5 : ການປຽບທຽບລະດັບການປັບຕົວຂອງແຕ່ລະລະບົບຊີວິດການເປັນຢູ່

| ຄອບຄົວ | ລະດັບຊີວິດການເປັນຢູ່ | ຈຸດດີ | ຈຸດອ່ອນ | ຕີລາຄາລະດັບການປັບຕົວ |
|---|---|---|---|---|
| ກຸ້ມກິນ | • ມີການຜະລິດກະສິກຳທີ່ຫຼາກຫຼາຍ(ນາ, ສວນ, ຜັກ, ສັດລ້ຽງ)<br>• ມີເງິນແຮ<br>• ມີແຮງງານຫຼາຍ<br>• ມີຊັບສິນບັດແຮໄວ້<br>• ມີເນື້ອທີ່ດິນຫຼາຍ<br>• ມີອາຊີບຄ້າຂາຍຄົງທີ່<br>• ມີອຸປະກອນການຜະລິດ<br>• ສະມາຊິກໃນຄອບຄົວມີລະດັບການສຶກສາສູງ (ໄດ້ເຂົ້າຮຽນມັດທະຍົມໝົດທຸກຄົນ)<br>• ສະມາຊິກໃນຄອບຄົວບາງຄົນມີອາຊີບກຸ້ມຕົວເອງ | • ມີຄວາມສາມາຄີ<br>• ມີຄວາມດຸໝັ່ນຂະຫຍັນພຽນ<br>• ມີລະດັບຊີວິດການເປັນຢູ່ທີ່ ໝັ້ນຄົງ<br>• ມີທັດສະນະຄິດປະດິດສ້າງ<br>• ມີຄວາມກະຕືລືລົ້ນໃນການສ້າງເສດຖະກິດຄອບຄົວ<br>• ສາມາດສ້າງເສດຖະກິດຄອບຄົວໃຫ້ກຸ້ມກິນ<br>• ຮູ້ເຕັກນິກໃນການຜະລິດກະສິກຳ | • ມີການລົງທຶນໃນການຜະລິດກະສິກຳ ແລະ ຄ້າຂາຍ<br>• ເສຍຄ່າໃຊ້ຈ່າຍໃນການສຶກສາສູງ | ★★★ |
| ປານກາງ | • ມີແຮງງານຫຼາຍ<br>• ມີເງິນແຮ<br>• ມີດິນ<br>• ມີການຜະລິດກະສິກຳ (ນາ, ສວນ, ລ້ຽງສັດ)<br>• ມີທຶນໃນການຜະລິດກະສິກຳ<br>• ມີອຸປະກອນໃນການຜະລິດກະສິກຳ | • ມີຄວາມສາມາຄີ<br>• ມີຄວາມດຸໝັ່ນ<br>• ມີລະດັບຊີວິດການເປັນຢູ່ຂ້ອນຂາງດີ<br>• ມີແຮງງານຫຼາຍ | • ລາຍຈາຍໃນຄອບຄົວມີຫຼາຍຍ້ອນສະມາຊິກໃນຄອບຄົວມີຫຼາຍ<br>• ມີອາຊີບບໍ່ໝັ້ນຄົງ | ★★ |
| ຂາດເຂີນ | • ມີດິນສວນ<br>• ມີແຮງງານ(2ຄົນ)<br>• ມີການລ້ຽງສັດ: ເປັດ, ໄກ່<br>• ມີການປູກພືດສວນຄົວ(ກຸ້ມກິນ) | • ມີເນື້ອທີ່ທຳການຜະລິດກວ້າງຂວາງ<br>• ລາຍໄດ້ທັງໝົດໄດ້ຈາການອອກແຮງງານດ້ວຍເຫື່ອແຮງຂອງພວກເຂົາເອງ(ບໍ່ໄດ້ລົງ | • ຄອບຄົວຂາດຄວາມສາມາມຄີ(ຜົວເມຍມັກຜິດຖຽງກັນ)<br>• ສະມາຊິກໃນຄອບຄົວມັກເຈັບເປັນ (ເປັນພະຍາດ) | ★ |

| | | | | |
|---|---|---|---|---|
| | | ທຶນ) | • ລູກຍັງນ້ອຍຊ່ວຍວຽກຄອບຄົວບໍ່ທັນໄດ້<br>• ຂາດສັດລາກແກ່<br>• ລະດັບຄວາມຮູ້ຄວາມສາມາດຕ່ຳ<br>• ບໍ່ຮູ້ເຕັກນິກໃນການປູກພືດລ້ຽງສັດທີ່ຖືກຕ້ອງ<br>• ບໍ່ມີອາຊີບທີ່ໝັ້ນຄົງ<br>• ລາຍຮັບຂອງຄອບຄົວຍັງຕ່ຳ<br>• ຂາດທຶນ<br>• ຂາດຄວາມກະຕືລືລົ້ນໃນການສ້າງເສດຖະກິດຄອບຄົວ | |

**ໝາຍເຫດ:** ການເກັບກຳຂໍ້ມູນຄັ້ງນີ້ພວກເຮົາໄດ້ຕີລາຄາຂອງລະດັບການປັບຕົວດ້ວຍເຄື່ອງໝາຍດາວເຊິ່ງມີຄ່າຂອງຄວາມໝາຍດັ່ງນີ້:

(★ = ໜ້ອຍທີ່ສຸດ, ★★ = ໜ້ອຍ, ★★★ = ຂ້ອນຂາງດີ, ★★★★ = ດີ, ★★★★★ = ດີຫຼາຍ)

ລະດັບການປັບຕົວຂອງແຕ່ລະລະບົບຊີວິດການເປັນຢູ່ຂອງແຕ່ລະຄອບຄົວແມ່ນບໍ່ຄືກັນເຊິ່ງຈາກຕາຕະລາງຂາງເທິງສາມາດຕີລາຄາລະດັບການປັບຕົວຂອງຄອບຄົວຊາວກະສິກອນໄດ້ດັ່ງນີ້:

ຄອບຄົວກຸ້ມກິນ ມີລະດັບການປັບຕົວສູງກວ່າຄອບຄົວປານກາງ ແລະ ຂາດເຂີນ ຫຼື ສາມາດເວົ້າໄດ້ວ່າ ລະດັບການປັບຕົວຂອງຄອບຄົວຢູ່ໃນລະດັບຂ້ອນຂາງດີ ເນື່ອງຈາກຄອບຄົວມີປັດໃຈທີ່ສົ່ງຜົນຕໍ່ລະດັບຊີວິດການເປັນຢູ່ຫຼາຍກວ່າບໍ່ວ່າຈະເປັນ ການຜະລິດທີ່ມີຄວາມຫຼາກຫຼາຍ, ທຶນ, ສັບສິນບັດ ແລະ ອຸປະກອນການຜະລິດຕ່າງໆ ລວມໄປເຖິງຄວາມໝັ້ນຄົງຂອງອາຊີບ ຫຼື ສາມາດເວົ້າໄດ້ວ່າ ຈຸດດີຂອງຄອບຄົວມີຫຼາຍກວ່າຈຸດອ່ອນ.

ຄອບຄົວປານກາງ ມີລະດັບການປັບຕົວຢູ່ໃນລະດັບໄດໜຶ່ງເທົ່ານັ້ນ ເນື່ອງຈາກປັບໃຈທີ່ສົ່ງຜົນຕໍ່ລະດັບຊີວິດການເປັນຢູ່ມີບໍ່ຫຼາຍປານໄດເຊັ່ນ: ການຜະລິດກະສິກຳ, ທຶນ ແລະ ອຸປະກອນການຜະລິດ ລວມໄປເຖິງຈຸດອ່ອນທາງດ້ານຄວາມໝັ້ນຄົງຂອງອາຊີບຍັງບໍ່ຄົງທີ່. ດັ່ງນັ້ນ ຄອບຄົວຈິ່ງມີລະດັບການປັບຕົວຂ້ອນຂ້າງໜ້ອຍ.

ຄອບຄົວຂາດເຂີນ ມີລະດັບການປັບຕົວທີ່ໜອຍຫຼາຍ ເນື່ອງຈາກປັດໃຈທີ່ສົ່ງຜົນຕໍ່ລະບົບຊີວິດການເປັນຢູ່ມີໜ້ອຍ ແລະ ຈຸດອ່ອນຂອງຄອບຄົວມີພັດຫຼາຍ ເປັນຕົ້ນແມ່ນການຂາດຄວາມສາມາດຄິພາຍໃນຄອບຄົວ, ຂາດຄວາມກະຕືລືລົ້ນໃນການສ້າງເສດຖະກິດຄອບຄົວ, ຂາດທຶນ, ຂາດແຮງງານ, ຂາດຄວາມໝັ້ນຄົງຂອງອາຊີບ ແລະ ອື່ນໆ. ດັ່ງນັ້ນຄອບຄົວຈຶ່ງມີລະດັບການປັບຕົວທີ່ໜ້ອຍຫຼາຍ.

# ພາກທີ V
# ສະຫຼຸບ ແລະ ຂໍ້ສະເໜີແນະ

## 5.1. ສະຫຼຸບ

ຜ່ານການສຶກສາຂໍ້ມູນແມ່ນສາມາດເຫັນໄດ້ວ່າ ທຸກໆປະເທດໃນໂລກ ແມ່ນໄດ້ປະເຊີນກັບບັນຫາຫຼາຍໆດ້ານ ບໍ່ວ່າຈະເປັນບັນຫາສິ່ງແວດລ້ອມ, ເສດຖະກິດ-ສັງຄົມ, ບັນຫາການເມືອງ. ທີ່ສົ່ງຜົນໃຫ້ແກ່ຊີວິດການເປັນຢູ່ຂອງປະຊາຊົນມີການປ່ຽນແປງ.

ປະກົດການ ດັ່ງກ່າວໄດ້ສ້າງຄວາມເສຍຫາຍໃຫ້ແກ່ລະບົບເສດຖະກິດ ນັ້ນກໍໝາຍຄວາມວ່າ ບັນຫາການແປປວນຂອງສະພາບດິນຟ້າອາກາດ ແມ່ນໄດ້ສົ່ງຜົນໃຫ້ແກ່ຜົນຜະລິດຖືກທໍາລາຍເກີດພາວະຂາດແຄນອາຫານຢ່າງຮຸນແຮງ ເຮັດໃຫ້ຄວາມອຶດຢາກຫິວໂຫຍເພີ່ມຂຶ້ນ. ສິ່ງຕ່າງໆເຫຼົ່ານີ້ມັນໄດ້ກາຍເປັນບັນຫາໃຫຍ່ຈະຕ້ອງໄດ້ຮັບການແກ້ໄຂ ຕໍ່ກັບບັນຫາທີ່ເກີດຂຶ້ນ. ເພື່ອຄວາມຢູ່ລອດໃນສັງຄົມປະຊາຊົນເຮົາຈຶ່ງຈໍາເປັນຕ້ອງມີການປັບຕົວເຂົ້າກັບສະພາບຄວາມເປັນຈິງໃນປັດຈຸບັນ. ຜົນກະທົບທີ່ເປັນອັນຕະລາຍຈາກເຫດການທີ່ບໍ່ຄາດຄິດຢ່າງໜັກໜ່ວງ. ເຫດການໃໝ່ໆທີ່ປະກົດອອກມາອາດຈະບໍ່ແມ່ນສິ່ງທີ່ຄຸ້ນເຄີຍສໍາລັບພວກເຂົາ. ດັ່ງນັ້ນ ພວກເຂົາຈະເຮັດແນວໃດເມື່ອປະເຊີນກັບບັນຫາໄພນາບຄູ່ຕໍ່ການດໍາລົງຊີວິດຂອງພວກເຂົາເຈົ້າ ແລະ ພວກເຂົາຈະມີຂີດຄວາມສາມາດໃນການຟື້ນຕົວແນວໃດຕໍ່ກັບບັນຫາທີ່ເກີດຂຶ້ນ.

- **ເຫດການທີ່ບໍ່ຄາດຄິດທີ່ເກີດຂຶ້ນກັບຄອບຄົວຊາວກະສິກອນ**

ຄອບຄົວຂອງຊາວກະສິກອນໄດ້ຮັບຜົນກະທົບອັນໜັກໜ່ວງ ຈາກເຫດການທີ່ບໍ່ຄາດຄິດທີ່ເກີດຂຶ້ນກັບຄອບຄົວຊາວກະສິກອນບໍ່ວ່າຈະເປັນດ້ານສິ່ງແວດລ້ອມເຊັ່ນ: ລົມແຮງ, ໄພນໍ້າຖ້ວມ (ພາຍຸເກດສະໜາ), ໄພແຫ້ງແລ້ງ, ນໍ້າເຊຊະໝານເປີເປື້ອນ ແລະ ບົກແຫ້ງ ຫຼື ດ້ານເສດຖະກິດເຊັ່ນ: ການຍົກເລີກສັນຍາຮັບຊື້ສາລີ, ລາຄາສາລີຕົກຕໍ່າ(ບໍ່ຮັບຊື້ຕາມລາຄາທີ່ຕົກລົງໄວ້), ສັດລ້ຽງເປັນພະຍາດ, ການໂກງຄ່າແຮງງານ(ປູກຢາງພາລາ), ດິນທໍາການຜະລິດຂອງຊາວກະສິກອນໄດ້ຮັບຜົນກະທົບຈາກສວນຢາງພາລາ

ເຫດການດັ່ງກ່າວທີ່ເກີດຂຶ້ນກັບແຕ່ລະລະດັບຄອບຄົວຂອງຊາວກະສິກອນ ຈາກເຫດການທີ່ບໍ່ຄາດຄິດທີ່ເກີດຂຶ້ນແມ່ນບໍ່ຄືກັນ ເນື່ອງຈາກສະພາບພື້ນຖານຄອບຄົວມີຄວາມແຕກຕ່າງກັນ ດັ່ງນັ້ນເມື່ອຄອບຄົວຊາວກະສິກອນພົບກັບເຫດການທີ່ບໍ່ຄາດຄິດ ຄອບຄົວທີ່ຮັ່ງມີອາດຈະໄດ້ຮັບຜົນກະທົບໜ້ອຍກວ່າຄອບຄົວທີ່ຂາດເຂີນ ຫຼື ເວົ້າໄດ້ວ່າລະບົບພື້ນຖານຄອບຄົວຂອງຄອບຄົວທີ່ຂາດເຂີນອາດມີຄວາມສ່ຽງ ເມື່ອພົບກັບເຫດການທີ່ຮ້າຍແຮງ ແລະ ບໍ່ຄາດຄິດມາກ່ອນ.

ຄອບຄົວ ຂາດເຂີນຈະໄດ້ຮັບຜົນກະທົບ ຫຼາຍກວ່າຄອບຄົວ ປານກາງ ແລະ ຄອບຄົວທີ່ຮັ່ງມີເພາະວ່າຄອບຄົວຂາດເຂີນແມ່ນຂາດຫຼາຍປັດໃຈເຊັ່ນ: ທຶນ, ແຮງງານ, ອຸປະກອນໃນການຜະລິດ, ເຕັກນິກວິທີການປູກຝັງ ແລະ ການລ້ຽງສັດ, ເມື່ອມີ ໄພທໍາມະຊາດເຂົ້າມານາບຄູ່ເຮັດໃຫ້ເຂົາ

ເຈົ້າໄດ້ຮັບຜົນກະທົບຄື: ຂາດເຂົ້າກິນ, ພືດຜັກສວນຄົວ ແລະ ຕົ້ນໄມ້ໃຫ້ໝາກກໍ່ເສຍຫາຍ,ສັດລ້ຽງສູນຫາຍ ແລະ ລົ້ມຕາຍ, ຂາດແຫລ່ງນ້ຳດື່ມນ້ຳໃຊ້, ຊັບພະຍາກອນທຳມະຊາດຫາຍາກ ນອກນີ້ຍັງສົ່ງຜົນກະທົບໂດຍກົງຕໍ່ສະມາຊິກໃນຄອບຄົວອັນ ເປັນເຫດເຮັດໃຫ້ເຂົາເຈົ້າເປັນໜີ້ທະນາຄານກອງທຶນບ້ານເພື່ອນຳເອົາເງິນມາລົງທຶນປູກເຂົ້າ ແຕ່ຍ້ອນໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງຢ່າງຕໍ່ເນື່ອງຈຶ່ງເຮັດໃຫ້ຜົນຜະລິດເຂົ້າບໍ່ໄດ້ຮັບຜົນດີ ດັ່ງນັ້ນສະມາຊິກໃນຄອບຄົວຈຶ່ງຫັນໄປເປັນກຳມະກອນຂາຍແຮງງານປູກຢາງພາລາແຕ່ສຳພັດຖືກໂກງຄ່າແຮງງານ ຄອບຄົວຂາດເຂີນມີຂີດຄວາມສາມາດໃນການຟື້ນຕົວໄດ້ໜ້ອຍກ່ວາຄອບຄົວປານກາງ ແລະ ຄອບຄົວທີ່ຮັ່ງມີ ແຕ່ໃນຂະນະດຽວກັນຄອບຄົວປານກາງ ແລະ ຄອບຄົວຮັ່ງມີແມ່ນມີຂີດຄວາມສາມາດໃນການຟື້ນຕົວສູງກວ່າຄອບຄົວຂາດເຂີນຍ້ອນວ່າ ຄອບຄົວປານກາງ ແລະ ຄອບຄົວຮັ່ງມີແມ່ນມີຫຼາຍປັດໄຈເຊັ່ນ: ມີທຶນ, ມີອຸປະກອນ, ມີຄວາມຮູ້, ມີເຕັກນິກວິທີການໃນການປູກຝັງລ້ຽງສັດ, ມີຄວາມຫຼາກຫຼາຍຂອງອາຊີບ

❖ **ຂີດຄວາມສາມາດໃນການຟື້ນຕົວ (ຍຸດທະສາດໃນການຢູ່ລອດ) ຂອງຊາວກະສິກອນ**

ຂີດຄວາມສາມາດໃນການຟື້ນຕົວ ຂອງແຕ່ລະລະດັບຄອບຄົວຊາວກະສິກອນ ຕໍ່ກັບເຫດການທີ່ບໍ່ຄາດຄິດແມ່ນມີຄວາມແຕກຕ່າງກັນ ດັ່ງນັ້ນຄອບຄົວທີ່ກຸ້ມກິນອາດຈະສາມາດຟື້ນຕົວໄດ້ດີກວ່າຄອບຄົນທີ່ຂາດເຂີນ ເນື່ອງຈາກຄອບຄົວທີ່ກຸ້ມກິນມີປັດໃຈໃນການຟື້ນຕົວທີ່ສູງ ເປັນຕົ້ນແມ່ນທາງດ້ານອາຊີບ ແລະ ທຶນຮອນໃນການສ້າງຂີດຄວາມສາມາດໃນການຢູ່ລອດ. ສ່ວນຄອບຄົວທີ່ຂາດເຂີນພັດມີຄວາມສ່ຽງຫຼາຍກ່ວາ ແລະ ມີປັດໃຈໃນການຟື້ນຕົວໜ້ອຍກ່ວາຄອບຄົວກຸ້ມກິນ. ດັ່ງທີ່ທິດສະດີໄດ້ເວົ້າວ່າ : ເຫດການທີ່ບໍ່ຄາດຄິດມີຜົນເຮັດໃຫ້ລະບົບມີຄວາມສ່ຽງ ແລະ ຖືກທຳລາຍໄດ້ງ່າຍເມື່ອສະພາບແວດລ້ອມມີການປ່ຽນແປງ. ແຕ່ໃນທາງກົງກັນຂ້າມເມື່ອປັດໄຈໃນການຟື້ນຕົວສູງ ມີຜົນເຮັດໃຫ້ລະບົບສາມາດຄືງຕົວໄດ້ ເຖິງແມ່ນວ່າສະພາບແວດລ້ອມຈະມີການປ່ຽນແປງ.

ຄອບຄົວກຸ້ມກິນ ມີລະດັບການປັບຕົວສູງກວ່າຄອບຄົວປານກາງ ແລະ ຂາດເຂີນ ຫຼື ສາມາດເວົ້າໄດ້ວ່າ ລະດັບການປັບຕົວຂອງຄອບຄົວຢູ່ໃນລະດັບຂ້ອນຂາງດີ ເນື່ອງຈາກຄອບຄົວມີປັດໃຈທີ່ສົ່ງຜົນຕໍ່ລະດັບຊີວິດການເປັນຢູ່ຫຼາຍກວ່າບໍ່ວ່າຈະເປັນ ການຜະລິດທີ່ມີຄວາມຫຼາກຫຼາຍ, ທຶນ, ສັບສິນບັດ ແລະ ອຸປະກອນການຜະລິດຕ່າງໆ ລວມໄປເຖິງຄວາມໝັ້ນຄົງຂອງອາຊີບ ຫຼື ສາມາດເວົ້າໄດ້ວ່າ ຈຸດດີຂອງຄອບຄົວມີຫຼາຍກວ່າຈຸດອ່ອນ.

ຄອບຄົວປານກາງ ມີລະດັບການປັບຕົວຢູ່ໃນລະດັບໄດໜຶ່ງເທົ່ານັ້ນ ເນື່ອງຈາກປັບໃຈທີ່ສົ່ງຜົນຕໍ່ລະດັບຊີວິດການເປັນຢູ່ມີບໍ່ຫຼາຍປານໄດເຊັ່ນ: ການຜະລິດກະສິກຳ, ທຶນ ແລະ ອຸປະກອນການຜະລິດ ລວມໄປເຖິງຈຸດອ່ອນທາງດ້ານຄວາມໝັ້ນຄົງຂອງອາຊີບຍັງບໍ່ຄົງທີ່. ດັ່ງນັ້ນ ຄອບຄົວຈຶ່ງມີລະດັບການປັບຕົວຂ້ອນຂ້າງໜ້ອຍ.

ຄອບຄົວຂາດເຂີນ ມີລະດັບການປັບຕົວທີ່ໜອຍຫຼາຍ ເນື່ອງຈາກປັດໃຈທີ່ສົ່ງຜົນຕໍ່ລະບົບຊີວິດການເປັນຢູ່ມີໜ້ອຍ ແລະ ຈຸດອ່ອນຂອງຄອບຄົວມີພັດຫຼາຍ ເປັນຕົ້ນແມ່ນການຂາດຄວາມສາມາຄີພາຍໃນຄອບຄົວ, ຂາດຄວາມກະຕືລືລົ້ນໃນການສ້າງເສດຖະກິດຄອບຄົວ, ຂາດທຶນ, ຂາດຄວາມໝັ້ນຄົງຂອງອາຊີບ ແລະ ອື່ນໆ. ດັ່ງນັ້ນຄອບຄົວຈຶ່ງມີລະດັບການປັບຕົວທີ່ໜ້ອຍ ຫຼາຍ.

## 5.2. ຂໍ້ສະເໜີແນະ

ສະເໜີໃຫ້ປະຊາຊົນ ຄວນມີລະບົບການຜະລິດກະສິກຳແບບຫຼາກຫຼາຍ ຄືປູກພືດ ແລະ ລ້ຽງສັດໃຫ້ຫຼາຍຊະນິດ ເພາະຖ້າຫາກຜົນຜະລິດຊະນິດໃດເສຍຫາຍ ຫຼື ບໍ່ໄດ້ຮັບຜົນດີ ກໍ່ຍັງມີຊະນິດອື່ນສຳຮອງໄວ້ ເຮັດໃຫ້ປະຊາຊົນສາມາດກຸ້ມກິນ ແລະ ມີລາຍຮັບໃຫ້ແກ່ຄອບຄົວ

ສະເໜີ ໃຫ້ອົງການຈັດຕັ້ງພາຍໃນບ້ານ ຄວນເປັນເຈົ້າການໃນການປຸກລະດົມປະຊາຊົນເຂົ້າຮ່ວມທຸກກິດຈະກຳຂອງບ້ານ ໂດຍສະເພາະໃຫ້ແມ່ຍິງໄດ້ມີສ່ວນຮ່ວມຫຼາຍຂຶ້ນ. ສ້າງກິດຈະກຳທີ່ເປັນການພັດທະນາຊີວິດການເປັນຢູ່ຂອງເຂົາເຈົ້າ. ສົ່ງເສີມໃຫ້ປະຊາຊົນເຫັນຄວາມສຳຄັນຂອງການສຶກສາໃຫ້ຫຼາຍຂຶ້ນ, ເຜີຍແຜ່ ແລະ ຂະຫຍາຍວຽກງານສາທາລະນະສຸກ ເພື່ອເພີ່ມຂີດຄວາມສາມາດໃນການຟື້ນຕົວໃຫ້ແກ່ປະຊາຊົນ.

ພາກສ່ວນທີ່ກ່ຽວຂ້ອງກັບການກະສິກຳ ຄວນເພີ່ມການສົ່ງເສີມການປູກຝັງ ແລະ ລ້ຽງສັດໃຫ້ຫຼາຍກວ່າເກົ່າພ້ອມທັງໃຫ້ຄວາມຮູ້, ແນະນຳວິທີການ, ເຕັກນິກ, ຕ້ອງມີການກວດກາຕິດຕາມ ແລະ ແກ້ໄຂບັນຫາຢ່າງຖືກຕ້ອງໃຫ້ແກ່ຊາວກະສິກອນ ເພື່ອໃຫ້ໄດ້ຮັບຜົນຜະລິດດີຂຶ້ນ ແລະ ຄວນຫັນເປັນສິນຄ້າເພື່ອສ້າງລາຍໄດ້.

ສະເໜີ ໃຫ້ຂັ້ນເທິງມີການຝຶກອົບຮົມ ດ້ານແນວຄວາມຄິດຄວາມເຫັນ ທາງດ້ານທິດສະດີການເມືອງ, ການກະສິກຳເພື່ອປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ແລະ ສືບຕໍ່ໃຫ້ການຊ່ວຍເຫຼືອ ແກ່ປະຊາຊົນຜູ້ທີ່ຍັງມີຄວາມລຳບາກທີ່ໄດ້ຮັບຜົນກະທົບຈາກເຫດການທີ່ຮ້າຍແຮງຕ່າງໆ.

ການຊ່ວຍເຫຼືອດ້ານວັດຖຸສິ່ງຂອງ ຈາກໂຄງການຕ່າງໆ ສາມາດຊ່ວຍບັນເທົາຄວາມລຳບາກຂອງປະຊາຊົນໄດ້ພຽງຊົ່ວຄາວເທົ່ານັ້ນ. ສະນັ້ນຈຶ່ງຢາກສະເໜີໃຫ້ບັນດາໂຄງການ ຫຼື ພາກສ່ວນຕ່າງໆ ເນັ້ນການຊ່ວຍເຫຼືອທາງການທຳມາຫາກິນ, ການປະກອບອາຊີບ ເພື່ອໃຫ້ປະຊາຊົນສາມາດກຸ້ມກິນ, ມີລາຍໄດ້ເຂົ້າສູ່ຄອບຄົວ, ມີຊີວິດການເປັນຢູ່ທີ່ດີຂຶ້ນ ແລະ ຄວນໃຫ້ການຊ່ວຍເຫຼືອຢ່າງທົ່ວເຖິງການຊ່ວຍເຫຼືອແບບນີ້ຈະເປັນການຊ່ວຍເຫຼືອທີ່ໝັ້ນຄົງ ແລະ ຍາວນານ ແລະ ທີ່ສຳຄັນເມື່ອສິ້ນສຸດການຊ່ວຍເຫຼືອແລ້ວປະຊາຊົນຈະຍັງມີຄວາມສາມາດໃນການທຳມາຫາກິນ, ສາມາດເພິ່ງພາໂຕເອງໄດ້.

ສະເໜີ ເຖິງຜູ້ທີ່ສົນໃຈທີ່ຈະສຶກສາໃນອະນາຄົດ ໃຫ້ສຶກສາລົງເລິກເຖິງທ່າແຮງທີ່ເປັນຂໍ້ກຸນແຈ ໃນການຟື້ນຕົວຂອງຊາວກະສິກອນ ເພື່ອໃຫ້ຊາວກະສິກອນໄດ້ນຳໃຊ້ເຂົ້າໃນການປັບປຸງຊີວິດການເປັນຢູ່ໃຫ້ດີຂຶ້ນ.

# ເອກະສານອ້າງອີງ

ປື້ມຍຸດທະສາດເພື່ອການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ວຽງຈັນ, ສະບັບເດືອນ ມິຖຸນາ 2004.

ກະຊວງກະຊິກຳ ແລະ ປ່າໄມ້. 2009 . ສະຖິຕິກະສິກຳ

ບົດລາຍງານການສຶກສາກ່ຽວກັບການກະກຽມດ້ານກົດໝາຍເພື່ອຕອບໂຕ້ໄພພິບັດ ແລະ ພະຍາດຕິດຕໍ່ສຸກເສີນ. 2009. ສປປລາວ

ກະຊວງກະສິກຳ ແລະ ປ່າໄມ້. 2010. ແຜນດຳເນີນງານການສ້າງແຜນການແບບມີສ່ວນຮ່ວມຂັ້ນກຸ່ມບ້ານ, ເມືອງຊານໄຊ, ແຂວງອັດຕະປື.

ກອງສົ່ງເສີມກະສິກຳ ແລະ ປ່າໄມ້ (ກົມແຜນການ) . 2008-2009. ລາຍງານການຈັດຕັ້ງປະຕິບັດວຽກງານການສົ່ງເສີມກະສິກຳ ແລະ ປ່າໄມ້ ແລະ ແຜນການສົກປີ 2009-2010

ກອງສົ່ງເສີມກະສິກຳ ແລະ ປ່າໄມ້ (LEAP). 2008-2009. ບົດລາຍງານຜົນການວິເຄາະສະຖານະພາບບ້ານໃໝ່ນາກອກ, ເມືອງຊານໄຊ, ແຂວງອັດຕະປື.

ກະຊວງກະສິກຳ ແລະ ປ່າໄມ້ (ພະແນກແຜນການ) . 2009-2020. ແຜນຍຸດທະສາດການພັດທະນາກະສິກຳ ແລະ ປ່າໄມ້ແຂວງອັດຕະປື.

ກະຊວງກະສິກຳ ແລະ ປ່າໄມ້ (ພະແນກແຜນການ). ລາຍງານຄວາມຄືບໜ້າການແກ້ໄຂຜົນເສຍຫາຍ-ຟື້ນຟູການຜະລິດຢູ່ບັນດາແຂວງພາກໃຕ້ທີ່ຖືກກະທົບຈາກພາຍຸເກດສະໜາ ປີ2009.

ກະຊວງກະສິກຳ ແລະ ປ່າໄມ້ (ພະແນກແຜນການ) . ການປ່ຽນແປງສະພາບດິນຟ້າອາກາດ, ຜົນກະທົບ ແລະ ບາງຂໍ້ສະເໜີເພື່ອປັບກັບຕົວກັບການປ່ຽນແປງດິນຟ້າອາກາດ.

ກະຊວງກະສິກຳ ແລະ ປ່າໄມ້ (ພະແນກແຜນການ) . ການວິເຄາະສະພາບດິນຟ້າອາກາດຂອງ GTZ ແນວທາງ ແລະ ປະສົບການຕົວຈິງ.

ກະຊວງກະສິກຳ ແລະ ປ່າໄມ້( ສູນIT).2009. ສັງລວມການປະເມີນຜົນກະທົບ ແລະ ຜົນເສຍຫາຍຈາກໄພພິບັດທາງທຳມະຊາດ.

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ(ກົມສັງຄົມສົງເຄາະ)ຫ້ອງການຄຸ້ມຄອງໄພພິບັດແຫ່ງຊາດ. 2009. ຜົນເສຍຫານຍຈາກລົມພາຍຸເກດສະໜາ.

ຄະນະເສດຖະສາດມະຫາວິທະຍາໄລຈຸລາລົງກອນ. ປຣິຊາປູ່ງມພົງສານ. ມິຖຸນາ 2542. ປື້ມເສດຖະສາດສິ່ງແວດລ້ອມ ແລະ ການຈັດການຊັບພະຍາກອນທຳມະຊາດ

ມະຫາວິທະຍາໄລ ກຸງເທບປະເທດໄທ, ເກມ ຈັນແກ້ວ ,ປື້ມການຈັດການສິ່ງແວດລ້ອມແບບປະສົມປະສານ.

Sarah Wood , ເດືອນທັນວາ 2003, ປື້ມຈຸດປະກາຍ.

# ເອກະສານຊ້ອນທ້າຍ

# ເອກະສານຊ້ອນທ້າຍ 1

## 1) ສະພາບພູມອາກາດຢູ່ໃນ ສ.ປ.ປ ລາວ

1. ການສະແດງ (chart) ປຽບທຽບອຸນຫະພູມອາກາດ ຕ່ຳສຸດສະເລ່ຍ(Mean Minimum Temperature of air) 2007-2009




2. ການສະແດງ (chart) ປຽບທຽບອຸນຫະພູມອາກາດ ສູງສຸດສະເລ່ຍ (Mean Maximum Temperature of air) 2007-2009



3. ການສະແດງ(chart) ປຽບທຽບອຸນຫະພູມອາກາດສະເລ່ຍ(Mean Temperature of air) 2007-2009




4. ການສະແດງ (chart) ປຽບທຽບຄວາມຊຸ່ມຊື່ນອາກາດຕໍ່າສຸງສະເລ່ຍ (Mean Maximum Humidity of air) 2007-2009



5. ການສະແດງ (chart) ປຽບທຽບ ຄວາມຊຸ່ມຊື່ນສູງສຸງສະເລ່ຍ(Mean Temperature of air) 2007-2009




6. ການສະແດງ (chart) ປຽບທຽບຄວາມຊຸມຊື່ນ ອາກາດສະເລຍ (Mean humidity of air)



7. ການສະແດງ (chart) ປຽບທຽບປະລິມານນ້ຳຝົນລວມໃນເດືອນ (Total Rainfall in month ) 2007-2009




8. ການສະແດງ (chart) ປຽບທຽບຈຳນວນຊົ່ວໂມງແສງແດດໃນເດືອນ(Sunshine Duration in month ) 2007-2009



# ເອກະສານຊ້ອນທ້າຍ 2

## <u>ແບບຟອມສຳພາດບ້ານ</u>

ຊື່ບ້ານ............................

I. ຂໍ້ມູນພື້ນຖານຂອງບ້ານ

1. ຈຸດທີ່ຕັ້ງຂອງບ້ານຕິດກັບບ້ານໃດ?
   - ❖ ທິດເໜືອ:
   - ❖ ທິດໃຕ້:
   - ❖ ທິດຕາເວັນຕົກ:
   - ❖ ທິດຕາເວັນອອກ:
2. ປະຫວັດຂອງບ້ານ(ມີຄວາມເປັນມາຄືແນວໃດ?)
3. ທາງດ້ານວັດທະນະທຳ

- ປະຊາຊົນຢູ່ໃນບ້ານສ່ວນຫຼາຍແມ່ນຊົນເຜົ່າໃດ?...........................
- ຖືສາສະໜາຫຍັງ?.....................................
- ປະຊາຊົນຢູ່ໃນບ້ານມີຈຳນວນເທົ່າໃດ? ..............................................
  ຍິງ : ,ຊາຍ: , ຊາວໜຸ່ມ: ,ຜູ້ເຖົ້າ: , ເດັກນ້ອຍ:
- ຈຳນວນຫຼັງຄາເຮືອນທັງໝົດ?
- ຈຳນວນຄອບຄົວທັງໝົດມີເທົ່າໃດ?
- ສະຖານະພາບ:
  - ✓ ກຸ້ມກິນມີຈັກຄອບຄົວ?
  - ✓ ປານກາງມີຈັກຄອບຄົວ?
  - ✓ ຂາດເຂີນມີຈັກຄອບຄົວ?
- ອາຊີບ ຂອງຊາວບ້ານແມ່ນເຮັດຫຍັງ?( ຕົ້ນຕໍ, ສຳຮອງ ) ແລະ ອາຊີບອື່ນໆ

1...........................................................................................................................

2...........................................................................................................................

3. .........................................................................................................................

4...........................................................................................................................

4. ທາງດ້ານຊັບພະຍາກອນແລະການຜະລິດ

- ເນື້ອທີ່ທຳການຜະລິດ :
  - ✓ ເນື້ອທີ່ນາ:
  - ✓ ເນື້ອທີ່ໄຮ່:
  - ✓ ເນື້ອທີ່ສວນ:
  - ✓ ເນື້ອທີ່ລ້ຽງສັດ:
  - ✓ ເນື້ອທີ່ອື່ນ:
- ປະເພດສັດລ້ຽງ
  - ✓ ສັດໃຫຍ່:
  - ✓ ສັດນ້ອຍ:
- ສະພາບໂຮງຮຽນ?
- ສະພາບສຸກສາລາ?(ເວລາເຈັບເປັນສ່ວນຫຼາຍຊາວບ້ານໄປປິ່ນປົວຢູ່ໃສ?)
- ມີສ້ວມຖ່າຍຈັກຄອບຄົວ?

II. ດ້ານເສດຖະກິດ

- ລາຍຮັບສະເລຍ/ຄົນ/ປີ:.................................................................
- ລາຍຮັບມາຈາກ:(ຈັດລຽງຕາມລຳດັບຄວາມໜ້ອຍຫຼາຍຂອງລາຍໄດ້)

| ລ/ດ | ກິດຈະກຳ | ຈຳນວນ | ລາຄາ | ລາຍຮັບລວມ |
|---|---|---|---|---|
| 1 | | | | |
| 2 | | | | |
| 3 | | | | |
| 4 | | | | |
| 5 | | | | |
| 6 | | | | |
| 7 | | | | |

III. ຜົນເສຍຫາຍທີ່ເກີດຈາກໄພພິບັດ

| ລຳດັບ | ເຫດການທີ່ບໍ່ຄາດຄິດ | ຜົນກະທົບ(ບັນຫາ) |
|---|---|---|
| 1: | | ຕໍ່ຄົນ:<br><br>ຕໍ່ຊັບພະຍາກອນ:<br><br>ຕໍ່ຊັບສິນ:<br><br>ຕໍ່ບັນຫາອື່ນໆ: |
| 2. | | ຕໍ່ຄົນ:<br><br>ຕໍ່ຊັບພະຍາກອນ:<br><br>ຕໍ່ຊັບສິນ:<br><br>ຕໍ່ບັນຫາອື່ນໆ: |
| 3. | | ຕໍ່ຄົນ:<br><br>ຕໍ່ຊັບພະຍາກອນ: |

| | | |
|---|---|---|
| | | ຕໍ່ຊັບສິນ:<br><br><br>ຕໍ່ບັນຫາອື່ນໆ: |
| 4. | | ຕໍ່ຄົນ:<br><br><br>ຕໍ່ຊັບພະຍາກອນ:<br><br><br>ຕໍ່ຊັບສິນ:<br><br><br>ຕໍ່ບັນຫາອື່ນໆ: |
| 5. | | ຕໍ່ຄົນ:<br><br><br>ຕໍ່ຊັບພະຍາກອນ:<br><br><br>ຕໍ່ຊັບສິນ:<br><br><br>ຕໍ່ບັນຫາອື່ນໆ: |

## IV. ຄຳຄິດເຫັນອື່ນໆ(ຂໍ້ສະເໜີ)

.............................................................................................................................................
.............................................................................................................................................
.............................................................................................................................................
.............................................................................................................................................
.............................................................................................................................................
.............................................................................................................................................
.............................................................................................................................................
.............................................................................................................................................
.............................................................................................................................................
.............................................................................................................................................

# <u>ຮ່າງແບບຟອມສຳພາດຄອບຄົວຊາວກະສິກອນ</u>

ການສ້າງຂີດຄວາມສາມາດໃນການຟື້ນຕົວຂອງຊາວກະສິກອນ

- <u>ຈຸດປະສົງ</u>
  1. ສຶກສາເຫດການທີ່ບໍ່ຄາດຄິດທີ່ເກີດຂື້ນ
  2. ສຶກສາບັນຫາທີ່ເກີດຂື້ນກັບສະມາຊິກໃນຄອບຄົວ
  3. ສຶກສາຂີດຄວາມສາມາດໃນການຟື້ນຕົວ(ຍຸດທະສາດໃນການຢູ່ຫຼອດ)
- <u>ຄຳຖາມ:</u>

## I. ກ່ຽວກັບຂໍ້ມູນພື້ນຖານ

- ກ່ຽວກັບສະມາຊິກໃນຄອບຄົວ

| ຊື່ | ອາຍຸ | ສະຖານະໃນຄອບຄົວ | ລະດັບການສຶກສາ | ສຸຂະພາບ | ອາຊີບ |
|---|---|---|---|---|---|
| | | | | | |

- ການເຊື່ອຖື

- ເວົ້າພາສາຫຍັງ

## ❖ ກ່ຽວກັບການຊົມໃຊ້ຊັບພະຍາກອນທຳມະຊາດ

1. ການຊົມໃຊ້ນ້ຳ ( ກິນ,ຊົມໃຊ້ທົ່ວໄປ )ໄດ້ມາຈາກໃສ?

..........................................................................................................................

..........................................................................................................................

..........................................................................................................................

..........................................................................................................................

....................

2. ພະລັງງານຕົ້ນຕໍທີ່ນໍາມາໃຊ້ໃນຊີວິດປະຈໍາວັນແມ່ນຫຍັງ( ໃຕ້,ປຸງແຕ່ງ ແລະ ອື່ນໆ )?

.......................................................................................................................................................

.......................................................................................................................................................

.......................................................................................................................................................

.......................................................................................................................................................

....................

3. ພືດພັນທັນຍາຫານແມ່ນໄດ້ມາຈາກໃສ?

.......................................................................................................................................................

.......................................................................................................................................................

.......................................................................................................................................................

.......................................................................................................................................................

....................

4. ອາຫານທີ່ນໍາມາປຸ່ງແຕ່ງແຕ່ລະວັນແມ່ນໄດ້ມາຈາກໃສ?

.......................................................................................................................................................

.......................................................................................................................................................

.......................................................................................................................................................

.......................................................................................................................................................

## II. ເສດຖະກິດຄອບຄົວ

| ກິດຈະກໍາທີ່ສ້າງລາຍຮັບ | ລາຄາ | ຈໍານວນ | ສະເລ່ຍຕໍ່ປີ |
|---|---|---|---|
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |

## III. Shocks(ເຫດການທີ່ບໍ່ຄາດຄິດມາກ່ອນ)

## IV. ບັນຫາ(ຜົນກະທົບ)

..........................................................................................................................
..........................................................................................................................
..........................................................................................................................
..........................................................................................................................
..........................................................................................................................
..........................................................................................................................
..........................................................................................................................
..........................................................................................................................
..........................................................................................................................
..........................................................................................................................
..........................................................................................................................
..........................................................................................................................
..........................................................................................................................
..........................................................................................................................
..........................................................................................................................
..........................................................................................................................
..........................................................................................................................
..........................................................................................................................
..........................................................................................................................
..........................................................................................................................
..........................................................................................................................
..........................................................................................................................
..........................................................................................................................
..........................................................................................................................
..........................................................................................................................
..........................................................................................................................
..........................................................................................................................
..........................................................................................................................
..........................................................................................................................
.........

## V. ຍຸດທະສາດໃນການຢູ່ລອດ

....................................................................................................................
....................................................................................................................
....................................................................................................................
....................................................................................................................
....................................................................................................................
....................................................................................................................
....................................................................................................................
....................................................................................................................
....................................................................................................................
....................................................................................................................
....................................................................................................................
....................................................................................................................
....................................................................................................................
....................................................................................................................
....................................................................................................................
....................................................................................................................
....................................................................................................................
....................................................................................................................
....................................................................................................................
....................................................................................................................
....................................................................................................................
....................................................................................................................
....................................................................................................................
....................................................................................................................
....................................................................................................................
....................................................................................................................
....................................................................................................................
....................................................................................................................
....................................................................................................................
......

## VI. ຄວາມຄິດເຫັນຂອງປະຊາຊົນ

- ທ່ານມີຄວາມກັງວົນກັບເລື່ອງໃດຫຼາຍກ່ວາໝູ່ໃນປັດຈຸບັນ?

..........................................................................................................................................
..........................................................................................................................................
..........................................................................................................................................
..........................................................................................................................................
..........................................................................................................................................
..........................

- ທ່ານຄິດວ່າອະນາຄົດຂອງທ່ານຈະເປັນແນວໃດ?

..........................................................................................................................................
..........................................................................................................................................
..........................................................................................................................................
..........................................................................................................................................
..........................................................................................................................................
.........................

- ຄຳຄິດເຫັນຂອງປະຊາຊົນຕໍ່ກັບຜົນກະທົບທີ່ເກີດຂຶ້ນ

..........................................................................................................................................
..........................................................................................................................................
..........................................................................................................................................
..........................................................................................................................................
..........................................................................................................................................
..........................

## ❖ ຄວາມຄິດເຫັນອື່ນໆ

..........................................................................................................................................
..........................................................................................................................................
..........................................................................................................................................
..........................................................................................................................................
..........................................................................................................................................
..........................................................................................................................................
..........................................................................................................................................
................................................................................................................................

# ເອກະສານຊ້ອນທ້າຍ3




ເນື້ອທີ່ທີ່ໄດ້ຮັບຜົນກະທົບຈາກພະຍຸເກດສະໜາ